ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລາມລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

22-30 ພະຈິກ 2023

ປີທີ 12

ສະບັບທີ 947

ລາຍສັປະດາ

## ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ອັດລົງດ້ວຍຜົນສຳເລັດຢ່າງຈົບງາມ





(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ໃນຕອນບ່າຍຂອງວັນທີ 21 ພະຈິກ 2023 ພາຍຫຼັງດຳເນີນມາເປັນເວລາ 16 ວັນ (ນັບຕັ້ງແຕ່ວັນທີ 31 ຕຸລາ ຫາ 21 ພະຈິກ 2023) ເຊິ່ງບັນດາສະມາຊິກສະພາແຫ່ງຊາດ ແຕ່ລະເຂດເລືອກຕັ້ງ ໄດ້ປະຕິບັດໜ້າທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ສຸມທຸກສະຕິປັນຍາຄົ້ນຄວ້າປະກອບຄຳຄິດຄຳເຫັນ ແລະ ລົງຄະແນນສຽງຮັບຮອງເອົາບັນດາບັນຫາສຳຄັນຕ່າງໆຂອງປະເທດຊາດ ທີ່ໄດ້ນຳມາພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອນີ້.

ການດຳເນີນກອງປະຊຸມໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນໄປດ້ວຍບັນຍາກາດທີ່ເຄັ່ງຮ້ອນ, ເຕັມໄປດ້ວຍຄວາມຮັບຜິດຊອບສູງ, ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ ເຊິ່ງໄດ້ພິຈາລະນາ ແລະ ຮັບຮອງເອກະສານສຳຄັນຈຳນວນໜຶ່ງ ດັ່ງນີ້:

1). ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກາງສະໄໝ (2021-2023) ແລະ ທິດທາງແຜນການທ້າຍສະໄໝ (2023-2025), ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງລັດຖະບານ;

ອ່ານຕໍ່ໜ້າ 4

## ສູນທອນພົດກ່າວປິດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX

ພາຍຫຼັງດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ມາເປັນເວລາ 16 ວັນນັບແຕ່ວັນທີ 31 ຕຸລາ ຫາ ວັນທີ 21 ພະຈິກ 2023 ດ້ວຍຄວາມເຄັ່ງຮ້ອນ, ເຕັມໄປດ້ວຍຄວາມຮັບຜິດຊອບສູງ, ມາຮອດມື້ນີ້ ໄດ້ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້. ກອງປະຊຸມຕີລາຄາສູງທີ່ສະມາຊິກສະພາແຫ່ງຊາດ, ສະມາຊິກລັດຖະບານ, ຜູ້ແທນກອງປະຊຸມຈາກພາກສ່ວນທີ່ກ່ຽວຂ້ອງ ໄດ້ພ້ອມກັນທຸ້ມເທເຫື່ອແຮງ, ສະຕິປັນຍາ ແລະ ເສີມຂະຫຍາຍສິດປະຊາທິປະໄຕ ເຂົ້າໃສ່ການຄົ້ນຄວ້າ, ພິຈາລະນາ ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ແລະ ບັນຫາສຳຄັນພື້ນຖານຂອງປະເທດຊາດ ເຊິ່ງເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ເຂົ້າສູ່ວຽກງານຕົວຈິງຂອງລັດ ເພື່ອນຳພາປະເທດຊາດໃຫ້ສືບຕໍ່ມີສະຖຽນລະພາບທາງການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ພ້ອມກັນສຸມໃສ່ປະຕິບັດ 2 ວາລະແຫ່ງຊາດນັ້ນຄື: ບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ບັນຫາຢາເສບຕິດ, ເຊິ່ງໄດ້ມີຜົນສຳເລັດພົ້ນເດັ່ນຈຳນວນໜຶ່ງ ເຮັດໃຫ້ເສດຖະກິດສືບຕໍ່ຂະຫຍາຍຕົວໃນທາງບວກ, ສາມາດປະຄັບປະຄອງບໍ່ໃຫ້ເສດຖະກິດຕົກໃນຄວາມຫຍຸ້ງຍາກໄປກວ່ານີ້, ຮັບປະກັນການດຳລົງຊີວິດຂອງປະຊາຊົນ ເຖິງຈະປະເຊີນກັບຄວາມຫຍຸ້ງຍາກແຕ່ກໍສາມາດຜ່ານຜ່າໄດ້.

ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາເອກະສານສຳຄັນຈຳນວນໜຶ່ງດັ່ງນີ້:

ອ່ານຕໍ່ໜ້າ 2

## ປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງປະທານສານປະຊາຊົນສູງສຸດ ແຫ່ງ ສ. ກູບາ



(ສພຊ) ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ລູເບັນ ຣີມີ ກີໂອ ເຟີໂລ ປະທານສານປະຊາຊົນສູງສຸດ ແຫ່ງ ສ.ກູບາ ພ້ອມດ້ວຍຄະນະ ໃນວັນທີ 16 ພະຈິກ 2023 ທີ່ຫໍປະຊຸມສະພາແຫ່ງຊາດລາວ ນະຄອນຫຼວງວຽງຈັນ ໃນໂອກາດທີ່ນຳພາຄະນະຜູ້ແທນສານປະຊາຊົນສູງສຸດ ແຫ່ງ ສ. ກູບາ ຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ໃນລະຫວ່າງວັນທີ 15-18 ພະຈິກ 2023.

ໂອກາດນີ້, ສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດລາວ ໄດ້ຕີລາຄາສູງຕໍ່ການຢ້ຽມຢາມຂອງສະຫາຍ ແລະ ຄະນະ ໃນຄັ້ງນີ້ ເປັນການປະກອບສ່ວນອັນສຳຄັນໃນການຮັດແໜ້ນ

ອ່ານຕໍ່ໜ້າ 8

## ຜົນການພິຈາລະນາຮັບຮອງເອົາກົດໝາຍ ຈຳນວນ 7 ສະບັບ



(ສພຊ) ໃນຕອນເຊົ້າຂອງວັນອັງຄານ ວັນທີ 21 ພະຈິກ 2023 ຢູ່ຫໍສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບຜົນການພິຈາລະນາ ແລະ ຮັບຮອງເອົາກົດໝາຍ ຈຳນວນ 7 ສະບັບ ໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ປະຊາຊົນລາວບັນດາເຜົ່າ ທັງຢູ່ພາຍໃນປະເທດ ແລະ ພີ່ນ້ອງຊາວລາວຢູ່ຕ່າງປະເທດ ໄດ້ຮັບຊາບຢ່າງທົ່ວເຖິງກັນ.

ອ່ານຕໍ່ໜ້າ 8

## ຖະແຫຼງຂ່າວຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX



(ສພຊ) ວັນທີ 21 ພະຈິກ 2023 ທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ກຳມະການຄະນະປະຈຳສະພາແຫ່ງຊາດ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນວ່າ: ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນເປັນເວລາ 16 ວັນພາຍໃຕ້ການນຳພາຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ດ້ວຍການສຸມ

ອ່ານຕໍ່ໜ້າ 4

## ເປີດເວັບໄຊ ກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ I



(ສພຊ) ວັນທີ 20 ພະຈິກ 2023 ທີ່ສະພາແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ເປີດເວັບໄຊກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ I ຢ່າງເປັນທາງການ, ມີບັນດາທ່ານຮອງປະທານສະພາແຫ່ງຊາດ, ບັນດາທ່ານຄະນະປະຈຳ ແລະ ສະມາຊິກສະພາແຫ່ງຊາດເຂົ້າຮ່ວມ.

ອ່ານຕໍ່ໜ້າ 3

**ຊົມເຊີຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

## ປະທານສະພາ...

(ຕໍ່ຈາກໜ້າ 1)

1). ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກາງສະໄໝ (2021-2023) ແລະ ທິດທາງແຜນການທ້າຍສະໄໝ (2023-2025), ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງລັດຖະບານ ກອງປະຊຸມສະແດງຄວາມຊົມເຊີຍຕໍ່ຄວາມພະຍາຍາມຂອງລັດຖະບານໃນການບໍລິຫານ, ບັນຊາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ດ້ວຍການວາງມາດຕະການຮອບດ້ານ ເຮັດໃຫ້ເສດຖະກິດສາມາດຂະຫຍາຍຕົວໃນປີ 2023 ລະດັບ 4,02 %, ໄດ້ສົ່ງເສີມຜະລິດກະສິກຳ ເພື່ອຊົມໃຊ້ພາຍໃນ ແລະ ເປັນສິນຄ້າສົ່ງອອກ ແລະ ມີມາດຕະການປົກປ້ອງການຜະລິດພາຍໃນຈຳນວນໜຶ່ງ, ຍ້ອນມີການຫັນເປັນທັນສະໄໝເຮັດໃຫ້ການເກັບລາຍຮັບມີການເພີ່ມຂຶ້ນ, ຫຼຸດຜ່ອນການຮົ່ວໄຫຼ ແລະ ການຄຸ້ມຄອງລາຍຈ່າຍຕາມທິດປະຢັດມັດທະຍັດງົບປະມານ, ໄດ້ດຳເນີນການປະຕິຮູບລັດວິສາຫະກິດ ຈຳນວນໜຶ່ງເພື່ອຮັບປະກັນການເຄື່ອນໄຫວດຳເນີນທຸລະກິດ ມີປະສິດທິພາບ, ປະສິດທິຜົນ; ການຊຳລະສະສາງໜີ້ສິນໂຄງການລົງທຶນຂອງລັດ ໄດ້ຮັບການເອົາໃຈໃສ່ແກ້ໄຂ ໃຫ້ຜ່ອນຄາຍລົງເທື່ອລະກ້າວ, ສືບຕໍ່ປະຕິບັດນະໂຍບາຍຕໍ່ຜູ້ທີ່ຄຸນງາມຄວາມດີຕໍ່ປະເທດຊາດ; ໄດ້ເອົາໃຈໃສ່ປຶກສາ ແລະ ຕົກລົງເປັນເອກະພາບໃນການສ້າງແຜນການລົງທຶນຂອງລັດ ປີ 2024 ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໃນເດືອນມັງກອນ 2024;

ພ້ອມດຽວກັນນັ້ນ, ກອງປະຊຸມສະເໜີໃຫ້ລັດຖະບານເພີ່ມທະວີຄວາມເອົາໃຈໃສ່ໃນການແກ້ໄຂບັນຫາທີ່ສັງຄົມ ເປັນຫ່ວງຫຼາຍ ເຊັ່ນ: ການແກ້ໄຂບັນຫາເງິນເຟີ້ທີ່ສູງ, ອັດຕາແລກປ່ຽນເໜັງຕີງແຮງ, ຄ່າຄອງຊີບສູງ ເຊິ່ງຍັງສືບຕໍ່ສົ່ງຜົນກະທົບໂດຍກົງຕໍ່ຊີວິດການເປັນຢູ່ຂອງພະນັກງານ, ທະຫານ, ຕຳຫຼວດ ກໍຄື ປະຊາຊົນບັນດາເຜົ່າ; ການແກ້ໄຂບັນຫາຂອງຄູ, ແພດອາສາສະໝັກ, ບັນຫາຄຸນນະພາບການສຶກສາ, ສາທາລະນະສຸກ, ບັນຫາສະຫວັດດີການສັງຄົມ, ບັນຫາແຮງງານ, ການເລັ່ງທວງເກັບກູ້ຄືນໜີ້ສິນຂອງລັດ, ການຊຸກຍູ້ສົ່ງເສີມການພັດທະນາການທ່ອງທ່ຽວ ໂດຍສະເພາະການກະກຽມເປີດປີທ່ອງທ່ຽວ, ບັນຫາການຂຸດຄົ້ນແຮ່ທາດແບບທົດລອງ ໃຫ້ຕິດພັນກັບການປຸງແຕ່ງ ຕາມແຜນຍຸດທະສາດການຄຸ້ມຄອງແຮ່ທາດ ທີ່ສະພາແຫ່ງຊາດ ໄດ້ຮັບຮອງ ແລະ ອື່ນໆ.

2). ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ໄລຍະ 3 ປີຜ່ານມາ (2021-2023) ກອງປະຊຸມ ຕີລາຄາເຫັນວ່າ ດ້ວຍຄວາມບຸກບືນ, ສູ້ຊົນຂອງລັດຖະບານເຮັດໃຫ້ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໄດ້ຮັບຜົນສຳເລັດຫຼາຍດ້ານ ແລະ ກໍເລີ່ມມີໜໍ່ແໜງຫັນປ່ຽນທີ່ດີຂຶ້ນຈຳນວນໜຶ່ງ. ແຕ່ພ້ອມດຽວກັນນັ້ນ, ກອງປະຊຸມສະເໜີລັດຖະບານ ເພີ່ມທະວີການຄຸ້ມຄອງການຂຸດຄົ້ນທ່າແຮງບົ່ມຊ້ອນທາງດ້ານເສດຖະກິດຢ່າງສົມເຫດສົມຜົນ, ປະຢັດ, ມີປະສິດທິພາບ, ປະສິດທິຜົນ ແລະ ເຂັ້ມງວດຕາມກົດໝາຍ, ປັບປຸງແກ້ໄຂໂຄງການເຮັດທົດລອງການຂຸດຄົ້ນແຮ່ທາດໂດຍໄວ ແນໃສ່ຮັບປະກັນຜົນປະໂຫຍດລວມຂອງຊາດ; ເອົາໃຈໃສ່ການຫັນເປັນທັນສະໄໝໃຫ້ແຂງແຮງໃນການເກັບລາຍຮັບ, ການສ້າງຖານລາຍຮັບໃໝ່, ເກັບກູ້ຄືນໜີ້ຕ້ອງຮັບຂອງລັດຖະບານ ຈາກພາກທຸລະກິດບັນຫາສຳຄັນກໍແມ່ນການປັບປຸງຂອດການຄຸ້ມຄອງໃຫ້ດີ, ເອົາໃຈໃສ່ແກ້ໄຂສະພາບຄ່າເງິນກີບ, ເພີ່ມຄັງສຳຮອງເງິນຕາຕ່າງປະເທດ ໃຫ້ຫຼາຍຂຶ້ນ, ຄວບຄຸມອັດຕາເງິນເຟີ້ໃຫ້ຢູ່ໃນລະດັບຕົວເລກດຽວ; ເອົາໃຈໃສ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ດີຂຶ້ນ.

ສຳລັບວຽກງານແກ້ໄຂບັນຫາຢາເສບຕິດ ກໍມີຜົນສຳເລັດຫຼາຍດ້ານ ໂດຍໄດ້ສ້າງນິຕິກຳທີ່ກ່ຽວຂ້ອງຫຼາຍສົມຄວນ, ໄດ້ໂຄສະນາເຜີຍແຜ່ມະຕິ, ຄຳສັ່ງຂອງສູນກາງພັກ ແລະ ນິຕິກຳລຸ່ມກົດໝາຍ ໃນຖັນແຖວປະຊາຊົນຢ່າງກວ້າງຂວາງ, ລະດົມໃຫ້ປະຊາຊົນ ເຂົ້າຮ່ວມຢ່າງຕັ້ງໜ້າ ເພື່ອຫຼຸດຜ່ອນປະກົດການຫຍໍ້ທໍ້ຢູ່ໃນສັງຄົມ ຍ້ອນບັນຫາຢາເສບຕິດ.

ກອງປະຊຸມເຫັນດີ ໃຫ້ລັດຖະບານ ສືບຕໍ່ປະຕິບັດຄາດໝາຍສູ້ຊົນຂອງສອງວາລະແຫ່ງຊາດ ຈົນຮອດປີ 2025;

3). ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ (2021-2023),ທິດທາງແຜນການທ້າຍສະໄໝ(2023-2025) ແລະ ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາ ຕາມຜົນການກວດສອບ ປະຈຳປີ 2021; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ (2021-2023), ແຜນການທ້າຍສະໄໝ(2023-2025) ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022.

ກອງປະຊຸມ ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ສອງອົງການດັ່ງກ່າວ ທີ່ໄດ້ສູ້ຊົນຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມບຸກບືນຫ້າວຫັນ ເຮັດໃຫ້ການຈັດຕັ້ງປະຕິບັດແຜນການ ໄດ້ຮັບຜົນສຳເລັດຫຼາຍດ້ານ, ສາມາດກວດເຫັນໄດ້ການກະທຳຜິດກົດໝາຍ, ການລະເມີດວິໄນແຜນການ-ການເງິນ ທີ່ພົວພັນກັບການນຳໃຊ້ງົບປະມານຂອງລັດ, ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ເປັນບັນຫາທີ່ຊ້ຳເຮື້ອມາຫຼາຍປີ, ມີລັກສະນະຫຼາຍຮູບແບບທີ່ສະຫຼັບສັບຊ້ອນ, ເລິກແລບ ແລະ ມູນຄ່າເສຍຫາຍມີທ່າອ່ຽງສູງຂຶ້ນ; ແຕ່ດ້ວຍຄວາມເປັນເຈົ້າການນຳພາການ ແກ້ໄຂຜົນການກວດກາ ແລະ ຜົນການກວດສອບ ຈຶ່ງສາມາດນຳເອົາເງິນຄຳ, ຊັບສິນຂອງລັດ ກັບຄືນມາເປັນລາຍຮັບງົບປະມານແຫ່ງລັດໄດ້ຈຳນວນໜຶ່ງ, ນຳເອົາຜູ້ກະທຳຜິດມາລົງໂທດ ເພື່ອບໍ່ໃຫ້ເປັນແບບຢ່າງທີ່ບໍ່ດີໃຫ້ແກ່ສັງຄົມ. ກອງປະຊຸມສະເໜີໃຫ້ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ຈົ່ງສືບຕໍ່ທັງສອງອົງການນຳເອົາຜົນການກວດກາ ແລະ ກວດສອບມາແກ້ໄຂຢ່າງເຂັ້ມງວດຕາມກົດໝາຍ ທັງນັ້ນ, ກໍເພື່ອສ້າງໃຫ້ມີການຫັນປ່ຽນຢ່າງແຂງແຮງຮັບປະກັນຄວາມໂປ່ງໃສ ແລະ ກວດສອບໃນການຄຸ້ມຄອງລັດດ້ວຍກົດໝາຍ, ທັງມີການປະກອບສ່ວນຢ່າງແຂງແຮງເຂົ້າໃນການຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ, ການສວຍໃຊ້ໜ້າທີ່ຕຳແໜ່ງໃນທຸກຮູບແບບ ເພື່ອສ້າງຄວາມເຊື່ອໝັ້ນ, ຄວາມສັດທາຂອງປະຊາຊົນຕໍ່ການຄຸ້ມຄອງບໍລິຫານລັດຂອງພວກເຮົາ.

4). ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ (2021-2023) ແລະ ການແຜນການທ້າຍສະໄໝ (2023-2025), ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງສານປະຊາຊົນສູງສຸດ ແລະ ຂອງອົງການໄອຍະການປະຊາຊົນສູງສຸດ ເຊິ່ງກອງປະຊຸມໄດ້ຕີລາຄາສູງຕໍ່ສອງອົງການ ໄດ້ມີຄວາມພະຍາຍາມປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ໄດ້ຍົກສູງຄຸນນະພາບໃນການດຳເນີນຄະດີຕາມຂະບວນຍຸຕິທຳ ນັບມື້ມີຄຸນນະພາບສູງຂຶ້ນ ເອົາໃຈໃສ່ການຜັນຂະຫຍາຍມະຕິ, ຄຳສັ່ງຂອງສູນກາງພັກ ເຂົ້າໃນການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍຫຼາຍຂຶ້ນ.

ກອງປະຊຸມໄດ້ສະເໜີໃຫ້ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ມີມາດຕະການປັບປຸງ ແລະ ແກ້ໄຂບັນດາຈຸດອ່ອນ, ຂໍ້ຄົງຄ້າງ ຊ່ອງຫວ່າງຂອງກົດໝາຍ, ເອົາໃຈໃສ່ໃຫ້ມີຄູ່ກໍລະນີ ແລະ ທະນາຍຄວາມໄດ້ເຂົ້າຮ່ວມໃນການໂຕ້ແຍ້ງ, ໂຕ້ຖຽງໃນກອງປະຊຸມສານ ເພື່ອໃຫ້ການຕັດສິນຄະດີ ຖືກຕ້ອງຕາມກົດໝາຍ ແລະ ຖືກກັບຄວາມເປັນຈິງ, ຮັບປະກັນຄວາມຍຸຕິທຳຫຼາຍຂຶ້ນຕື່ມ.

5). ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 3 ສະບັບ ຄື: ກົດໝາຍວ່າດ້ວຍ ການປ້ອງກັນຊາດ, ກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ; ໄດ້ມີຄວາມພະຍາຍາມ ໃນການຈັດຕັ້ງປະເມີນຜົນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ຕາມແຜນການທີ່ວາງໄວ້, ສາມາດຊອກໃຫ້ເຫັນດ້ານຕັ້ງໜ້າ ແລະ ບັນຫາຄົງຄ້າງ ໃນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 3 ສະບັບ. ກອງປະຊຸມມອບໃຫ້ທັງ 2 ກະຊວງ ນຳເອົາຜົນຂອງການປະເມີນໃນເທື່ອນີ້ ເປັນຂໍ້ມູນສຳຄັນໃນການປັບປຸງກົດໝາຍທີ່ກ່ຽວຂ້ອງໃຫ້ມີຄວາມຮັດກຸມຂຶ້ນຕື່ມ, ແກ້ໄຂຈຸດອ່ອນ ແລະ ຊ່ອງຫວ່າງໃນການຈັດຕັ້ງປະຕິບັດຕົວຈິງ, ປັບປຸງ ແລະ ຍົກສູງຄຸນນະພາບໃນການຈັດຕັ້ງ ແລະ ເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງກະຊວງປ້ອງກັນຊາດ ແລະ ກະຊວງປ້ອງກັນຄວາມສະຫງົບ ໃຫ້ມີປະສິດທິຜົນ ແລະ ເຂັ້ມງວດຕາມກົດໝາຍຍິ່ງໆຂຶ້ນ.

6). ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ ກາງສະໄໝ(2021-2023)ແລະແຜນການທ້າຍສະໄໝ(2023-2025) ແລະ ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງສະພາແຫ່ງຊາດ ກອງປະຊຸມຕີລາຄາວ່າ ໃນໄລຍະກາງສະໄໝ (2021-2023), ດ້ວຍຄວາມເອົາໃຈໃສ່ນຳພາ-ຊີ້ນຳຂອງສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ຄວາມເປັນເຈົ້າການຂອງກົງຈັກເສນາທິການຂອງສະພາແຫ່ງຊາດ ກໍຄືບັນດາທ່ານສະມາຊິກສະພາແຫ່ງຊາດ, ຄະນະສະມາ ຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເຮັດໃຫ້ການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ເຂົ້າໃນການເຄື່ອນໄຫວຂອງສະພາແຫ່ງຊາດ ໄດ້ຮັບຜົນສຳເລັດຫຼາຍດ້ານ ເປັນຕົ້ນການສ້າງແລະປັບປຸງກົດໝາຍສາມາດບັນລຸໄດ້54,16% ຂອງແຜນການ 5 ປີ; ໄດ້ດຳເນີນກອງປະຊຸມວິສາມັນຂອງສະພາແຫ່ງຊາດ, ຕົກລົງບັນຫາສຳຄັນຂອງປະເທດຊາດ, ຮັບຮອງເອົາ 2 ວາລະແຫ່ງຊາດ ແລະ ປະຕິບັດພາລະບົດບາດຕິດຕາມກວດກາຕາມຄວາມສາມາດດ້ານງົບປະມານ, ປະເມີນຜົນການປະຕິບັດກົດໝາຍຂົງເຂດຕ່າງໆ ຈຳນວນ 15 ສະບັບ ເຊິ່ງທັງໝົດນັ້ນໄດ້ເຮັດໃຫ້ບົດບາດຂອງສະພາແຫ່ງຊາດ ໄດ້ຮັບການເຊີດຊູນັບມື້ສູງຂຶ້ນ, ໄດ້ຮັບຄວາມເຊື່ອໝັ້ນຈາກອົງການຈັດຕັ້ງລັດຂັ້ນຕ່າງໆ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງ ນັບມື້ນັບກວ້າງຂວາງ.

ກອງປະຊຸມໄດ້ເນັ້ນໜັກຕື່ມຕໍ່ການສ້າງ ແລະ ປັບປຸງກົດໝາຍ ຕ້ອງສອດຄ່ອງກັບຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດສັງຄົມ ໃນແຕ່ລະໄລຍະ, ສືບຕໍ່ການຄົ້ນ ຄວ້າປັບປຸງບັນດາກົດ ໝາຍໃນຂົງເຂດສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ກະກຽມປັບປຸງລັດຖະທຳມະນູນ, ກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ III; ຍົກສູງຄຸນນະພາບໃນການພິຈາລະນາ, ຕົກລົງບັນຫາສຳຄັນພື້ນຖານຂອງຊາດ; ເພີ່ມທະວີການປະຕິບັດພາລະບົດບາດຕິດຕາມກວດກາຢ່າງມີຈຸດສຸມ, ຮ່ວມກັບລັດຖະບານ ເພື່ອແກ້ໄຂບັນຫາຕ່າງໆຢ່າງທັນການ ເພື່ອຍົກສູງບົດບາດຂອງອົງການລັດ, ທັງສ້າງໄດ້ຄວາມເຊື່ອໝັ້ນ ແລະ ສັດທາຂອງປະຊາຊົນຕໍ່ການນຳພາຂອງພັກ ແລະ ການບໍລິຫານ-ບັນຊາ ຂອງລັດຖະບານ.

7). ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 7 ສະບັບ, ໃນນີ້ມີກົດໝາຍ ສ້າງໃໝ່ 1 ສະບັບ ຄື: ກົດໝາຍວ່າດ້ວຍ ການຮັກສາສຸຂະພາບ ຂັ້ນຕົ້ນ ແລະ ກົດໝາຍສະບັບປັບປຸງຈຳນວນ 6 ສະບັບ ຄື: ກົດໝາຍວ່າດ້ວຍ ການປິ່ນປົວ, ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ, ກົດໝາຍວ່າດ້ວຍການບັນຊີ, ກົດໝາຍວ່າດ້ວຍລະບົບການຊຳລະ, ກົດໝາຍວ່າດ້ວຍ ຜູ້ພິພາກສາ ແລະ ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ອັນເປັນການສືບຕໍ່ປັບປຸງ ແລະ ເພີ່ມທະວີເຄື່ອງມືຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ຮັບປະກັນໃຫ້ແກ່ລັດປະຊາທິປະໄຕປະຊາຊົນຂອງພວກເຮົາ ເປັນລັດທີ່ປົກຄອງດ້ວຍກົດໝາຍ, ເປັນລັດ ຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ເທື່ອລະກ້າວ. ສ່ວນກົດໝາຍວ່າດ້ວຍ ເຂດເສດຖະກິດພິເສດ ທີ່ເປັນກົດໝາຍໃໝ່ນັ້ນ ຜ່ານການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ, ກອງປະຊຸມໄດ້ສະເໜີໃຫ້ລັດຖະບານສືບຕໍ່ປັບປຸງບາງເນື້ອໃນຄືນໃໝ່ ເພື່ອໃຫ້ຮັດກຸມ, ຈະແຈ້ງ ແລະ ສະເໜີໃຫ້ນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 7 ໃນເວລາຈະມີການປັບປຸງກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ.

8). ກອງປະຊຸມ ໄດ້ດຳເນີນການປະເມີນຜົນຄວາມໄວ້ວາງໃຈ ຕໍ່ການປະຕິບັດໜ້າທີ່ວຽກງານຂອງບຸກຄະລາກອນ ທີ່ສະພາແຫ່ງຊາດ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ຈຳນວນ 67 ທ່ານ ຕາມກົດໝາຍທີ່ໄດ້ກຳນົດໄວ້ ເຊິ່ງຜົນຂອງການປະເມີນດັ່ງກ່າວ ເຫັນວ່າບັນດາບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ຍັງໄດ້ຮັບຄວາມໄວ້ວາງໃຈໃນລະດັບດີ ເປັນຈຳນວນສ່ວນໃຫຍ່ ແລະ ຫວັງວ່າບັນດາທ່ານຈະສືບຕໍ່ຍົກສູງຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ການເມືອງຂອງຕົນໃຫ້ສົມກັບຄວາມໄວ້ວາງໃຈຂອງຕົວແທນສິດຜົນປະໂຫຍດຂອງປະຊາຊົນ.

ນອກນັ້ນ, ກອງປະຊຸມໄດ້ຮັບຟັງການຊີ້ແຈງ ຕໍ່ຄຳຊັກຖາມໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ແລະ 2 ວາລະແຫ່ງຊາດ, ວຽກງານຂົງເຂດສານປະຊາຊົນ ແລະ ອົງການໄອຍະການປະຊາຊົນທ່ານນາຍົກລັດຖະມົນຕີ, ທ່ານຮອງນາຍົກລັດຖະມົນຕີ-ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ,ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ລັດຖະມົນຕີກະຊວງການເງິນ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ລັດຖະມົນຕີກະຊວງຍຸຕິທຳ, ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ, ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ມີການຊີ້ແຈງຕໍ່ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ ຢ່າງກົງໄປກົງມາ. ນອກຈາກນັ້ນ, ຍັງໄດ້ຮັບຟັງການໃຫ້ຄວາມກະຈ່າງແຈ້ງຈາກທ່ານປະທານອົງການກວດກາແຫ່ງລັດ, ປະທານອົງການກວດສອບແຫ່ງລັດ, ທ່ານປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຄຳເຫັນຂອງສູນກາງແນວລາວສ້າງຊາດ ຕໍ່ການເຄື່ອນໄຫວຂອງສະພາແຫ່ງຊາດ ຕື່ມອີກ.

ປີ 2024 ທີ່ຈະມາເຖິງນີ້ ເປັນປີໜຶ່ງທີ່ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ຈະໄດ້ສືບຕໍ່ເພີ່ມທະວີຄວາມສາມັກຄີ ເປັນປຶກແຜ່ນພາຍໃນຊາດ, ສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍທົດສອບຕ່າງໆ ຈັດຕັ້ງປະຕິບັດບັນດາຕົວເລກຄາດໝາຍທີ່ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງ

ອ່ານຕໍ່ໜ້າ 3

# ນາຍົກລັດຖະມົນຕີ ລາຍງານສະພາບການເຄື່ອນໄຫວວຽກງານ ທີ່ພົ້ນເດັ່ນກາງສະໄໝ 5 ປີ ຄັ້ງທີ IX

ຕໍ່ຈາກສະບັບກ່ອນ...

- ໄດ້ເອົາໃຈໃສ່ປັບປຸງວຽກງານການຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຈຳນວນ 43.660 ເລື່ອງ (ຈາກ ທັງໝົດ 54.575 ເລື່ອງ) ເທົ່າກັບ 80 (ແຜນການ 5 ປີ: ໃຫ້ໄດ້ 85) ແລະ ຈັດຕັ້ງປະຕິບັດສຳເລັດ ແລະ ປິດສຳນວນຄະດີໄດ້ 4.658 ເລື່ອງ ເທົ່າກັບ 8,53 ຂອງຄຳຕັດສິນຄະດີທີ່ມີທັງໝົດ (ແຜນການ 5 ປີ: ໃຫ້ໄດ້ 20).

- ໄດ້ທົດລອງຫັນຫົວໜ່ວຍວິຊາການທີ່ມີລາຍຮັບໄປສູ່ການກຸ້ມຕົນເອງດ້ານງົບປະມານຈຳນວນ 5 ພາກສ່ວນ ແລະ ຮັບຮອງເພີ່ມອີກ 2 ຫົວໜ່ວຍ (ກົມພາສີ ແລະ ສ່ວຍສາອາກອນ) ແລະ ໄດ້ເກັບກຳຂໍ້ມູນຫົວໜ່ວຍວິຊາການຈຳນວນໜຶ່ງທີ່ມີເງື່ອນໄຂ ເພື່ອກະກຽມຫັນໄປສູ່ກຸ້ມຕົນເອງດ້ານງົບປະມານໃຫ້ໄດ້ຕື່ມອີກ; ໄດ້



ເປັນຫົວໜ່ວຍຍຸດທະສາດ, ພ້ອມນັ້ນ ກໍໄດ້ສຳເລັດການລົງຊຸກຍູ້ຢູ່ຂັ້ນເມືອງຂອງແຂວງຊຽງຂວາງ, ຫຼວງນ້ຳທາ, ຫຼວງພະບາງ ແລະ ອຸດົມໄຊ ເພື່ອກະກຽມປະເມີນສ້າງແຂວງເປັນຫົວໜ່ວຍຍຸດທະສາດ.

5. ຂົງເຂດວຽກງານການຕ່າງປະເທດ

- ລັດຖະບານ ໄດ້ເຄື່ອນໄຫວວຽກງານການຕ່າງປະເທດຢ່າງຕັ້ງໜ້າ ຕາມນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ຢ່າງສະເໝີຕົ້ນສະເໝີປາຍ ຕ່າງຝ່າຍຕ່າງ ມີຜົນປະໂຫຍດ, ເປັນເຈົ້າການ ແລະ ຕັ້ງໜ້າເຊື່ອມໂຍງ ກັບພາກພື້ນ ແລະ ສາກົນ. ລັດຖະບານ ສືບຕໍ່ ຍາດໄດ້ຜົນສຳເລັດທີ່ພົ້ນເດັ່ນໃນຫຼາຍດ້ານ ເປັນຕົ້ນແມ່ນ ສາຍພົວພັນ ແລະ ການຮ່ວມມືກັບປະເທດ ເພື່ອນມິດຍຸດທະສາດ ຢ່າງຮອບດ້ານ, ກວ້າງຂວາງ ແລະ ເຂົ້າສູ່ທາງເລິກ ທັງໃນລະດັບລັດຖະບານ ກໍຄືຂະແໜງການ ແລະ ທ້ອງຖິ່ນ ຕະຫຼອດຮອດໃນລະດັບປະຊາຊົນ; ຮັກສາໄດ້ສາຍພົວພັນອັນເປັນປົກກະຕິກັບປະເທດເພື່ອນມິດຕ່າງໆ ໃນພາກພື້ນ ແລະ ໃນໂລກ ໄດ້ຕ້ອນຮັບການມາຢ້ຽມຢາມທາງການຂອງປະມຸກລັດ, ການນຳຂັ້ນສູງປະເທດຕ່າງໆ ແລະ ໄດ້ໄປເຄື່ອນໄຫວຕ່າງປະເທດຫຼາຍສົມຄວນ.

**ພາກທີ II: ທິດທາງແຜນການທ້າຍສະໄໝຮອດ ປີ 2025 ແລະ ທິດທາງແຜນການ ປະຈຳປີ 2024.**

ອ່ານຕໍ່ສະບັບໜ້າ

# ການຈັດຕັ້ງປະຕິບັດແຜນເງິນຕາ ໃນໄລຍະກາງສະໄໝ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ

ຕໍ່ຈາກສະບັບກ່ອນ...

ທຫລ ໄດ້ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ (ທທກ) ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕາມລະບຽບວ່າດ້ວຍຄວາມໝັ້ນຄົງທີ່ໄດ້ວາງອອກ, ໂດຍການລົງກວດກາກັບທີ່, ກວດກາຕາມເອກະສານລາຍງານຢ່າງເຂັ້ມງວດ ໄປຄຽງຄູ່ກັບການຄຸ້ມຄອງຕາມລະບຽບການ ເຊິ່ງໄດ້ເຮັດໃຫ້ວຽກງານຄຸ້ມຄອງຄວາມໝັ້ນຄົງຂອງສະຖາບັນການເງິນ ມີຄວາມຮັບປະກັນ ແລະ ທັນສະພາບການຂຶ້ນກວ່າເກົ່າ. ພ້ອມນີ້, ທຫລ ກໍໄດ້ເອົາໃຈໃສ່ໃນການຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳທີ່ສຳຄັນ ເພື່ອເປັນເຄື່ອງມືໃນການຄຸ້ມຄອງຄວາມໝັ້ນຄົງເປັນຕົ້ນ ແມ່ນໄດ້ສຳເລັດການປັບປຸງກົດໝາຍວ່າດ້ວຍທະນາຄານທຸລະກິດ; ໄດ້ສຸມໃສ່ປະຕິບັດແຜນງານຫັນປ່ຽນການຄຸ້ມຄອງ ທທກ ຕາມມາດຕະຖານບາເຊວ 1 (BASEL I) ໄປສູ່ລະບົບການຄຸ້ມຄອງ ຕາມມາດຕະຖານບາ



ເຊວ 2 (BASEL II). ນອກນີ້, ໄດ້ສຳເລັດການສ້າງຄູ່ມືຄຸ້ມຄອງຄວາມສ່ຽງທີ່ເປັນເຄື່ອງມືໃນການວິເຄາະຖານະການເງິນ ແລະ ສ້າງລະບົບເຕືອນໄພລ່ວງໜ້າ ທຫລ ໄດ້ເຂັ້ມງວດໃນການປະຕິບັດລະບຽບກົດໝາຍ ໂດຍໄດ້ນຳໃຊ້ມາດຕະການຕ່າງໆທີ່ຈຳເປັນ ເພື່ອແນໃສ່ສະກັດກັ້ນ, ແກ້ໄຂ ແລະ ລົງໂທດຕໍ່ທະນາຄານ ທີ່ລະເມີດຕາມລະບຽບການ ໃນນັ້ນ ໄດ້ມີການກ່າວເຕືອນທັງໝົດ 41 ກໍລະນີ ແລະ ປັບ ໃໝ ທັງໝົດ 7 ກໍລະນີ.

ທະນາຄານທີ່ວລະບົບມີຈຳນວນທັງໝົດ 40 ແຫ່ງ (ຫຼຸດລົງ 2 ແຫ່ງ ໂດຍຍຸບເລີກດ້ວຍຄວາມສະໝັກໃຈ) ໃນນີ້ມີທະນາຄານທຸລະກິດລັດ 1 ແຫ່ງ, ທະນາຄານສະເພາະກິດ

ອ່ານຕໍ່ສະບັບໜ້າ

## ເປີດເວັບໄຊ...

(ຕໍ່ຈາກໜ້າ 1)

ໂອກາດນີ້, ທ່ານ ຈັນທະວົງ ແສນອາມາດມົນຕີ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ, ຕາງໜ້າອະນຸກຳມະການກອງເລຂາ ໄດ້ລາຍງານຫຍໍ້ກ່ຽວກັບການກະກຽມ ແລະ ເປີດໜ້າເວັບໄຊ ກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ I ຢ່າງເປັນທາງການວ່າ: ອະນຸກຳມະການກອງເລຂາ ໄດ້ສົມທົບກັບສູນບໍລິຫານດີຈີຕອນ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຄົ້ນຄວ້າ ແລະ ພັດທະນາສ້າງເວັບໄຊຂອງກອງປະຊຸມສຸດຍອດລັດຖະສະພາ (CLV) ຄັ້ງທີ I ດ້ວຍຈຸດປະສົງ ເພື່ອເຜີຍແຜ່ຂໍ້ມູນ-ຂ່າວສານ ຂອງກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ I ອອກສູ່ສາທາລະນະ ເວົ້າລວມ, ເວົ້າສະເພາະ ກໍຄືປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ແລະ ພາກພື້ນ ຮັບຊາບ, ເປັນຂໍ້ມູນພື້ນຖານໃຫ້ແກ່ສະພາແຫ່ງຊາດ ກຳປູເຈຍ-ລາວ-ຫວຽດນາມ ໃນການຕິດຕາມເອກະສານຂອງກອງປະຊຸມຄັ້ງນີ້. ພ້ອມນີ້, ໂຄງຮ່າງໜ້າເວັບໄຊປະກອບມີ 2 ພາສາຄື: ພາສາລາວ ແລະ ພາສາອັງກິດ ໜ້າຫຼັກ (HOME): ສະແດງຮູບພາບ ແລະ ຂ່າວການເຄື່ອນໄຫວກິດຈະກຳຕ່າງໆຂອງກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ I; ໜ້າກ່ຽວກັບ (ABOUT): ແມ່ນໜ້າສະແດງຂໍ້ມູນຄຳຂວັນກອງປະຊຸມ, ສານສະແດງຄວາມຍິນດີຕ້ອນຮັບ, ຖະແຫຼງການຮ່ວມຂອງສາມປະທານສະພາແຫ່ງຊາດ, ປະຫວັດຄວາມເປັນມາຂອງກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ ແລະ ລະບຽບການດຳເນີນກອງປະຊຸມ; ໜ້າເອກະສານ (DOCUMENTS) ແມ່ນໜ້າສະແດງຂໍ້ມູນເນື້ອໃນໜັງສືເຊີນ, ຮ່າງວາລະກອງປະຊຸມ, ຕາຕະລາງການດຳເນີນກອງປະຊຸມ, ຮ່າງຖະແຫຼງການຮ່ວມຂອງກອງປະຊຸມ, ລາຍຊື່ຄະນະຜູ້ແທນເຂົ້າຮ່ວມ, ຂໍ້ມູນທົ່ວໄປ, ຟອມການລົງທະບຽນ ແລະ ເອກະສານທີ່ກ່ຽວຂ້ອງອື່ນໆ; ໜ້າກອງປະຊຸມກຳມາທິການ (COMMITTEE MEETING) ແມ່ນໜ້າສະແດງຂໍ້ມູນເນື້ອໃນການປະຊຸມສາມກຳມາທິການຄື: ກຳມາທິການການຕ່າງປະເທດ, ກຳມາທິການເສດຖະກິດ-ສັງຄົມ ແລະ ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ໜ້າກິດຈະກຳປີ່ນອ້ອມ (SIDE EVENT): ແມ່ນໜ້າສະແດງຂໍ້ມູນກິດຈະກຳການເຄື່ອນໄຫວກິລາແຂ່ງລົດຖີບ; ໜ້າຂ່າວສານ (MEDIA): ແມ່ນໜ້າສະແດງຂໍ້ມູນເນື້ອໃນຂ່າວຕ່າງໆ, ຮູບພາບ, ພາບເຄື່ອນໄຫວຂອງກອງປະຊຸມ; ໜ້າຕິດຕໍ່ພົວພັນ (CONTACT) ແມ່ນໜ້າສະແດງຂໍ້ມູນການຕິດຕໍ່ປະສານງານກອງເລຂາກອງປະຊຸມ ແລະ ພະນັກງານເຕັກນິກ.

## ປະທານສະພາ...

(ຕໍ່ຈາກໜ້າ 1)

ຄົມ ແຫ່ງລັດ ຄັ້ງທີ IX ໃຫ້ບັນລຸຜົນຕາມທີ່ກຳນົດໄວ້, ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ບັນຫາຢາເສບຕິດໃຫ້ມີຜົນຫຼາຍຂຶ້ນ, ເດັດດ່ຽວປົກປັກຮັກສາປະເທດຊາດໄວ້ໃຫ້ໝັ້ນຄົງ, ສ້າງເສດຖະກິດ-ສັງຄົມ ກ້າວເດີນໄປຕາມການປ່ຽນແປງໃໝ່ຢ່າງຮອບດ້ານ ມີຫຼັກການທີ່ພັກເຮົາວາງໄວ້. ຂ້າພະເຈົ້າຫວັງວ່າທຸກພາກສ່ວນໃນລະບົບການເມືອງປະຊາທິປະໄຕ ປະຊາຊົນ ຈະເປັນກຳລັງແຮງໃຫ້ແກ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາ, ຫວັງວ່າປະຊາຊົນບັນດາເຜົ່າ ແລະ ທຸກພາກສ່ວນໃນສັງຄົມຈະພ້ອມກັນສູ້ຊົນຜ່ານຜ່າອຸປະສັກຕ່າງໆ ເສີມຂະຫຍາຍນ້ຳໃຈເປັນເຈົ້າປະເທດຊາດສະຕິບຸກບືນສ້າງກຳລັງແຮງໃຫ້ແກ່ປະເທດຊາດ ແລະ ຕົນເອງ, ເສີມຂະຫຍາຍຫົວຄິດປະດິດສ້າງໃຫ້ສູງກວ່າເວລາໃດໝົດ ເພື່ອນຳເອົາຄວາມຮັ່ງມີຜາສຸກມາສູ່ປະຊາຊົນ, ສ້າງປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີ ເປັນປຶກແຜ່ນ, ປະຊາທິປໄຕ, ຍຸຕິທຳ ແລະ ສີວິໄລ.

ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີຄັ້ງທີ IX ເຂົ້າສູ່ຊີວິດຕົວຈິງ, ແມ່ນໝາກຜົນແຫ່ງສະຕິປັນຍາ, ການສະແດງອອກສິດປະຊາທິປະໄຕ ກໍຄືການຍົກສູງຄວາມຮັບຜິດຊອບທາງການເມືອງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ການຕັດສິນໃຈສູງຂອງລັດຖະບານ, ອົງການທີ່ກ່ຽວຂ້ອງ ໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ປະເທດເຮົາພວມປະເຊີນຢູ່ປັດຈຸບັນ, ສູ້ຊົນສືບຕໍ່ ພັດທະນາປະເທດຊາດ ໃຫ້ມີຄວາມເຂັ້ມແຂງຂຶ້ນເລື້ອຍໆ.

ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຜົນສຳເລັດຢ່າງຈົບງາມ ກໍຍ້ອນມີການຊີ້ນຳຢ່າງໃກ້ຊິດຈາກກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ, ຍ້ອນຄວາມຮັບຜິດຊອບສູງຂອງລັດຖະບານ, ບັນດາອົງການທີ່ກ່ຽວຂ້ອງ ແລະ ຂະແໜງການກ່ຽວຂ້ອງ ທີ່ໃຫ້ການຮ່ວມມື ແລະ ສະໜັບສະໜູນຢ່າງຕັ້ງໜ້າ.

ຕາງໜ້າຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ທີ່ໄດ້ໃຫ້ການຊີ້ນຳຢ່າງໃກ້ຊິດຕໍ່ສະພາແຫ່ງຊາດໂດຍຕະຫຼອດມາ, ຂໍສະແດງຄວາມຂອບໃຈ ເປັນຢ່າງສູງມາຍັງບັນດາຜູ້ນຳພັກ-ລັດ, ອາດີດການນຳຂັ້ນສູງຂອງພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ຂອບໃຈມາຍັງປະຊາຊົນລາວບັນດາເຜົ່າທັງທີ່ອາໄສຢູ່ພາຍໃນ ແລະ ຊາວລາວທີ່ຢູ່ຕ່າງປະເທດ ທີ່ໄດ້ຕິດຕາມ ກອງປະຊຸມຂອງພວກເຮົາໃນຄັ້ງນີ້ ຢ່າງຈິດຈໍ່ ແລະ ສົ່ງຄຳຄິດເຫັນຜ່ານໂທລະສັບສາຍດ່ວນ ມາຍັງກອງປະຊຸມຢ່າງຫຼວງຫຼາຍ.

ຂໍສະແດງຄວາມຂອບໃຈ ຕໍ່ທຸກພາກສ່ວນກ່ຽວຂ້ອງ ທີ່ໄດ້ປະກອບສ່ວນເຂົ້າໃນຜົນສຳເລັດຂອງກອງປະຊຸມຄັ້ງນີ້ເປັນຕົ້ນ ກອງເລຂາກອງປະຊຸມ ທີ່ຮັບໃຊ້ກອງປະຊຸມສະໄໝສາມັນເທື່ອນີ້ຢ່າງຫ້າວຫັນ ແລະ ມີຄວາມຮັບຜິດຊອບສູງ; ຂໍສະແດງຄວາມຂອບໃຈຕໍ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ເອົາໃຈໃສ່ວຽກງານການປ້ອງກັນຄວາມສະຫງົບ, ຄວາມປອດໄພໃຫ້ກອງປະຊຸມຄັ້ງນີ້ ແລະ ຂອບໃຈຕໍ່ບັນດາສື່ມວນຊົນທີ່ໄດ້ ນຳສະເໜີຂ່າວສານ ໂດຍການຖ່າຍທອດສົດຂ່າວຜ່ານວິທະຍຸ, ໂທລະພາບ ແລະ ສື່ເອເລັກໂຕນິກ ເຊິ່ງໄດ້ອຳນວຍຄວາມສະ ດວກໃຫ້ສັງຄົມໄດ້ຕິດຕາມ ການດຳເນີນກອງປະຊຸມໄດ້ທັນສະພາບການ ແທດຕົວຈິງ ແລະ ຕໍ່ເນື່ອງທັນເວລາ.

ເພື່ອສືບຕໍ່ຈັດຕັ້ງຜັນຂະຫຍາຍ ຜົນສຳເລັດຂອງກອງປະຊຸມຄັ້ງນີ້, ກອງປະຊຸມຮຽກຮ້ອງມາຍັງຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ, ລັດຖະບານ, ອົງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ຜັນຂະຫຍາຍບັນດາມະຕິກອງປະຊຸມຄັ້ງນີ້ ໄດ້ຮັບຮອງເອົາເຂົ້າໃນການປະຕິບັດວຽກງານໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ສຸດທ້າຍນີ້, ຂ້າພະເຈົ້າ ຕາງໜ້າໃຫ້ກອງປະຊຸມສະພາແຫ່ງຊາດ ຂໍອວຍພອນໄຊອັນປະເສີດ ມາຍັງທ່ານເລຂາທິການໃຫຍ່, ປະທານປະເທດ ຈົ່ງມີພາລະນາໄມສົມບູນ, ສືບຕໍ່ຊີ້ນຳ-ນຳພາປະເທດຊາດ ກ້າວຂຶ້ນຢ່າງໜັກແໜ້ນ.

ຂໍອວຍພອນໃຫ້ບັນດາຜູ້ນຳຂັ້ນສູງພັກ-ລັດ, ອະດີດຜູ້ນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ ຕະຫຼອດຮອດພະນັກງານ, ທະຫານຕຳຫຼວດ ແລະ ປະຊາຊົນລາວ ບັນດາເຜົ່າໃນທົ່ວປະເທດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນມີກຽດຂອງຕົນ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍປະກາດປິດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງເປັນທາງການນັບແຕ່ເວລານີ້ເປັນຕົ້ນໄປ.

## ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດປ້ອງກັນຊາດ

ຕໍ່ຈາກສະບັບກ່ອນ...

2.3. ການຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ

ໃນກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ(ສະບັບປັບປຸງ ປີ 2018) ນີ້ ບໍ່ມີມາດຕາໃດທີ່ກຳນົດໃຫ້ຕ້ອງຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ ແຕ່ໃນການຈັດຕັ້ງຕົວຈິງໄດ້ອອກນິຕິກຳໃຕ້ກົດໝາຍຈຳນວນໜຶ່ງ ເພື່ອເປັນບ່ອນອີງປະກອບໃນການຈັດຕັ້ງປະຕິບັດ.

2.4.ຕີລາຄາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ.

ກ. ຂໍ້ສະດວກ

- ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ໄດ້ເປັນບ່ອນອີງສຳຄັນ



ໃຫ້ແກ່ກະຊວງປ້ອງກັນປະເທດໃນການຄຸ້ມຄອງ ແລະ ກວດກາການເຄື່ອນໄຫວວຽກງານຂອງນາຍທະຫານ ໂດຍກົງຢ່າງຮອບດ້ານ ແລະ ໄດ້ເຮັດໃຫ້ນາຍທະຫານມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ມີແບບແຜນທັນສະໄໝ, ເຮັດສຳເລັດໜ້າທີ່ອັນມີກຽດເຮັດໃຫ້ກອງທັບປະຊາຊົນລາວມີຄວາມເຂັ້ມແຂງ ແລະ ເຕີບໃຫຍ່ຂະຫຍາຍຕົວເປັນກ້າວໆມາ.

- ໄດ້ມີການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ປະສານສົມທົບແໜ້ນແຟ້ນກົມກຽວ ລະຫວ່າງ ກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ;

- ໄດ້ກຳນົດ ການນຳພາ, ບັນຊາ ແລະ ການກໍ່ສ້າງນາຍທະຫານ, ລະບົບຂັ້ນ, ຊັ້ນ, ການປະຕິບັດນະໂຍບາຍ, ມາດຕະການ, ອົງການຄຸ້ມຄອງແລະອົງການກວດກາ ນາຍທະຫານກອງທັບປະຊາຊົນລາວ.

ຂ. ຂໍ້ຫຍຸ້ງຍາກ

ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ ໃນໄລຍະຜ່ານມາ ເຫັນວ່າຍັງພົບຄວາມຫຍຸ້ງຍາກບາງດ້ານ ເປັນຕົ້ນ:

ອ່ານຕໍ່ສະບັບໜ້າ

## ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ຕໍ່ຈາກສະບັບກ່ອນ...

- ຄວາມຮັບຮູ້ຄວາມເຂົ້າໃຈຂອງນາຍ ແລະ ພົນຕຳຫຼວດ ຈຳນວນໜຶ່ງ ຍັງບໍ່ທັນກຳແໜ້ນຕໍ່ກັບເນື້ອໃນກົດໝາຍ ເປັນຕົ້ນກຳແໜ້ນແຕ່ມາດຕາ 28 ກຳນົດເວລາການເລື່ອນຊັ້ນນາຍ ແລະ ພົນຕຳຫຼວດ ແຕ່ພັດບໍ່ເບິ່ງມາດຕາ 29 ແລະ ມາດຕາ 32 ຫຼື ຈຳນວນໜຶ່ງກຳແໜ້ນສະເພາະແຕ່ບັນຫາເລື່ອງນະໂຍບາຍ ເຊັ່ນ: ເລື່ອນຊັ້ນ, ເລື່ອນຕຳແໜ່ງ, ຍົກຂັ້ນເງິນເດືອນ ແລະ ອື່ນໆ ແຕ່ກົງກັນຂ້າມມາດຕາກ່ຽວກັບພາລະບົດບາດ, ສິດ, ໜ້າທີ່ ແລະ ຂໍ້ຫ້າມ ຈຶ່ງເຮັດໃຫ້ການເຄື່ອນໄຫວເຮັດໜ້າທີ່ວຽກງານວິຊາ



ສະເພາະຈຳນວນໜຶ່ງບໍ່ທັນໄປຕາມກົດໝາຍກຳນົດ ແລະ ເກີດມີປະກົດການຫຍໍ້ທໍ້ໃນກຳລັງປ້ອງກັນຄວາມສະຫງົບ;

- ງົບປະມານ ແລະ ອຸປະກອນໃນການໂຄສະນາ, ເຜີຍແຜ່ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໃຫ້ບັນດາກົມກອງອ້ອມຂ້າງກະຊວງ, ບັນດາກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ ລວມທັງການສ້າງຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳລັງປ້ອງກັນຄວາມສະຫງົບ ໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າໃນການໃຫ້ການຮ່ວມມື ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ;

- ບາງກົມກອງ ແລະ ບາງກອງບັນຊາການ ປກສ ແຂວງ ຍັງບໍ່ໃຫ້ຄວາມຮ່ວມມືໃນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ກຳ

ອ່ານຕໍ່ສະບັບໜ້າ

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

2). ພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ໄລຍະ 3 ປີຜ່ານມາ (2021-2023), ກອງປະຊຸມເຫັນດີ ໃຫ້ລັດຖະບານ ສືບຕໍ່ປະຕິບັດຄາດໝາຍສູ້ຊົນຂອງສອງວາລະແຫ່ງຊາດ ຈົນຮອດປີ 2025;

3). ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ (2021-2023), ທິດທາງແຜນການທ້າຍສະໄໝ (2023-2025) ແລະ ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການປະຈຳປີ 2024 ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາ ຕາມຜົນການກວດສອບ ປະຈຳປີ 2021; ບົດລາຍງານການຈັດຕັ້ງປະຕິບັດແຜນການການເຄື່ອນໄຫວວຽກງານ ກາງສະໄໝ (2021-2023), ແຜນການທ້າຍສະໄໝ (2023-2025) ການຈັດຕັ້ງປະຕິບັດ ແຜນການປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022;

4). ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ (2021-2023) ແລະ ແຜນການທ້າຍສະໄໝ (2023-2025), ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງສານປະຊາຊົນສູງສຸດ ແລະ ຂອງອົງການໄອຍະການປະຊາຊົນສູງສຸດ;

5). ພິຈາລະນາ ແລະ ຮັບຮອງເອົາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 3 ສະບັບ ຄື: ກົດໝາຍວ່າດ້ວຍ ການປ້ອງກັນຊາດ, ກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ ແລະ ກົດ ໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

6). ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ ກາງສະໄໝ (2021-2023) ແລະ ແຜນການທ້າຍສະໄໝ (2023-2025) ແລະ ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງສະພາແຫ່ງຊາດ;

7). ພິຈາລະນາ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ7ສະບັບ; ໃນນີ້, ມີກົດໝາຍສ້າງໃໝ່ 1 ສະບັບ ຄື: ກົດໝາຍວ່າດ້ວຍການຮັກສາສຸຂະພາບ ຂັ້ນຕົ້ນ ແລະ ກົດໝາຍສະບັບປັບປຸງ ຈຳນວນ 6 ສະບັບ ຄື: ກົດໝາຍວ່າດ້ວຍ ການປິ່ນປົວ, ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ, ກົດໝາຍວ່າດ້ວຍ ການບັນຊີ, ກົດໝາຍວ່າດ້ວຍ ລະບົບການຊຳລະ, ກົດໝາຍວ່າດ້ວຍ ຜູ້ພິພາກສາ ແລະ ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

8). ກອງປະຊຸມໄດ້ດຳເນີນການປະເມີນຜົນຄວາມໄວ້ວາງໃຈ ຕໍ່ການປະຕິບັດໜ້າທີ່ວຽກງານຂອງບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ຈຳນວນ 67 ທ່ານ ຕາມກົດໝາຍທີ່ໄດ້ກຳນົດໄວ້ ເຊິ່ງຜົນຂອງການປະເມີນດັ່ງກ່າວ ເຫັນວ່າບັນດາບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ຍັງໄດ້ຮັບຄວາມໄວ້ວາງໃຈໃນລະດັບດີ ເປັນຈຳນວນສ່ວນໃຫຍ່.

ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີຄັ້ງທີIXເຂົ້າສູ່ຊີວິດຕົວຈິງ, ແມ່ນໝາກຜົນແຫ່ງສະຕິປັນຍາ, ການສະແດງອອກສິດປະຊາທິປະໄຕ ກໍຄືການຍົກສູງຄວາມຮັບຜິດຊອບທາງການເມືອງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ການຕັດສິນໃຈສູງຂອງລັດຖະບານ, ອົງການທີ່ກ່ຽວຂ້ອງ ໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ປະເທດເຮົາພວມປະເຊີນຢູ່ປັດຈຸບັນ, ສູ້ຊົນສືບຕໍ່ພັດທະນາປະເທດຊາດ ໃຫ້ມີຄວາມເຂັ້ມແຂງຂຶ້ນເລື້ອຍໆ.

(ກົງທະນູຄຳ ພິພັດເສລີ)

## ຖະແຫຼງ...

(ຕໍ່ຈາກໜ້າ 1)

ເຫື່ອແຮງສະຕິປັນຍາຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ໃນການປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາໃນກອງປະຊຸມ ແລະ ດ້ວຍການປະກອບສ່ວນຂອງລັດຖະບານ, ກະຊວງ, ອົງການ, ຂະແໜງການຕ່າງໆ ແລະ ພາກສ່ວນທີ່ກ່ຽວຂ້ອງຕາມພາລະບົດບາດຂອງຕົນຢ່າງຕັ້ງໜ້າ ຈຶ່ງເຮັດໃຫ້ການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງຊາດ ຕາມສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້; ຂ້າພະເຈົ້າ ຕາງໜ້າຄະນະປະຈຳສະພາແຫ່ງຊາດ, ທັງເປັນຫົວໜ້າກອງເລຂານຸການຂອງກອງປະຊຸມ ມີຄວາມຍິນດີ ແລະ ຖືເປັນກຽດແຈ້ງມາຍັງບັນດາທ່ານພະນັກງານ,ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດຮັບຊາບກ່ຽວກັບຜົນສຳເລັດຂອງກອງປະຊຸມ ດັ່ງນີ້:

ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນໃນຕອນເຊົ້າຂອງວັນອັງຄານ ວັນທີ 31 ຕຸລາ 2023 ແລະ ໄດ້ດຳເນີນມາເຖິງຕອນບ່າຍຂອງວັນອັງຄານ ວັນທີ 21 ພະຈິກ 2023 ເຊິ່ງໄດ້ໃຊ້ເວລາດຳເນີນກອງປະຊຸມທັງໝົດ 16 ວັນ. ໃນມື້ເປີດກອງປະຊຸມໃນຄັ້ງນີ້ ນອກຈາກການເຂົ້າຮ່ວມຂອງສະມາຊິກສະພາແຫ່ງຊາດແລ້ວ ຍັງມີການນຳຂັ້ນສູງ ແລະ ອາດີດການນຳຂອງພັກ-ລັດ, ຄະນະລັດຖະບານ, ອົງການຈັດຕັ້ງພັກ-ລັດ, ທູດ, ທູຕານຸທູດ ແລະ ແຂກຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ ແລະ ຕະຫຼອດໄລຍະດຳເນີນກອງປະຊຸມ ສະມາຊິກສະພາແຫ່ງຊາດ ໄດ້ເຂົ້າ ຮ່ວມຈຳນວນຫຼວງຫຼາຍ ເກີນ 2/3 ຕາມກົດໝາຍກຳນົດ.

ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍໄດ້ອອກເປັນມະຕິກອງປະຊຸມ ດັ່ງນີ້:

1) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝຮອດປີ 2025, ການຈັດຕັ້ງປະຕິບັດ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງລັດຖະບານ;

2) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານ, ແຜນເງິນຕາ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງລັດຖະບານ;

3) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະ 3 ປີຜ່ານມາ (2021-2023);

4) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 3 ປີຜ່ານມາ (2021-2023);

5) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 3 ສະບັບ ຄື: ກົດໝາຍວ່າດ້ວຍການປ້ອງກັນຊາດ, ກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

6) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5

ອ່ານຕໍ່ໜ້າ 12

# ຂໍໃຫ້ລັດຖະບານ ກວດກາຄືນບັນດາຫົວໜ່ວຍທີ່ບໍ່ປະຕິບັດ ບໍ່ເຊື່ອມຈອດ ບໍ່ຮ່ວມມື ໃນການເກັບລາຍຮັບ

ເມື່ອວັນທີ 3 ຕຸລານີ້, ທ່ານ ບຸນມີ ພິມມະສອນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12 ແຂວງ ຄຳມ່ວນ ໄດ້ປະກອບຄຳເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດທີ່ລັດຖະບານໄດ້ລາຍງານໃນກອງປະຊຸມສະໄໝສາມັນເທື່ອທີ 6 ສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໄດ້ກ່າວແລກປ່ຽນໃນບາງຈຸດວ່າ:

1. ຕາມການສັງເກດໃນບົດລາຍງານຂອງກະຊວງແຜນການ ແລະ ການລົງທຶນກາງສະໄໝ 2021-2023 ໂດຍສະເພາະແມ່ນການລົງທຶນທົ່ວສັງຄົມ ມີທັງໝົດມີ 5 ຕົວຊີ້ບອກໃນບົດນີ້ຂຽນວ່າ ການປະຕິບັດບັນດາຕົວຊີ້ບອກດັ່ງກ່າວແມ່ນມີຄວາມຕັ້ງໜ້າ ແລະ ມີໜຶ່ງຕົວຊີ້ບອກ ຄາດວ່າຈະບໍ່ບັນລຸຕາມແຜນ ໂດຍສະເພາະແມ່ນການລົງທຶນພາກລັດ ແຕ່ວ່າຜ່ານການສັງເກດໃນນີ້ເວົ້າວ່າ ລະດັບການລົງທຶນ ຫຼື ການອະນຸຍາດການລົງທຶນ ເຫັນວ່ານັບມື້ນັບຖອຍຫຼັງ ມັນຢາກກົງກັນຂ້າມໜ້ອຍໜຶ່ງເພາະວ່າຕາມຂໍ້ມູນທີມງານຂອງທະນາຄານໂລກ ໄດ້ມີການປະເມີນໃນປີ 2016 ສປປ ລາວ ຢູ່ໃນລະດັບ 139 ໃນຈຳນວນ 190 ປະເທດ ແລະ ໃນປີ 2020 ຫຍັບລົງໄປບໍ່ແມ່ນຫຍັບຂຶ້ນໄປຢູ່ໃນລະດັບ 154 ຈຳນວນ 190 ປະເທດ ແຕ່ວ່າບໍ່ຮູ້ວ່າມາຮອດປີ 2022-2023 ພວກເຮົາດີຂຶ້ນ ຫຼື ວ່າທ່າອ່ຽງການເກີນແຜນຂອງເຮົາຊຸກຍູ້ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດນີ້ ຂ້າພະເຈົ້າວ່າຕ້ອງດີຂຶ້ນ ຫຼື ວ່າມັນລົງຖອຍຫຼັງຢູ່ ຂໍອະນຸຍາດພາກສ່ວນກ່ຽວກັບຊີ້ແຈ້ງຕື່ມວ່າມັນເປັນແນວໃດທ່າອ່ຽງການລົງທຶນຂອງພວກເຮົາ ປະໃຫ້ມັນຖອຍຫຼັງແບບນີ້ບໍ່ ໃນສະພາບເສດຖະກິດຂອງພວກເຮົາມີຄວາມຫຍຸ້ງຍາກ ຂ້າພະເຈົ້າຄິດວ່າຄວນປັບເລື່ອງຂັ້ນຂອດໃນການອະນຸຍາດການລົງທຶນຄິດວ່າມີຄວາມຫຍຸ້ງຍາກຫຼາຍ ຍັງມີຫຼາຍຂັ້ນຫຼາຍຂອດ ບໍ່ວ່າສູນກາງ ແລະ ທ້ອງຖິ່ນ ໂດຍສະເພາະຂອດການອະນຸຍາດການລົງທຶນ ພວກເຮົາຍັງບໍ່ມີຂໍ້ມູນທີ່ຈະແຈ້ງ ໂດຍສະເພາະບັນດາບັນຊີຮຽກການລົງທຶນ ພວກເຮົາຍັງບໍ່ທັນມີຂໍ້ມູນ ສ່ວນໃຫຍ່ແມ່ນອາໄສແຕ່ຜູ້ປະກອບການລົງທຶນລົງໄປເກັບກຳຂໍ້ມູນແລ້ວຈຶ່ງມາສະເໜີກະຊວງການທີ່ກ່ຽວຂ້ອງອະນຸມັດ ມັນຈຶ່ງເກີດບັນຫາທັບຊ້ອນເລື່ອງເນື້ອທີ່ການສຳປະທານ ໂດຍສະເພາະໃນຂົງເຂດທີ່ດິນຕ່າງໆ ອັນນີ້ຂ້າພະເຈົ້າຄິດວ່າພວກເຮົາຄວນມີການສຳຫຼວດ ມີການຈັດສັນບໍ່ ຂ້າພະເຈົ້າເຫັນດີສະໜັບສະໜູນຕາມຍຸດທະສາດແຮ່ທາດຮອດ 2030 ທາງເບື້ອງລັດຖະບານໄດ້ມີການສຳຫຼວດຄັກແນ່ ມີການເກັບກຳຂໍ້ມູນແລ້ວ ຈຶ່ງມາປະມູນໃຫ້ຜູ້ປະກອບ ຫຼື ຜູ້ລົງທຶນສົນໃຈ ອັນນີ້ ຂ້າພະເຈົ້າຄິດວ່າບັນດາໂຄງການຕ່າງໆຫາກເຮັດໄດ້ຄືແນວນີ້ ລັດເຮົາຈະບໍ່ເສຍປຽບໃນການລົງທຶນ.

2. ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນນີ້ມີ 9 ຕົວຊີ້ບອກ ແຕ່ມັນຂະຫຍາຍອອກໄປຫຼາຍມາດຖານມັນກໍສູງ ພວກເຮົາຍາກໃນການຈັດຕັ້ງປະຕິບັດ ບວກໃສ່ງົບປະມານທຶນຮອນບໍ່ໄດ້ໄປຊຸກຍູ້ ເພາະສະນັ້ນມັນມີຄວາມຫຍຸ້ງຍາກ ເຮັດໃຫ້ພວກເຮົາປະຕິບັດບໍ່ໄດ້ ບໍ່ສຳເລັດ ຂ້າພະເຈົ້າຄິດວ່າບັນດາສາເຫດ ທີ່



ພາໃຫ້ພວກເຮົາປະຕິບັດບໍ່ໄດ້ອັນໜຶ່ງແມ່ນມາດຕະຖານຂອງພວກເຮົາຕາມ 348 ຫຼາຍທ່ານໄດ້ຍົກຂຶ້ນ ພວກເຮົາກຳນົດສູງໂພດ ມາດຕະຖານຂອງພວກເຮົາ ຖ້າ 339 ແມ່ນພົ້ນທຸກແລ້ວ 348 ມັນຫຼາຍ ມາດຕະຖານໂພດ ເຮົາພາກັນຫຼຸດລົງ. ສສຊ ເຂດ 8 ເພິ່ນໄດ້ເວົ້າຢູ່ນີ້ຫຼາຍແຂວງກໍທຸກຄືນ ບໍ່ແມ່ນທຸກການເປັນຢູ່ ຊີວິດກໍຍັງຄືເກົ່າຢູ່ ແຕ່ວ່າມາປະເມີນຄວາມທຸກຍາກອັນດັບຂອງມັນຍັງຫຍຸ້ງຍາກຢູ່ ຂ້າພະເຈົ້າຄິດວ່າກົດໝາຍກໍຍັງປັບປຸງໄດ້ ນິຕິກຳໃຕ້ກົດໝາຍປະເມີນແລ້ວປັບປຸງບໍ່ໄດ້ບໍ ມັນຫຍຸ້ງຍາກເຮົາກໍປັບໃຫ້ມັນສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ ຈຶ່ງສາມາດຈັດຕັ້ງປະຕິບັດໄດ້ງ່າຍ ບໍ່ແມ່ນປັບໃສ່ໃຫ້ປະຕິບັດໄດ້ງ່າຍດອກ ໃຫ້ເບິ່ງມັນສອດຄ່ອງກັບໂຕຈິງ ຂ້າພະເຈົ້າຍົກຕົວຢ່າງມາດຕະຖານບ້ານພົ້ນທຸກ ຕົວຢ່າງແຂວງຄຳມ່ວນບ້ານດອນປະແດກ ທຸກຢ່າງປະຊາຊົນພ້ອມໝົດ ແຕ່ວ່າຊິປະເມີນ ຊິປະກາດບ້ານພົ້ນທຸກບໍ່ໄດ້ຍ້ອນບໍ່ມີເສັ້ນທາງ ຊິມີໄດ້ຈັ່ງໃດ໋ ເພາະມັນຢູ່ໃນກາງດອນສົມມຸດວ່າ ອັນນີ້ກະມາດຕະຖານໜຶ່ງກໍຊິມີຫຼາຍໆບ້ານ ຫຼາຍບ່ອນຄືກັນ ມັນມາຄາຢູ່ມາດຕະຖານເຮົາເອງ ມາເບິ່ງຫຼາຍແຂວງ ຫຼາຍເມືອງມີເງື່ອນໄຂພົ້ນທຸກແລ້ວ ແຕ່ມັນມາຄາມາດຕະຖານຂອງຂອງເຮົາເອງ ມັນບໍ່ຜ່ານ ມັນກໍບໍ່ໄດ້ ເວລາໄປປະເມີນ ຂ້າພະເຈົ້າຂໍຮຽນແລກປ່ຽນ ຖ້າເປັນໄປໄດ້ພວກເຮົາປະເມີນຄືນເບິ່ງ 348 ;

3. ບັນຫາຕິດພັນກັບວຽກງານກະສິກຳ ໂດຍສະເພາະແມ່ນການສົ່ງເສີມ ຊຸກຍູ້ ໃຫ້ເຂົາລ້ຽງງົວລ້ຽງຄວາຍສົ່ງອອກໄປ ສປ ຈີນ ແຕ່ສິ່ງກີດຂວາງບໍ່ພາກັນໄປແກ້ໄຂ ຜູ້ປະກອບການ; ແທນທີ່ຄວາຍຕຸ້ຍຢູ່ ງົວກໍຕຸ້ຍຢູ່ ແຕ່ວ່າຊິໄດ້ເຂົ້າ 75 ມື້ໄປບຳບັດຢູ່ນັ້ນ ຈຳນວນໜຶ່ງມັນກໍຕາຍ ຊິລົງທຶນຊິໄປລ້ຽງໄປເກືອຢູ່ນັ້ນກໍພໍແຮງສຸດທ້າຍໄປບໍ່ລອດ ອັນນີ້ຂ້າພະເຈົ້າຄິດວ່າມີວິທີການໃໝ່ບໍ່ ອັນນີ້ຂ້າພະເຈົ້າຂໍອະນຸຍາດເອີ່ຍຊື່ສະໜັບສະໜູນຄຳຄິດຄຳເຫັນຂອງທ່ານຮອງປະທານສະພາແຫ່ງຊາດມີຄຳເຫັນຢູ່ໃນກອງປະຊຸມຄະນະກຳມະການເສດຖະກິດແຜນການ ແລະ ການກວດສອບ ມື້ວັນທີ 30 ຕຸລາ ເຮົາຄິດວ່າເອົານັກລົງທຶນຕັ້ງໂຮງຂ້າສັດທັນສະໄໝຢູ່ບ້ານເຮົາ ຂ້າແລ້ວສົ່ງໄປຊິງ່າຍກວ່າບໍ່ເຮົາວ່າເຫັນດີທີ່ສຸດຕໍ່ຄຳເຫັນຂອງເພິ່ນເພາະວ່າເຮົາສົ່ງໄປເປັນໂຕໝູ່ກັກກັ້ນຍາກ ເອົາໄປແບບເປັນຊີ້ນສ່ວນຊິບໍ່ງ່າຍກວ່າບໍ່ ອັນນີ້ກໍແນວຄວາມຄິດໜຶ່ງ ຢາກຂໍແລກປ່ຽນ.

4. ການຄຸ້ມຄອງເງິນຕາ ໂດຍສະເພາະແມ່ນຄາດໝາຍຫຼາຍອັນຍັງບໍ່ທັນສຳເລັດ ຄືຫຼາຍທ່ານໄດ້ຍົກຂຶ້ນຫັ້ນແລ້ວ ຕາມການລາຍງານມີທ່າອ່ຽງດີຂຶ້ນ ຕົວຈິງພວກເຮົາຍັງມີຄວາມຫຍຸ້ງຍາກ ໂດຍສະເພາະອັດຕາເງິນເຟີ້ ຖ້າທຽບໃສ່ສະກຸນເງິນຫຼັກ ຖືວ່າຍັງສູງຢູ່ ພວກເຮົາຍັງຫຍຸ້ງຍາກມັນກະທົບໄປໝົດໃນການລົງທຶນ ຕໍ່ກັບບັນຫາການປະຕິບັດນິຕິກຳເອກະພາບທາງດ້ານເຂດ 8 ເວົ້າກ່ຽວກັບນິຕິກຳຂົງເຂດທະນາຄານມີຫຼາຍອັນພວກເຮົາຍັງບໍ່ໄດ້ເຂັ້ມງວດ ໂດຍສະເພາະແມ່ນການໃຊ້ຈ່າຍບັນດາເງິນສະກຸນຕ່າງໆໃນທ້ອງຕະຫຼາດກໍຍັງຫຼາກຫຼາຍ ມີການໃຊ້ຈ່າຍ ພວກເຮົາຍັງບໍ່ຈິງຈັງເຂັ້ມງວດ ຊິໃຫ້ແຕ່ທະນາຄານຜູ້ດຽວ ຂ້າພະເຈົ້າຄິດວ່າບໍ່ຫຼອນພວກເຮົາຕ້ອງປຸກລະດົມທົ່ວສັງຄົມຊ່ອຍກັນເປັນເຈົ້າການນຳກັນມັນຈັ່ງຊິໄດ້ ອັນນີ້ແມ່ນເອົາສະກຸນເງິນຫຍັງມາແມ່ນຮັບໝົດ ອັນນີ້ກໍຫຍຸ້ງຍາກຢູ່ວຽກງານທະນາຄານ, ບາດນີ້ວຽກງານການເງິນຂ້າພະເຈົ້າຢາກມີບາງທັດສະນະ ເຫັນດີຊົມເຊີຍ ທາງກະຊວງການເງິນທີ່ໄດ້ເອົາໃຈໃສ່ທັນເປັນທັນສະໄໝ ແຕ່ວ່າຢາກໃຫ້ການຊຳລະຜ່ານທະນາຄານ ຄວນໃຫ້ຫຼາຍທະນາຄານທຸລະກິດ ໄດ້ມີການບໍລິການ ໃຫ້ລູກຄ້າ ຫຼື ຜູ້ປະກອບການ ໄດ້ມີສິດເລືອກຫຼາຍທະນາຄານ ໃຫ້ເຂົາສະດວກໄປທະນາຄານໃດກໍໃຫ້ໄປຜ່ານທະນາຄານນັ້ນ ຄັນວ່າເຮົາໄປຈຳກັດແຕ່ທະນາຄານໃດທະນາຄານໜຶ່ງ ມັນກໍຊັກຊ້າໄປຕື່ມອີກກ່ຽວກັບການນຳເຂົ້າສູ່ລະບົບທະນາຄານ ເພາະສະນັ້ນກ່ຽວກັບບັນດາຫົວໜ່ວຍທີ່ເກັບລາຍຮັບນີ້ກໍຍັງມີການເຊື່ອງອຳ ບໍ່ປະຕິບັດ ບໍ່ຮ່ວມມືກັບກະຊວງ ບໍ່ເຊື່ອມຈອດເຄືອຂ່າຍຕ່າງໆຍັງເກັບທາງນອກຢູ່ມັນກໍຫຍຸ້ງຍາກ ຂ້າພະເຈົ້າຄິດວ່າສະເໜີລັດຖະບານກວດກາຄືນຫົວໜ່ວຍໃນພາກສ່ວນໃດຍັງບໍ່ທັນຫັນເຂົ້າສູ່ລະບົບຕ້ອງໄດ້ເຂັ້ມງວດ ໃຫ້ຫັນເຂົ້າສູ່ລະບົບ ຄັນເຮົາຍັງປະຄືເກົ່ານີ້ເກີດຊ່ອງວ່າງໃນການຮົ່ວໄຫຼ ຍັງສືບຕໍ່ຄືເກົ່າ.

5. ຕໍ່ກັບພາກສະເໜີຂອງທ່ານນາຍົກ ຢູ່ໃນຂໍ້ທີ 4 ກ່ຽວກັບສະເໜີການນຳໃຊ້ເງິນເກີນແຜນນີ້ ເພີ່ນວ່າຢາກຂໍ 50% ແຕ່ວ່າບາງທ່ານກໍໄດ້ສະເໜີໄປ 40-60% ຕາມທັດສະນະຂອງຂ້າພະເຈົ້າ ພວກເຮົາກຳລັງປະຕິບັດທົດລອງບັນດາແຂວງທີ່ມີເງື່ອນໄຂນີ້ ຄືດວ່າ 30-70 ກ່ອນບໍ່ປີນີ້ ປີຕໍ່ໄປຈຶ່ງເບິ່ງຕື່ມພໍໃຫ້ແຂວງໄດ້ມີເງື່ອນໄຂເອົາລາຍຮັບດັ່ງກ່າວໄປສ້າງໂຄງລ່າງພື້ນຖານສ້າງພື້ນຖານລາຍຮັບໃຫ້ມັນເຂັ້ມແຂງກ່ອນ ພາກສະເໜີຕໍ່ມາກ່ຽວກັບການປະຕິບັດນະໂຍບາຍສົ່ງເສີມເຂດເສດຖະກິດພິເສດ ໂດຍສະເພາະຢູ່ແຂວງຄຳມ່ວນຂອງພວກເຮົາ ເມືອງພັດທະນາອັດຊະລິຍະ ອາຊີບໂປຣຕັສ ໂຄງການອື່ນໄດ້ຮັບນະໂຍບາຍໝົດ ແຕ່ໂຄງການນີ້ຍັງບໍ່ໄດ້ຮັບອະນຸມັດນະໂຍບາຍ ເພາະສະນັ້ນສະເໜີທາງເບື້ອງລັດຖະບານ ຮີບຮ້ອນໃນການຄົ້ນຄວ້າ ມີນະໂຍບາຍຂອບເຂດທົ່ວປະເທດ ບັນຫາສຸດທ້າຍການແກ້ໄຂບັນຫາໜີ້ສິນເປັນວຽກເກົ່າວຽກໄຟຟ້າກໍຄືການພັດທະນາຢູ່ໃນດ່ານສາກົນຂົວມິດຕະພາບ 3 ຄຸມເຄືອມາແຕ່ດົນແລ້ວ ສິ່ງປຸກສ້າງກໍຊຸດໂຊມຫຼາຍແລ້ວ ພວກເຮົາຄິດວ່າຂໍນຳໃຊ້ກອງທຶນທາງ ເງິນເກັບຄ່າຜ່ານຂົວໄປບູລະນະບໍ່ໄດ້ບໍ່ ອັນນີ້ມັນກໍເປັນຕາອາຍໃດ໋ ທາງເຂົ້າບ້ານເຂົ້າເມືອງເປັນຄືແນວນັ້ນ.

**ຮຽບຮຽງໂດຍ:**
**ກົງໃຈ ແສງອຳພັນ**

# ເຄື່ອນໄຫວຕິດຕາມກວດກາ 2 ວາລະແຫ່ງຊາດ

(ສພຊ) ທ່ານ ຄຳເຜີຍ ງອນວັນຄຳຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານປະທານຄະນະກຳມະການ ແລະ ເລຂາທິການ, ຮອງປະທານຄະນະກຳມະການ, ຫົວໜ້າຂະແໜງພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ຢູ່ເມືອງຮຸນ, ເມືອງປາກແບງ, ເມືອງງາ ແລະ ເມືອງນາໝໍ້ ໃນລະຫວ່າງວັນທີ 8-10 ພະຈິກ 2023; ມີທ່ານເຈົ້າເມືອງ, ຮອງເລຂາພັກເມືອງ, ຮອງເຈົ້າເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ແລະ ພະນັກ



ງານຫຼັກແຫຼ່ງຂອງທັງ 4 ເມືອງເຂົ້າຮ່ວມຢ່າງພ້ອມພຽງ.

ການເຄື່ອນໄຫວຕິດຕາມກວດກາຄັ້ງນີ້, ໄດ້ຮັບຟັງບັນດາເມືອງລາຍງານສະພາບລວມໂດຍຫຍໍ້ ກ່ຽວກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ. ຫຼັງຈາກນັ້ນ, ຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ມີຄຳຄິດຄຳເຫັນແລກປ່ຽນເຊິ່ງກັນແລະກັນ, ມີຄຳຖາມເຈາະຈີ້ມເພີ່ມເຕີມຕໍ່ກັບບາງບັນຫາ, ມີຄຳສະເໜີ ແລະ ບັນດາຂະແໜງທີ່ກ່ຽວຂ້ອງໄດ້ຂຶ້ນຊີ້ແຈງຕໍ່ກອງປະຊຸມ ຕາມຄວາມຮັບຜິດຊອບຂອງຕົນຢ່າງກົງໄປກົງມາ. ພ້ອມນັ້ນ, ທາງຄະນະທີມງານຍັງໄດ້ເຄື່ອນໄຫວຢູ່ຄ້າຍຄຸມຂັງດັດສ້າງຂອງບັນດາເມືອງຕື່ມອີກ.

ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດແມ່ນບັນຫາຮີບດ່ວນທີ່ລັດຖະບານໄດ້ສະເໜີຕໍ່ກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດຮັບຮອງ ເພື່ອຈັດຕັ້ງປະຕິບັດໃນໄລຍະ 2 ປີເຄິ່ງ (2021-2023) ເພື່ອແກ້ໄຂບັນຫາພື້ນຖານຂອງຊາດທີ່ມີຄວາມຈຳເປັນ ແລະ ຮີບດ່ວນ ເລັ່ງທວງໃຫ້ທຸກພາກສ່ວນພ້ອມກັນສຸມໃສ່ແກ້ໄຂວິກິດພາຍໃນ ເຊິ່ງໄນໄລຍະຜ່ານມາຂະແໜງການກ່ຽວຂ້ອງ ກໍໄດ້ລາຍງານຕໍ່ກອງປະຊຸມສະພາປະຊາຊົນແຂວງ ແຕ່ກໍ່ເຫັນໄດ້ບາງດ້ານຍັງບໍ່ສາ



ມາດບັນລຸໄດ້ຕາມແຜນການ, ເນື້ອໃນຄາດໝາຍຂອງ 2 ວາລະແຫ່ງຊາດທີ່ໄດ້ກຳນົດໄວ້ ຍັງຈັດຕັ້ງປະຕິບັດບໍ່ໄປຕາມແຜນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ລົງປະເມີນຕາມມະຕິສະພາແຫ່ງຊາດ ແລະ ມະຕິສະພາປະຊາຊົນແຂວງ ກ່ອນກອງປະຊຸມສະໄໝສາມັນເທື່ອທີ 6 ເພື່ອຕິດຕາມເກັບກຳຂໍ້ມູນບັນຫາທາງສຽງສັງຄົມ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ເພື່ອເປັນການຊຸກຍູ້ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດ 2 ວາລະດັ່ງກ່າວ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ສາມາດບັນລຸຕາມຄາດໝາຍທີ່ວາງໄວ້.

# ເອົາໃຈໃສ່ສ້າງວຽກເຮັດງານທຳ ເພື່ອບໍ່ໃຫ້ຕົກເປັນເຫຍື່ອຂອງການຄ້າມະນຸດ ແລະ ບັນຫາໄພສັງຄົມ

ການດຳເນີນກອງປະຊຸມສະໄໝເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ອັດລົງດ້ວຍຜົນສຳເລັດແລ້ວ ແຕ່ໜັງສືພິມ ຜູ້ແທນປະຊາຊົນ ຂອງພວກເຮົາ ກໍຍັງຄົງສືບຕໍ່ນຳສະເໜີກ່ຽວກັບບົດສຳພາດຂອງບັນດາທ່ານປະທານ-ຮອງປະທານ ກໍຄືຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງຕ່າງໆ ໃນທົ່ວປະເທດ ທີ່ໄດ້ໃຫ້ສຳພາດໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອນີ້, ສຳລັບບົດນີ້ແມ່ນບົດສຳພາດຂອງທ່ານ ຄຳຟອງ ອິນມານີ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 3 ທັງເປັນປະທານສະພາປະຊາຊົນແຂວງຫຼວງນ້ຳທາ ເຊິ່ງທ່ານໄດ້ໃຫ້ສຳພາດໃນນາມຕາງໜ້າໃຫ້ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 3 ໄດ້ໃຫ້ສຳພາດກ່ຽວກັບບັນຫາພົ້ນເດັ່ນ ແລະ ເຄັ່ງຮ້ອນຢູ່ພາຍໃນແຂວງຫຼວງນ້ຳທາໃນໄລຍະຜ່ານມາ ວ່າ:

ຕະຫຼອດໄລຍະຜ່ານມາ ເຖິງວ່າສະພາບການພາກພື້ນ ແລະ ສາກົນມີການຜັນແປຢ່າງໄວວາ ແລະ ສະຫຼັບສັບຊ້ອນ, ສະພາບພາຍໃນປະເທດເຮົາພົບຄວາມຫຍຸ້ງຍາກຫຼາຍດ້ານ ເປັນຕົ້ນແມ່ນເສດຖະກິດ-ການເງິນ, ເກີດພະຍາດລະບາດ, ຄ່າຄອງຊີບປັບຕົວສູງຂຶ້ນ ຊຶ່ງໄດ້ສົ່ງຜົນກະທົບທາງກົງ ແລະ ທາງອ້ອມຕໍ່ການສ້າງສາພັດທະນາປະເທດຊາດ ກໍຄືແຂວງຫຼວງນ້ຳທາ ເວົ້າລວມ ເວົ້າສະເພາະກໍຄືຕໍ່ກັບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, 2 ວາລະແຫ່ງຊາດ, ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງອົງຄະນະພັກແຂວງ, ແຜນພັດທະນາເສດຖະກິດ-ສັງຄົມຄັ້ງ IX ຂອງແຂວງ ແລະ ມະຕິຂອງສະພາປະຊາຊົນແຂວງ ພາຍໃຕ້ນຳພາ-ຊີ້ນຳຂອງຄະນະພັກແຂວງ-ອົງການປົກຄອງແຂວງໃນການປະກອບສ່ວນຢ່າງເປັນເຈົ້າການຂອງພະນັກງານນຳພາ-ຄຸ້ມຄອງຂອງແຂວງ ແລະ ພາກສ່ວນກ່ຽວຂ້ອງ ພວກເຮົາຈຶ່ງສາມາດຜ່ານຜາອຸປະສັກ, ຂໍ້ຫຍຸ້ງຍາກຕ່າງໆ ແລະ ຍາດມາໄດ້ຫຼາຍດ້ານ. ແຕ່ເຖິງແນວໃດກໍຕາມ ພວກເຮົາກໍຍັງມີສິ່ງທ້າທາຍຈຳນວນໜຶ່ງ ເຊິ່ງເປັນການກີດໜ່ວງຖ່ວງດຶງຕໍ່ການສ້າງສາພັດທະນາແຂວງຂອງພວກເຮົາ ເປັນຕົ້ນ ບັນຫາຢາເສບຕິດ, ຂີ້ລັກງັດແງະ, ເກີດອຸບັດເຫດຕາມທ້ອງຖະໜົນ, ບັນຫາອື່ນໆ ແຕ່ອັນພົ້ນເດັ່ນກວ່າໝູ່ ທີ່ພວກເຮົາສາມາດຈັດຕັ້ງປະຕິບັດໄດ້ໃນແຕ່ລະໄລຍະປະກອບມີ:

**ບັນຫາຢາເສບຕິດ:** ກາງສະໄໝຜ່ານມາ ພວກເຮົາສາມາດມ້າງຄະດີກ່ຽວຂ້ອງກັບຢາເສບຕິດ ໄດ້ 227 ລາຍ, ມີຜູ້ຖືກຫາ 282 ຄົນ ຍິງ 34 ຄົນ, ຢຶດເຄື່ອງຂອງກາງປະເພດຕ່າງໆ ໄດ້ຄື: ຢາບ້າ 271.873 ເມັດ, ຢາຝິ່ນ 89,23 ກິໂລ, ເຮໂລອິນ 1,3 ກຼາມ, ຢາເຄ 4,01 ກຼາມ, ຢາໄອສ໌ 1,38 ກຼາມ ແລະ ນ້ຳກົດ 9.400 ລິດ; ທົ່ວແຂວງມີຜູ້ຕິດຢາເສບຕິດທັງໝົດ 6,820 ຄົນ ຍິງ 910 ຄົນ, ບຳບັດຜູ້ຕິດຢາເສບຕິດໄດ້ 14 ຊຸດ, ຈຳນວນ 3.075 ຄົນ ຍິງ 651 ຄົນ.

**ບັນຫາການຄ້າມະນຸດ:** ເຫັນວ່າສະພາບການຄ້າມະນຸດຢູ່ແຂວງຫຼວງນ້ຳທາ ມີຫຼາຍກໍລະນີເກີດຂຶ້ນ ພວກກຸ່ມເປົ້າໝາຍໄດ້ໂຄສະນາຜ່ານທາງອອນລາຍ, ໂຄສະນາຜ່ານຄົນຕໍ່ຄົນໂດຍກົງ ໂດຍໃຊ້ຫຼາຍຮູບແບບ, ຫຼາຍເລ່ລ່ຽມ ເຮັດໃຫ້ຊາວໜຸ່ມຍິງ-ຊາຍ ມີຄວາມສົນໃຈ ແລະ ຫຼົງເຊື່ອຕໍ່ການໂຄສະນາ ເປັນຕົ້ນແມ່ນການໄປອອກ



ແຮງງານຕ່າງປະເທດ, ຢູ່ຄາຊິໂນ 3 ຫຼ່ຽມຄຳ ແຂວງບໍ່ແກ້ວ ໂດຍອ້າງວ່າໄດ້ເງິນເດືອນສູງ, ມີຄວາມຕ້ອງການແຮງງານຈຳນວນຫຼາຍ, ວຽກເບົາ ເໝາະແກ່ເພດຍິງຫຼາຍກວ່າ ດັ່ງນັ້ນ, ຈຶ່ງມີການຊັກຊວນການໄປຕາມຄຳຕົວະຍົວະ ເຊິ່ງຜູ້ຖືກຫຼອກລວງ ສ່ວນຫຼາຍແມ່ນຢາກຮູ້, ຢາກເຫັນສິ່ງໃໝ່, ຢາກມີລາຍໄດ້, ຢາກປ່ຽນແປງຊີວິດຂອງຕົນເອງຈາກບ້ານນອກ, ທຸກຍາກ ຢາກເຂົ້າໃນເມືອງ ຫຼື ຢາກໄປຕ່າງປະເທດ ແລະ ຈຳນວນໜຶ່ງຄົນຕ່າງປະເທດກໍຖືກຊັກຊວນມາເຮັດວຽກຢູ່ຄາຊິໂນ ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ ສ່ວນຫຼາຍແມ່ນຄົນຈີນ ເຊິ່ງລັກເຂົ້າມາຕາມເສັ້ນທາງທຳມະຊາດ ໂດຍບໍ່ມີເອກະສານຖືກຕ້ອງຕາມກົດໝາຍ ຕະຫຼອດໄລຍະ 9 ເດືອນຜ່ານມານີ້ ມີຄະດີເກີດຂຶ້ນໃໝ່ ມີພາຍໃນແຂວງຫຼວງນ້ຳທາ 15 ລາຍ, ຜູ້ຖືກຫາ 26 ຄົນ ໃນນີ້, ມີຄົນຕ່າງປະເທດ 1 ຄົນ. ຄະດີສົ່ງໄສ້ຄ້າມະນຸດ 2 ລາຍ, ຜູ້ຕ້ອງຫາ 3 ຄົນ ຍິງ 0 ຄົນ; ຄະດີການທຳມິດສະຈານ 9 ລາຍ, ຜູ້ຕ້ອງຫາ 18 ຄົນ ຍິງ 9 ຄົນ, ຕ່ຳກວ່າ 18 ປີ 0 ຄົນ; ຄະດີການບັງຄັບ 1 ລາຍ, ຜູ້ຕ້ອງຫາ 1 ລາຍ (ຕ່າງປະເທດ 1 ຄົນ); ຄະດີຂົ່ມຂືນທຳຊຳເລົາ 1 ລາຍ, ຜູ້ຕ້ອງຫາ 1 ຄົນ, ຕ່ຳກວ່າ 18 ປີ 0 ຄົນ; ການຄ້າປະເວນີຂອງຄົນອື່ນ 2 ລາຍ, ຜູ້ຕ້ອງຫາ 3 ຄົນ ຍິງ 0 ຄົນ.

**ຮູບການແກ້ໄຂ:** ຄະດີສົ່ງໄອຍະການ 5 ລາຍ, ຜູ້ຕ້ອງຫາ 9 ຄົນ ຍິງ 4 ຄົນ, ຕ່ຳກວ່າ 18 ປີ 0 ຄົນ; ຄະດີທຳມິດສະຈານ 4 ລາຍ, ຜູ້ຕ້ອງຫາ 9 ຄົນ ຍິງ 4 ຄົນ, ຕ່ຳກວ່າ 18 ປີ 0 ຄົນ; ຄະດີຂົ່ມຂືນທຳຊຳເລົາ 1 ລາຍ, ຜູ້ຕ້ອງຫາ 1 ຄົນ, ຕ່ຳກວ່າ 18 ປີ 0 ຄົນ; ແກ້ໄຂຄະດີໄດ້ 7 ລາຍ, ຜູ້ຕ້ອງຫາ 11 ຄົນ ຍິງ 2 ຄົນ; ຄະດີສົ່ງໄສ້ຄ້າ 2 ລາຍ, ຜູ້ຕ້ອງຫາ 3 ຄົນ; ຄະດີທຳມິດສະຈານ 2 ລາຍ, ຜູ້ຕ້ອງຫາ 4 ຄົນ ຍິງ 2 ຄົນ, ຕ່ຳກວ່າ 18 ປີ 0 ຄົນ; ການຄ້າປະເວນີຂອງຄົນອື່ນ 2 ລາຍ, ຜູ້ຕ້ອງຫາ 3 ຄົນ ຍິງ 0 ຄົນ; ຄະດີການບັງຄັບ 1 ລາຍ, ຜູ້ຕ້ອງຫາ 1 ຄົນ, ຕ່ຳກວ່າ 18 ປີ 0 ຄົນ; ຄະດີ ພວມດຳເນີນ 3 ລາຍ, ຜູ້ຕ້ອງຫາ 6 ຄົນ ຍິງ 3 ຄົນ; ຄະດີການທຳມິດສະຈານ 3 ລາຍ, ຜູ້ຕ້ອງຫາ 6 ຄົນ ຍິງ 6 ຄົນ (ສາມາດຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ກຸ່ມສ່ຽງຈາກການຄ້າມະນຸດ 11 ຄົນ ຍິງ ຄົນ, ຕ່ຳກວ່າ 18 ປີ 2 ຄົນ, ຄົນຕ່າງປະເທດ 1 ຄົນ).

**ບັນຫາຂີ້ລັກງັດແງະ:** ຕໍ່ກັບບັນຫາລັກຊັບພົນລະເມືອງ ໂດຍສະເພາະແມ່ນການລັກລົດຈັກເຫັນວ່າຍັງເກີດຂຶ້ນຫຼາຍ ເພາະໃນແຕ່ລະວັນ, ແຕ່ລະອາທິດ ມີປະຊາຊົນມາແຈ້ງຄວາມກ່ຽວກັບລົດຈັກເສຍເຫັນວ່ານັບມື້ເພີ່ມຂຶ້ນ ແລະ ເຈົ້າໜ້າທີ່ພວກເຮົາກໍໄດ້ດຳເນີນການຕິດຕາມກວດກາກຸ່ມເປົ້າໝາຍ ສາມາດຈັບໄດ້ຈຳນວນໜຶ່ງ ຊຶ່ງປະກອບມີຮ້ານທີ່ຮັບຊື້ ມາດັດແປງແລ້ວຂາຍຕໍ່ ພ້ອມຂອງກາງລົດຈັກ 75 ຄັນ, ມີ 57 ລາຍ, ຜູ້ຕ້ອງຫາ 83 ຄົນ, ຄະດີດັ່ງກ່າວ ແກ້ໄຂ 16 ລາຍ, ຜູ້ຕ້ອງຫາ 24 ຄົນ, ສົ່ງໄອຍະການ 14 ລາຍ, ຜູ້ຕ້ອງຫາ 23 ຄົນ; ເກັບກູ້ໄດ້ຄືນ 38 ຄັນ, ສຳລັບເປົ້າໝາຍທີ່ເຄື່ອນໄຫວລັກຊັບ ຈຳນວນໜຶ່ງກໍສາມາດຈັບຕົວໄດ້ ແລະ ຈຳນວນໜຶ່ງກໍບໍ່ສາມາດຈັບໄດ້ ຍ້ອນການເຄື່ອນໄຫວຂອງກຸ່ມຄົນດັ່ງກ່າວມີລັກສະນະແນບນຽນ ແລະ ລະອຽດອ່ອນທີ່ສຸດ.

ນອກຈາກ 3 ບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນດັ່ງທີ່ກ່າວມາຂ້າງເທິງນັ້ນແລ້ວ ແຂວງຫຼວງນ້ຳທາ ກໍຍັງພົບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ໄພເງິນເຟີ້, ລາຄານ້ຳມັນ, ຄ່າຄອງຊີບ ຫຼື ເຄື່ອງບໍລິໂພກ-ອຸປະໂພກ ປັບຕົວສູງຂຶ້ນ, ເກີດພະຍາດລະບາດຕາມລະດູການ, ໄພຫວ່າງງານ, ໄພແຫ້ງແລ້ງ, ການຜະລິດສິນຄ້າເພື່ອສົ່ງອອກຍັງບໍ່ທັນກວ້າງຂວາງດີເທົ່າທີ່ຄວນ ສ່ວນຫຼາຍແມ່ນຍັງອາໄສການນຳເຂົ້າສິນຄ້າຈາກປະເທດເພື່ອນບ້ານໃກ້ຄຽງ, ເຊິ່ງບັນຫາດັ່ງກ່າວນີ້ ໄດ້ສົ່ງຜົນກະທົບໂດຍກົງຕໍ່ການດຳລົງຊີວິດຂອງພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດພໍ່ແມ່ ປະຊາຊົນບັນດາເຜົ່າພາຍໃນແຂວງຫຼວງນ້ຳທາຂອງພວກເຮົາ.

ທ່ານ ຄຳຟອງ ອິນມານີ ຍັງໃຫ້ຮູ້ຕື່ມວ່າ: ເພື່ອເປັນທິດທາງໃນການແກ້ໄຂບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນດັ່ງກ່າວ ຂ້າພະເຈົ້າ ຂໍສະເໜີໃຫ້ເພີ່ມທະວີນຳພາວຽກງານແນວຄິດຕິດພັນກັບການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດ ແລະ ອົງການປົກຄອງແຕ່ລະຂັ້ນ, ໂຄສະນາເຜີຍແຜ່ເຊື່ອມຊຶມດ້ວຍຫຼາຍຮູບການ, ຫຼາຍລະດັບ ໃຫ້ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດປະຊາຊົນລາວບັນດາເຜົ່າ, ຊາວໜຸ່ມຍິງ-ຊາຍ ພາຍໃນແຂວງ ຮັບຮູ້ເຂົ້າໃຈຢ່າງກວ້າງຂວາງ, ເລິກເຊິ່ງ ກ່ຽວກັບຜົນຮ້າຍຂອງບັນຫາຢາເສບຕິດ, ຂີ້ລັກງັດແງະ, ການຄ້າມະນຸດ ແລະ ປາກົດການຫຍໍ້ທໍ້ອື່ນໆ. ພ້ອມດຽວກັນນີ້, ກໍຊຸກຍູ້ສົ່ງເສີມໃຫ້ຊາວໜຸ່ມຍິງ-ຊາຍ ຮຽນຈົບຊັ້ນຕ່າງໆ ໂດຍສະເພາະໃນເມື່ອຮຽນຈົບຊັ້ນມັດທະຍົມຕົ້ນ ຫຼື ມັດທະຍົມສົມບູນແລ້ວ ຄວນສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ເຂົາເຈົ້າໄດ້ຮຽນຕໍ່ຊັ້ນວິຊາຊີບ ໃນຂັ້ນມະຫາວິທະຍາໄລ, ໂຮງຮຽນອະຊີວະສຶກສາ ທັງພາຍໃນ ແລະ ຕ່າງປະເທດ ຕາມເງື່ອນໄຂຕົວຈິງ, ສ້າງໃຫ້ເຂົາເຈົ້າມີວຽກເຮັດງານທຳ, ມີລາຍໄດ້ ບໍ່ຕົກເປັນເຫຍື່ອຂອງການຄ້າມະນຸດ ແລະ ບັນຫາໄພສັງຄົມຕ່າງໆ.

ຊຸກຍູ້ສົ່ງເສີມ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍຂອງລັດ, ໃຫ້ເອົາໃຈໃສ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍກຳນົດໄວ້, ບໍ່ສວຍໃຊ້ຊ່ອງຫວ່າງຂອງກົດໝາຍເພື່ອຜົນປະໂຫຍດໃດໜຶ່ງ; ບັນດາພະແນກການ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ພ້ອມດ້ວຍທຸກພາກສ່ວນກ່ຽວຂ້ອງ ຈົ່ງເອົາໃຈໃສ່ຄຸ້ມຄອງຮ້ານແລກປ່ຽນເງິນຕາ, ການຊື້-ຂາຍເປັນສະກຸນເງິນກີບ, ຄຸ້ມຄອງລາຄາສິນຄ້າ ໃຫ້ຢູ່ໃນຂອບເຂດຂອງນິຕິກຳໃຕ້ກົດໝາຍ ສ້າງເງື່ອນອຳນວຍຄວາມສະດວກ ເປັນຕົ້ນແມ່ນການສະໜອງສິນເຊື່ອຂອງບັນດາທະນາຄານພາຍໃນແຂວງ ໃຫ້ກວ້າງຂວາງ ເພື່ອສົ່ງເສີມຊາວກະສິກອນດຳເນີນການປູກຝັງ-ລ້ຽງສັດ, ຜະລິດເປັນສິນຄ້າຮັບປະກັນດ້ານສະບຽງອາຫານສູ່ທ້ອງຕະຫຼາດພາຍໃນໃຫ້ພຽງພໍ, ສົ່ງອອກຕ່າງແຂວງ, ຕ່າງປະເທດ ເພື່ອຫຼຸດຜ່ອນການນຳເຂົ້າສິນຄ້າທີ່ບໍ່ຈຳເປັນ ທັນມາຊົມໃຊ້ສິນຄ້າພາຍໃນໃຫ້ແຂງແຮງ.

## ສະມາຊິກສະພາປະຊາຊົນແຂວງອັດຕະປື ພົບປະຜູ້ມີສິດເລືອກຕັ້ງຢູ່ບ້ານໃຫຍ່ອຸດົມ

(ສພຊ) ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງໄຊເສດຖາ ແຂວງອັດຕະປື ໄດ້ພົບປະຢ້ຽມຢາມຖາມຂ່າວປະຊາຊົນຜູ້ມີສິດເລືອກຕັ້ງ ຢູ່ບ້ານໃຫຍ່ອຸດົມ ເມືອງໄຊເສດຖາ ເມື່ອບໍ່ດົນມານີ້ ນຳໂດຍທ່ານ ອຸດສະຫະ ກົມມະເມືອງ ຫົວໜ້າໜ່ວຍສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງໄຊເສດຖາ ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ແລະ ພະນັກງານວິຊາການຕິດຕາມ, ມີອົງການຈັດຕັ້ງບ້ານ ຕະຫຼອດຮອດປະຊາຊົນຜູ້ມີສິດເລືອກຕັ້ງໃຫ້ການຕ້ອນຮັບ ແລະ ເຂົ້າຮ່ວມທັງໝົດ 120 ຄົນ ຍິງ 62 ຄົນ.




ໃນໂອກາດນີ້, ທ່ານ ບຸນຍົ ໄຊວົງຊາຍ ຮອງນາຍບ້ານໃຫຍ່ອຸດົມ ເມືອງໄຊເສດຖາ ແຂວງອັດຕະປື ໄດ້ລາຍງານສະພາບລວມໂດຍຫຍໍ້ຂອງບ້ານ ເຊິ່ງຕັ້ງຢູ່ລຽບຕາມລຳນ້ຳເຊຊູ ຫ່າງຈາກເທສະບານເມືອງໄຊເສດຖາ 18 ກິໂລແມັດ, ມີຄອບຄົວທັງໝົດ 834 ຄອບຄົວ, ມີ 710 ຫຼັງຄາເຮືອນ, ພົນລະເມືອງ 3.249 ຄົນ, ມີແຮງງານສົມບູນ 1.593 ຄົນ ຍິງ 306 ຄົນ, ແຮງງານສຳຮອງ 1.249 ຄົນ, ລວມມີ 3 ຄຸ້ມ: ຄຸ້ມບຸ່ງຫວາຍ, ຄຸ້ມໝາກເຂືອ ແລະ ຄຸ້ມດອນງິ້ວ, ປະຊາຊົນມີມູນເຊື້ອດຸໝັ່ນໃນການອອກແຮງງານ ຖືເອົາອາຊີບເຮັດນາປູກເຂົ້າ ເປັນອາຊີບຕົ້ນຕໍ, ການປູກຝັງລ້ຽງສັດ ເປັນອາຊີບສຳຮອງ, ມີເນື້ອທີ່ປູກເຂົ້ານາປີທັງໝົດ 797,7 ເຮັກຕາ ຄາດຄະເນຜົນໄດ້ຮັບ 1.755 ໂຕນ ສາມາດກຸ້ມກິນ ແລະ ແຮໄວ້, ເນື້ອທີ່ປູກມັນຕົ້ນ 15 ເຮັກຕາ ຄາດຄະເນຜົນຜະລິດ 88.543 ໂຕນ ສະເລ່ຍລາຍຮັບຈາກມັນຕົ້ນ 104,8 ລ້ານກີບ. ພ້ອມນີ້, ໄດ້ເປີດໂອກາດໃຫ້ປະຊາຊົນຜູ້ມີສິດເລືອກຕັ້ງປະກອບຄວາມຄິດຄິດຄວາມເຫັນຄຳສະເໜີຕໍ່ກັບຊີວິດການເປັນຢູ່, ຄວາມຂັດຂ້ອງໝອງໃຈ ແລະ ປາກົດການຫຍໍ້ທໍ້ຕ່າງໆ ເຊິ່ງປະກອບມີຄຳສະເໜີຫຼາຍບັນຫາ ເປັນຕົ້ນແມ່ນປັບປຸງເສັ້ນທາງເຂົ້າບ້ານ, ຂະຫຍາຍນ້ຳລິນຄຸ້ມບຸ່ງຫວາຍ, ແກ້ໄຂນ້ຳບະດານທີ່ໃຊ້ລະບົບໂຊລາເຊວຢູ່ຄຸ້ມດອນງິ້ມໃຫ້ໄດ້ຊົມໃຊ້ ແລະ ບັນຫາອື່ນໆ.

ສະມາຊິກສະພາປະຊາຊົນແຂວງ ກໍໄດ້ອະທິບາຍບາງບັນຫາ ແລະ ບາງບັນຫາໄດ້ຮັບເອົາເພື່ອຈະນຳໄປປະສານສົບທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າແກ້ໄຂ. ຈາກນັ້ນ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຍັງໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງອັດຕະປື ເຊິ່ງໄດ້ຍົກໃຫ້ເຫັນເຖິງສະພາບລວມ ບັນດາວຽກງານຂອງລັດຖະບານ ແລະ ວຽກງານອົງການປົກຄອງແຂວງ ທີ່ໄດ້ພິຈາລະນາຮັບຮອງໃນກອງປະຊຸມ ເປັນຕົ້ນແມ່ນແຜນພັດທະນາເສດຖະກິດ-ສັງຄົມ, ວັດທະນະທຳ-ສັງຄົມ, ຍຸຕິທຳ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍົກໃຫ້ເຫັນພາລະບົດບາດ, ສິດ ແລະ ໜ້າທີ່ໃນການເຄື່ອນໄຫວຂອງສະພາປະຊາຊົນແຂວງ. ພ້ອມກັນນັ້ນ, ກໍໄດ້ໂອ້ລົມໃຫ້ປະຊາຊົນຈົ່ງມີຄວາມສາມັກຄີປອງດອງ, ມີປະຊາທິປະໄຕ ແລະ ເຊື່ອໝັ້ນຕໍ່ແນວທາງຂອງພັກ, ລະບຽບກົດໝາຍຂອງລັດ, ອະນຸລັກຮັກສາຮີດຄອງປະເພນີອັນດີງາມຂອງຊາດ-ຂອງເຜົ່າ, ຮັກສາມູນເຊື້ອດຸໝັ່ນໃນການອອກແຮງງານ ແລະ ສືບຕໍ່ອອກແຮງຄວາມດຸໝັ່ນຂະຫຍັນພຽນໃນການທຳການຜະລິດ ເປັນຕົ້ນດ້ານການປູກ-ການລ້ຽງໃຫ້ກຸ້ມຢູ່ກຸ້ມກິນ ແລະ ກາຍເປັນສິນຄ້າ ເພື່ອສ້າງເສດຖະກິດຄອບຄົວໃຫ້ດີຂຶ້ນ.

(ວິນັດ)

# ສະພາປະຊາຊົນແຂວງໄຊຍະບູລີ ປາຖະກະຖາ 6 ວັນປະຫວັດສາດສຳຄັນຂອງຊາດ, ຂອງພັກ



(ສພຊ) ພິທີປາຖະກະຖາ 6 ວັນປະຫວັດສາດສຳຄັນຂອງຊາດ, ຂອງພັກ ໄດ້ຈັດຂຶ້ນໃນຕອນເຊົ້າຂອງວັນທີ 8 ພະຈິກ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ ໂດຍການປາຖະກະຖາຂອງທ່ານ ນາງ ວິລະພອນ ທອງພິມ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງໄຊຍະບູລີ; ເຂົ້າຮ່ວມມີບັນດາ, ຫົວໜ້າ-ຮອງຫົວໜ້າຫ້ອງການ ຕະຫຼອດຮອດສະມາຊິກພັກ, ພະນັກງານເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ນາງ ວິລະພອນ ທອງພິມ ກຳມະການພັກແຂວງ ຮອງປະທານສະພາປະຊາຊົນແຂວງໄຊຍະບູລີ ໄດ້ປາຖະກະຖາ 6 ວັນປະຫວັດສາດສຳຄັນຂອງຊາດ ຂອງພັກ, ເຊິ່ງໄດ້ຍົກໃຫ້ເຫັນເຖິງມູນເຊື້ອແຫ່ງການກຳເນີດເຕີບໃຫຍ່ຂະຫຍາຍຕົວແຕ່ລະໄລຍະຂອງວັນສຳຄັນດັ່ງກ່າວ ເປັນຕົ້ນ, ວັນປະກາດເອກະລາດ ຄົບຮອບ 78 ປີ (12 ຕຸລາ 1945-12 ຕຸລາ 2023); ວັນສ້າງຕັ້ງການທູດ ຄົບຮອບ 78 ປີ (12 ຕຸລາ 1945-12 ຕຸລາ 2023); ວັນວິທະຍາສາດແຫ່ງຊາດ ຄົບຮອບ 36 ປີ (12 ຕຸລາ 1987- 2 ຕຸລາ 2023; ວັນຄູແຫ່ງຊາດ ຄົບຮອບ 29 ປີ (7 ຕຸລາ 1984 -7 ຕຸລາ 2023); ລະນຶກວັນສາກົນ ແລະ ສັບປະດາແຫ່ງຊາດ ເພື່ອລຶບລ້າງຄວາມທຸກຍາກຂອງ ສປປ ລາວ (17 ຕຸລາ 1987 ແລະ 17-24 ຕຸລາ 2023) ແລະ ວັນຊາດ ສປຈີນ ຄົບຮອບ 74 ປີ (1 ຕຸລາ 1949-1 ຕຸລາ 2023).

ທັງນີ້, ກໍເພື່ອໂຄສະນາສຶກສາອົບຮົມສະມາຊິກພັກ-ພະນັກງານ, ພາຍໃນສະພາປະຊາຊົນແຂວງໄຊຍະບູລີ, ເຫັນໄດ້ບົດບາດ, ຄວາມໝາຍຄວາມສຳຄັນ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມຂອງ 6 ວັນປະຫວັດສາດດັ່ງກ່າວເຂົ້າໃນພຶດຕິກຳຕົວຈິງ, ຝຶກຝົນຫຼໍ່ຫຼອມຕົນເອງ ເພື່ອຮັບໃຊ້ປະເທດຊາດ ຮັບໃຊ້ປະຊາຊົນ ແລະ ເພີ່ມທະວີຄວາມຮັບຜິດຊອບໃນການສ້າງຜົນງານ. ພ້ອມດຽວກັນນີ້, ກໍໃຫ້ຮູ້ເຖິງມູນເຊື້ອຕໍ່ສູ້ອັນດີງາມຂອງຊາດ ເຊິ່ງແມ່ນອີງການນຳພາຂອງການປະຕິວັດລາວ ເຫັນໄດ້ເຖິງຄວາມປີຊາສາມາດໃນການໂຄສະນາຂົນຂວາຍ ແລະ ນຳພາຕໍ່ສູ້ຈົນໄດ້ຮັບໄຊຊະນະ ແລະ ຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດວັນສຳຄັນດັ່ງກ່າວ ເພື່ອເຮັດໃຫ້ຊັ້ນຄົນຕ່າງໆໃນທົ່ວສັງຄົມມີສະຕິເຄົາລົບ ແລະ ປະຕິບັດກົດໝາຍແນໃສ່ບູລະນະລັດປະຊາທິປະໄຕປະຊາຊົນລາວ ໃຫ້ເປັນລັດແຫ່ງກົດໝາຍເທື່ອລະກ້າວ, ເຮັດໃຫ້ປະຊາຊົນຮັ່ງມີຜາສຸກ ປະເທດຊາດຮັ່ງມີເຂັ້ມແຂງ, ສັງຄົມມີຄວາມສາ ມັກຄີປອງດອງມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

**(ອິນທີ ຊຽວສີຟ້າ)**

# ສະພາປະຊາຊົນແຂວງຫຼວງນ້ຳທາ ຮ່ວມໃຈບໍລິຈາກເລືອດ

(ສພຊ) ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ຈັດກິດຈະກຳຮ່ວມໃຈກັນບໍລິຈາກເລືອດໂດຍບໍ່ຮຽກຮ້ອງສິ່ງຕອບແທນ ໃນຕອນເຊົ້າຂອງວັນທີ 9 ພະຈິກ 2023 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຫຼວງນ້ຳທາ ໂດຍການເປັນປະທານຮ່ວມຂອງທ່ານ ພັທ. ບຸນສົມ ທຳມະວົງ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງ ແລະ ທ່ານ ນາງ ພັດຊະນະ ບາສີ ຮອງຫົວໜ້າອົງການກາແດງແຂວງ; ມີຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ຜູ້ຕາງໜ້າຈາກອົງການກາແດງ ປະຈຳແຂວງຫຼວງນ້ຳທາ ໄດ້ຂຶ້ນກ່າວຈຸດປະສົງໃນການຈັດກິດຈະກຳຄັ້ງນີ້ ພ້ອມທັງໂຄສະນາປຸກລະດົມຈິດໃຈພະນັກງານ-ລັດຖະກອນທຸກທ່ານທີ່ເຂົ້າຮ່ວມກິດຈະກຳຄັ້ງນີ້ ຈົ່ງພ້ອມໃຈກັນບໍລິຈາກເລືອດເພື່ອເປັນການຊ່ວຍເຫຼືອສັງຄົມ, ຜ່ານມາດຖານເງື່ອນໄຂຂອງຜູ້ທີ່ຈະບໍລິຈາກເລືອດ




ແລະ ສິດທີ່ຜູ້ບໍລິຈາກເລືອດທີ່ຈະໄດ້ຮັບ, ທັງນີ້ ສູນບໍລິຈາກເລືອດກໍໄດ້ຖືເອົາວຽກງານການປຸກລະດົມບໍລິຈາກເລືອດແບບສະໝັກໃຈ ບໍ່ຮຽກຮ້ອງສິ່ງຕອບແທນ ເປັນບູລິມະສິດສຳຄັນອັນໜຶ່ງ ໂດຍມີການຈັດຕັ້ງເຄື່ອນໄຫວຂົນຂວາຍຜູ້ບໍລິຈາກເລືອດດ້ວຍຫຼາຍຮູບການ ແລະ ຈັດຕັ້ງເຄື່ອນໄຫວຮັບບໍລິຈາກເລືອດຮ່ວມກັບການຈັດຕັ້ງ ແລະ ຊຸມຊົນຕ່າງໆຈຳນວນໜຶ່ງ ແຕ່ເລືອດທີ່ໄດ້ມານັ້ນຍັງບໍ່ພຽງພໍ ສາເຫດຕົ້ນຕໍກໍຍ້ອນວ່າຈຳນວນຜູ້ບໍລິຈາກເລືອດ ຍັງມີຈຳກັດ ຫຼາຍຄົນຍັງຢ້ານກົວຕໍ່ການບໍລິຈາກເລືອດ ແລະ ອື່ນໆ.

ໂອກາດດັ່ງກ່າວ, ທ່ານ ພັທ. ບຸນສົມ ທຳມະວົງ ໄດ້ຍົກໃຫ້ເຫັນເຖິງບົດບາດຄວາມສຳຄັນຂອງການບໍລິຈາກເລືອດ ເຊິ່ງເປັນການເສຍສະຫຼະຊ່ວຍເຫຼືອສັງຄົມເພື່ອນມະນຸດດ້ວຍກັນທີ່ຍັງລໍຄອຍການຊ່ວຍເຫຼືອ, ທັງຊຸກຍູ້, ປຸກລະດົມພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ໃຫ້ພ້ອມໃຈກັນບໍລິຈາກເລືອດເພື່ອຊ່ວຍເຫຼືອສັງຄົມ.

ການຈັດກິດຈະກຳບໍລິຈາກເລືອດຄັ້ງນີ້ ແມ່ນຈະນຳໄປຊ່ວຍເຫຼືອຄົນເຈັບທີ່ຕ້ອງການເລືອດ ເພື່ອໃຫ້ເກີດປະໂຫຍດສູງສຸດຕໍ່ສັງຄົມ.

ການບໍລິຈາກເລືອດເປັນສິ່ງທີ່ປະເສີດ, ການບໍລິຈາກເລືອດ ແມ່ນການສ້າງບຸນກຸສົນອັນຍິ່ງໃຫຍ່ຂອງທ່ານ ເພາະວ່າທ່ານໄດ້ຊ່ວຍກອບກູ້ເອົາຊີວິດຂອງຄົນຜູ້ທີ່ກຳລັງຈະສິ້ນຫວັງໃຫ້ມີຊີວິດກັບຄືນມາ.

**(ນາງ ວັນນີ ແຝງບົວວັນ)**

# ເຜີຍແຜ່ແນະນຳ ການປະເມີນຜົນການຈັດຕັ້ງປະຕິບັດ ວຽກງານ 3 ສ້າງ ປະຈຳປີ 2023

(ສພຊ) ໂດຍປະຕິບັດຕາມແຈ້ງການຂອງພະແນກພາຍໃນແຂວງສາລະວັນ ສະບັບເລກທີ 36/ພນຂ, ລົງວັນທີ 15 ຕຸລາ 2023 ກ່ຽວກັບການສັງລວມລາຍງານຜົນປະເມີນການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ (ວຽກງານ 3 ສ້າງ) ປະຈຳປີ 2023 ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍ ແລະ ທັນຕາມກຳນົດເວລາ; ທ້າຍເດືອນຕຸລາຜ່ານມາ, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມເຜີຍແຜ່ແນະນຳ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ປະຈຳປີ 2023 ພາຍໃນສະພາປະຊາຊົນແຂວງ ໂດຍການເປັນປະທານກອງປະຊຸມຂອງທ່ານ ນາງ ສູນໄຖ ໄຊຍະ



ແສງ ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີຄະນະປະຈຳ, ຄະນະກຳມະການ, ເລຂາທິການ, ບັນດາຫົວໜ້າຂະແໜງ ແລະ ຕາງໜ້າຈາກພະແນກການເງິນແຂວງ.

ທັງນີ້, ກໍເພື່ອເປັນການເຜີຍແຜ່ແນະນຳກ່ຽວກັບວິທີການລະອຽດ ແລະ ຂັ້ນຕອນການປະເມີນ ແນໃສ່ໃຫ້ມີການຄົ້ນຄວ້າ, ສ້າງຄວາມຮັບຮູ້ຢ່າງຈະແຈ້ງ ແລະ ເຂົ້າໃຈທີ່ເອກະພາບ ຕາມການຈັດຕັ້ງປະຕິບັດຕົວຈິງໄປໃນລວງດຽວກັນ ຕາມຮ່າງແບບຟອມການປະເມີນຜົນ ທີ່ໄດ້ກຳນົດເອົາມາດຖານສ້າງແຂວງເປັນຫົວໜ່ວຍຍຸດທະສາດ ແລະ ຕົວຊີ້ບອກ, ດ້ານຫຼັກການປະເມີນຕ້ອງໃຫ້ສອດຄ່ອງກັບມະຕິ, ຄຳສັ່ງພັກ, ລະບຽບ ແລະ ກົດໝາຍຂອງລັດ ທັງຮັບປະກັນຄວາມຖືກຕ້ອງກັບຂໍ້ມູນກັບຕົວຈິງ ແລະ ມີຄວາມໂປ່ງໃສ ສາມາດຢັ້ງຢືນລະດັບຄາດໝາຍໃນແຕ່ລະດ້ານໄດ້ຢ່າງສົມເຫດສົມຜົນ.

ວາລະຂອງກອງປະຊຸມ, ທ່ານ ສີທາ ພັດທະຟອງ ວິຊາການຂະແໜງຈັດຕັ້ງ, ບໍລິຫານ ແລະ ຄຸ້ມຄອງບັນຊີ ພະແນກການເງິນແຂວງ ທັງເປັນກອງເລຂາ ໄດ້ຂຶ້ນຜ່ານເອກະສານແຈ້ງການຂອງພະແນກພາຍໃນແຂວງສາລະວັນ ສະບັບເລກທີ 36/ພນຂ, ລົງວັນທີ 15 ຕຸລາ 2023 ກ່ຽວກັບການສັງລວມລາຍງານຜົນປະເມີນການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ (ວຽກງານ 3 ສ້າງ) ປະຈຳປີ 2023 ພ້ອມທັງອະທິບາຍວິທີການ ແລະ ຫຼັກການປະເມີນຜົນຕາມຮ່າງແບບຟອມທີ່ກຳນົດ ມາດຖານສ້າງແຂວງເປັນຫົວໜ່ວຍຍຸດທະສາດ 7 ດ້ານ ແລະ 66 ຕົວຊີ້ບອກ ເປັນຕົ້ນແມ່ນມາດຕະຖານຫົວໜ່ວຍຍຸດທະສາດດ້ານການກໍ່ສ້າງພັກ ແລະ ພະນັກງານ, ຫົວໜ່ວຍຍຸດທະສາດດ້ານການປົກຄອງບໍລິຫານລັດ, ຫົວໜ່ວຍຍຸດທະສາດໃນການຊຸກດັນການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ, ຫົວໜ່ວຍຍຸດທະສາດດ້ານການການເງິນຂອງປະເທດ, ຫົວໜ່ວຍຍຸດທະສາດດ້ານການຄຸ້ມຄອງ, ຂຸດຄົ້ນ ແລະ ນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດ, ຊັບສິນຂອງລັດ, ພື້ນຖານໂຄງລ່າງດ້ານເສດຖະກິດ-ສັງຄົມ, ພື້ນຖານວັດຖຸເຕັກນິກ ແລະ ປົກປັກຮັກສາສິ່ງແວດລ້ອມ, ຫົວໜ່ວຍຍຸດທະສາດດ້ານການຄຸ້ມຄອງວັດທະນະທຳ-ສັງຄົມ ແລະ ການພັດທະນາຊັບພະຍາກອນມະນຸດ, ຫົວໜ່ວຍຍຸດທະສາດດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທີ່ເຂັ້ມແຂງ, ແຕ່ລະດ້ານຕ້ອງບັນລຸ 80 ສ່ວນຮ້ອຍຂຶ້ນໄປ ໂດຍທຽບໃສ່ຕົວຊີ້ບອກທັງໝົດເປັນ 100 ສ່ວນຮ້ອຍ ເພື່ອເປັນບ່ອນອີງໃຫ້ສະພາປະຊາຊົນແຂວງ ນຳໄປຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ປະສິດທິຜົນ ແລະ ທັນກຳນົດເວລາ; ຈາກນັ້ນ, ຜູ້ທີ່ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລືບາງບັນຫາທີ່ຍັງບໍ່ທັນໄດ້ເປັນເອກະພາບຮ່ວມກັນຢ່າງເປັນເຈົ້າການ, ຕອນທ້າຍກໍ່ຮັບຟັງການໂອ້ລົມຈາກປະທານກອງປະຊຸມ ເພື່ອເປັນທິດຊີ້ນຳໃນການຈັດຕັ້ງປະຕິບັດການເມີນຜົນວຽກງານ 3 ສ້າງຕື່ມອີກ.

**(ດີລຳພົນ ພົມມະຈັນ)**






# ກົດໝາຍ ວ່າດ້ວຍຄວາມປອດໄພຂອງເຂື່ອນ

ຕໍ່ຈາກສະບັບກ່ອນ

5. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານຄວາມປອດໄພຂອງເຂື່ອນ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 64 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງວຽກງານຄວາມປອດໄພຂອງ ເຂື່ອນຊົນລະປະທານ ແລະ ເຂື່ອນນ້ຳປະປາ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ຫຼື ປັບປຸງ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ ໂດຍປະສານສົມທົບກັບກະຊວງພະລັງງານ ແລະ ບໍ່ແຮ່ ແລ້ວນຳສະເໜີ ລັດຖະບານ ພິຈາລະນາ;

ອ່ານຕໍ່ສະບັບໜ້າ

## ຜົນການ...

(ຕໍ່ຈາກໜ້າ 1)

ຄືດັ່ງບັນດາທ່ານຜູ້ຊົມ ແລະຜູ້ຟັງໄດ້ຮັບຊາບແລ້ວວ່າ: ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນມາແຕ່ວັນທີ 31 ຕຸລາ 2023 ມາເຖິງມື້ນີ້ ເປັນເວລາ 16 ວັນເຕັມ. ກອງປະຊຸມ ໄດ້ຄົ້ນຄວ້າ ພິຈາລະນາ ຮັບຮອງເອົາເນື້ອໃນທີ່ສຳຄັນຫຼາຍບັນຫາ ເຊິ່ງບັນດາທ່ານຮອງປະທານສະພາແຫ່ງຊາດ ທີ່ຊີ້ນຳແຕ່ລະຂົງເຂດ ໄດ້ມີການຖະແຫຼງຂ່າວໃຫ້ບັນດາທ່ານຊາບແລ້ວ. ສະເພາະວຽກງານການສ້າງ ແລະ ປັບປຸງກົດໝາຍ ໄດ້ເລີ່ມພິຈາລະນາແຕ່ວັນທີ 10-20 ພະຈິກ 2023 ນີ້ ເຊິ່ງກອງປະຊຸມໄດ້ສຸມໃສ່ປະກອບຄວາມເຫັນໃສ່ເນື້ອໃນແຕ່ລະຮ່າງກົດໝາຍຢ່າງຫຼາກຫຼາຍ, ກົງໄປກົງມາ, ລະອຽດ ແລະ ຖີ່ຖ້ວນ. ຫຼັງຈາກນັ້ນ, ຄະນະຮັບຜິດຊອບປັບປຸງແຕ່ລະຮ່າງກົດໝາຍ ໄດ້ມີການປັບປຸງບັນດາຮ່າງກົດໝາຍທີ່ນຳສະເໜີຕໍ່ກອງປະຊຸມດ້ວຍຄວາມຮັບຜິດຊອບສູງ ຕາມຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ.

ໃນຕອນບ່າຍຂອງວັນທີ 20 ພະຈິກ 2023 ນີ້, ບັນດາທ່ານສະມາຊິກສະພາແຫ່ງຊາດໄດ້ພ້ອມກັນລົງຄະແນນສຽງຮັບຮອງເອົາບັນດາກົດໝາຍດ້ວຍການເຫັນດີເປັນສຽງສ່ວນຫຼາຍ ໃນນີ້, ມີກົດໝາຍສ້າງໃໝ່ 1 ສະບັບ ແລະ ປັບປຸງ 6 ສະບັບ ເຊິ່ງມີລາຍລະອຽດດັ່ງນີ້:

+ ກົດໝາຍສ້າງໃໝ່ ມີ 1 ສະບັບ:

ກົດໝາຍວ່າດ້ວຍ ການຮັກສາສຸຂະພາບຂັ້ນຕົ້ນ, ກະຊວງສາທາລະນະສຸກເປັນຜູ້ສະເໜີ, ໄດ້ຮັບຄະແນນສຽງເຫັນດີ 97,36 %;

+ ກົດໝາຍສະບັບປັບປຸງ ມີ 6 ສະບັບ:

1) ກົດໝາຍວ່າດ້ວຍລະບົບການຊຳລະ (ສະບັບປັບປຸງ), ທະນາຄານແຫ່ງ ສປປ ລາວ ເປັນຜູ້ສະເໜີ, ໄດ້ຮັບຄະແນນສຽງເຫັນດີ 99,3 %;

2) ກົດໝາຍວ່າດ້ວຍການບັນຊີ (ສະບັບປັບປຸງ) ເຊິ່ງແມ່ນກະຊວງການເງິນ ເປັນຜູ້ສະເໜີ, ໄດ້ຮັບຄະແນນສຽງເຫັນດີ 99,34 %;

3) ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ເຊິ່ງແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ສະເໜີ, ໄດ້ຮັບຄະແນນສຽງເຫັນດີ 98,02 %;

4) ກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ) ເຊິ່ງແມ່ນກະຊວງສາທາລະນະສຸກ ເປັນຜູ້ສະເໜີ, ໄດ້ຮັບຄະແນນສຽງເຫັນດີ 96,6 %;

5) ກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ເຊິ່ງແມ່ນກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ສະເໜີ, ໄດ້ຮັບຄະແນນສຽງເຫັນດີ 95,42 %;

6) ກົດໝາຍວ່າດ້ວຍຜູ້ພິພາກສາ (ສະບັບປັບປຸງ) ເຊິ່ງແມ່ນສານປະຊາຊົນສູງສຸດເປັນຜູ້ສະເໜີ, ໄດ້ຮັບຄະແນນສຽງເຫັນດີ 95,36 %.

ການພິຈາລະນາ ແລະ ຮັບຮອງເອົາກົດໝາຍ ຈຳນວນ 7 ສະບັບນີ້ ແມ່ນຜົນສຳເລັດທີ່ສຳຄັນໃນການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025, ທັງເປັນການປະກອບສ່ວນສຳຄັນໃນການປັບປຸງ ແລະ ເປັນການເພີ່ມເຄື່ອງມືໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຂອງປະເທດເຮົາ ໃຫ້ເປັນລະບົບຄົບຊຸດຂຶ້ນຕື່ມເພື່ອແນໃສ່ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຊາດ, ຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ແລະ ປະຊາຊົນລາວບັນດາເຜົ່າ, ສາມາດສະກັດກັ້ນ ແລະ ຕ້ານບັນດາປາກົດການຫຍໍ້ທໍ້ ທີ່ເປັນພຶດຕິກຳລະເມີດກົດໝາຍຢູ່ໃນສັງຄົມ ໃຫ້ນັບມື້ນັບຫຼຸດລົງ, ປະກອບສ່ວນໃນການສ້າງລັດເຮົາໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍໃຫ້ເຂັ້ມງວດຂຶ້ນ.

ບັນດາກົດໝາຍເຫຼົ່ານັ້ນ ເຖິງວ່າໄດ້ຮັບຮອງເອົາດ້ວຍຄະແນນສູງແລ້ວກໍຕາມ, ແຕ່ກຳມາທິການກົດໝາຍສະພາແຫ່ງຊາດ ຍັງຈະໄດ້ສືບຕໍ່ສົມທົບກັບບັນດາກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ, ຄະນະຮັບຜິດຊອບໃນການສ້າງ ແລະ ປັບປຸງແຕ່ລະກົດໝາຍ ແລະ ພາກສ່ວນທີ່ກ່ຽວຂ້ອງຈະໄດ້ສືບຕໍ່ປັບປຸງ, ຮຽບຮຽງໃຫ້ສຳເລັດສົມບູນ ເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ກ່ອນສະເໜີທ່ານປະທານປະເທດ ພິຈາລະນາ ອອກລັດຖະດຳລັດປະກາດໃຊ້ຢ່າງເປັນທາງການ ຕາມກົດໝາຍທີ່ກຳນົດໄວ້.

ຂ້າພະເຈົ້າ ຂໍຖືໂອກາດນີ້ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຂໍສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ໄດ້ເອົາໃຈໃສ່ປະກອບຄຳຄິດຄຳເຫັນຢ່າງຕັ້ງໜ້າ, ກົງໄປກົງມາ ເພື່ອໃຫ້ບັນດາກະຊວງ, ອົງການ ໄດ້ສຸມໃສ່ໃນການສ້າງ ແລະ ປັບປຸງກົດໝາຍ ໃຫ້ມີຄວາມຮັດກຸມ, ຈະແຈ້ງ, ມີຄຸນນະພາບ ເຊິ່ງສະແດງອອກໃນຜົນການຮັບຮອງເອົາບັນດາກົດໝາຍ ດັ່ງທີ່ຂ້າພະເຈົ້າໄດ້ຖະແຫຼງໄປມື້ກີ້ນີ້ແລ້ວ. ສ່ວນກົດໝາຍວ່າດ້ວຍເຂດເສດຖະກິດພິເສດ ທີ່ກອງປະຊຸມໄດ້ນຳມາພິຈາລະນານັ້ນ, ກອງປະຊຸມໄດ້ສະເໜີໃຫ້ລັດຖະບານ ສືບຕໍ່ປັບປຸງບາງຈຸດຕື່ມ ແລະ ສະເໜີຕໍ່ກອງປະຊຸມ ເທື່ອທີ 7 ໃນປີຕໍ່ມາເພື່ອພິຈາລະນາ.

## ປະທານສະພາ...

(ຕໍ່ຈາກໜ້າ 1)

ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ເປັນມູນເຊື້ອເປັນເວລາຍາວນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກູບາ ໃຫ້ໄດ້ຮັບການເສີມຂະຫຍາຍ ແລະ ນັບມື້ນັບເຂົ້າສູ່ລວງເລິກ. ພ້ອມນັ້ນ, ກໍໄດ້ແຈ້ງສະພາບການພົ້ນເດັ່ນຂອງ ສປປ ລາວ ໃຫ້ສະຫາຍ ແລະ ຄະນະຊາບວ່າ: ເຖິງວ່າສະພາບການພາກພື້ນ ແລະ ສາກົນ ຍັງສືບຕໍ່ຜັນແປຢ່າງໄວວາ, ສັບສົນ ແລະຄາດເດົາໄດ້ຍາກ, ອັນເປັນການກະທົບຕໍ່ການພັດທະນາເສດຖະກິດຂອງຫຼາຍປະເທດໃນໂລກ, ສະເພາະ ສປປ ລາວ ກໍມີຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ບວກກັບຜົນກະທົບຂອງພະຍາດໂຄວິດ-19 ເຮັດໃຫ້ເກີດມີບັນຫາໄພເງິນເຟີ້, ລາຄາສິນຄ້າເພີ່ມຂຶ້ນ, ອັດຕາແລກປ່ຽນເໜັງຕີງແຮງ, ຊີວິດການເປັນຢູ່ຂອງພະນັກງານ, ລັດຖະກອນ ໄດ້ຮັບຜົນກະທົບບໍ່ໜ້ອຍ. ຕໍ່ໜ້າສະພາບການດັ່ງກ່າວ ພັກ, ລັດຖະບານ ແລະ ສະພາແຫ່ງຊາດ ກໍ່ໄດ້ເອົາໃຈໃສ່ຊີ້ນຳ-ນຳພາ, ປຸກລະດົມທົ່ວປວງຊົນເຂົ້າຮ່ວມການພັດທະນາປະເທດ ຕາມມະຕິຂອງກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ແລະ ປະຕິບັດບັນດາມາດຕະການຕ່າງໆ ສາມາດເຮັດໃຫ້ ສປປ ລາວ ຍັງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດ ສືບຕໍ່ຂະຫຍາຍໂຕໃນທາງບວກ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ ຄ່ອຍໆໄດ້ຮັບການແກ້ໄຂດີຂຶ້ນເປັນກ້າວໆ; ປັດຈຸບັນນີ້, ສປປ ລາວ ພວມສຸມໃສ່ປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ເຊິ່ງໄດ້ປະຕິບັດມາ 3 ປີ ແລະ ໄດ້ບັນລຸຜົນສຳເລັດໃນຫຼາຍດ້ານ; ໄດ້ເອົາໃຈໃສ່ປະຕິບັດນະໂຍບາຍເຊື່ອມໂຍງເຊື່ອມຈອດ ເພື່ອຫັນປ່ຽນຈາກເປັນປະເທດ ບໍ່ມີທາງອອກສູ່ທະເລ ເປັນປະເທດເຊື່ອມຈອດໃນພາກພື້ນ ແລະ ສາກົນ ໂດຍຖືເອົາເສັ້ນທາງລົດໄຟດ່ວນລາວ-ຈີນ ເປັນທ່າແຮງໃນການຂົນສົ່ງສິນຄ້າ ແລະ ການທ່ອງທ່ຽວ ຈາກບັນດາປະເທດອາຊຽນ ໄປສູ່ ສປ ຈີນ ແລະ ປະເທດອື່ນໆ. ພ້ອມນີ້, ກໍມີແຜນຈະສ້າງເສັ້ນທາງລົດໄຟ, ທາງດ່ວນ ຈາກນະຄອນຫຼວງວຽງຈັນ ໄປສູ່ພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ ແລະ ເຊື່ອມຕໍ່ໃສ່ຣາຊະອານາຈັກກຳປູເຈຍ ແລະ ປະເທດໃກ້ຄຽງ ເພື່ອສາມາດນຳໃຊ້ທ່າແຮງດ້ານພູມສາດ ເປັນປະເທດເຊື່ອມຈອດໃນອານຸພາກພື້ນ. ສະເພາະໃນປີ 2024 ສປປ ລາວ ຈະເປັນປະທານອາຊຽນ, ສະພາແຫ່ງຊາດ ຈະເປັນປະທານໄອປາ 45 ແລະ ຈະເປີດປີທ່ອງທ່ຽວ ເພື່ອດຶງດູດນັກທ່ອງທ່ຽວເຂົ້າມາລາວໃຫ້ນັບມື້ນັບຫຼາຍຂຶ້ນ ແລະ ສ້າງລາຍຮັບໃຫ້ແກ່ປະເທດຊາດ.

ສະພາແຫ່ງຊາດລາວ ຊຸດທີ IX ໄດ້ຮັບການເລືອກຕັ້ງໃນປີ 2021 ແລະ ຈະມີອາຍຸການຮອດ ປີ 2025. ສປປ ລາວ ມີສະພາສອງຂັ້ນຄື: ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ. ສະພາແຫ່ງຊາດ ມີສະມາຊິກທັງໝົດ 164 ທ່ານ, ຍິງ 36 ທ່ານ ກວມເອົາ 21,95%, ສະພາປະຊາຊົນຂັ້ນແຂວງ ຊຸດທີ II ມີສະມາຊິກທັງໝົດ 492 ທ່ານ, ຍິງ 150 ທ່ານ ກວມເອົາ 30,48%.

ສະພາແຫ່ງຊາດ ຊຸດທີ IX ປັດຈຸບັນ ຢູ່ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງຕົນ ເຊິ່ງກອງປະຊຸມຄັ້ງນີ້ ໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມ ແຜນງົບປະມານ, ແຜນເງິນຕາຂອງລັດຖະບານ ແລະ ການປະຕິບັດໜ້າທີ່ ຂອງສະພາແຫ່ງຊາດ ກາງສະໄໝ, ຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ໄລຍະ 3 ປີ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງລັດຖະບານ, ອົງການຕຸລາການ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ ແລະ ສະພາແຫ່ງຊາດ; ໄດ້ພິຈາລະນາຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 8 ສະບັບ. ພິເສດ, ກອງປະຊຸມສະໄໝສາມັນຄັ້ງນີ້ ໄດ້ມີການທາບທາມຄວາມໄວ້ວາງໃຈ ໃນການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາແຫ່ງຊາດໄດ້ເລືອກຕັ້ງ ແລະຮັບຮອງເອົາການແຕ່ງຕັ້ງ; ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດອຳນາດປະຊາຊົນກູບາ ໃນໄລຍະຜ່ານມາ ໄດ້ມີການພົວພັນປົກກະຕິມາໂດຍຕະຫຼອດ ເຊິ່ງມີການແລກປ່ຽນການຢ້ຽມຢາມຂອງຜູ້ແທນລະດັບປະທານສະພາ ແລະ ຄະນະມິດຕະພາບລັດຖະສະພາ ລາວ-ກູບາ ນຳກັນ ຢ່າງເປັນປົກກະຕິ ມີທັງການພົບປະເຮັດວຽກແບບເຊິ່ງໜ້າ ແລະ ແບບທາງໄກ, ມີການຈັດກອງປະຊຸມປາຖະກະຖາເລົ່າມູນເຊື້ອ ໃນໂອກາດອັນສຳຄັນຕ່າງໆ ເພື່ອທວນຄືນການພົວພັນຮ່ວມມືສອງປະເທດ, ມູນເຊື້ອການຕໍ່ສູ້ຂອງປະຊາຊົນກູບາ, ແລກປ່ຽນສະພາບການພົ້ນເດັ່ນໃນການພັດທະນາເສດຖະກິດ-ສັງຄົມໃຫ້ກັນຊາບ. ສອງຝ່າຍໄດ້ລົງນາມບົດບັນທຶກຊ່ວຍຈຳ (MOU) ວ່າດ້ວຍການຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດນຳກັນ ເພື່ອຮັດແໜ້ນ ແລະ ເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງສອງອົງການນິຕິບັນຍັດ ແລະ ປະກອບສ່ວນອັນສຳຄັນໃຫ້ແກ່ການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືອັນດີຍາວນານ ລະຫວ່າງ ສອງປະເທດ ໃຫ້ເຂົ້າສູ່ລວງເລິກ. ພ້ອມດຽວກັນນັ້ນ, ສະຫາຍປະທານສະພາແຫ່ງຊາດລາວ ຍັງຫວັງຢ່າງຍິ່ງວ່າ ສານປະຊາຊົນສູງສຸດ ສ. ກູບາ ຈະສືບຕໍ່ພົວພັນຮ່ວມມືກັບ ສານປະຊາຊົນສູງສຸດ ສປປ ລາວ ເພື່ອເພີ່ມພູນຄູນສ້າງການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກູບາ ໃຫ້ໄດ້ຮັບການເສີມຂະຫຍາຍ ແລະ ນັບມື້ນັບເຂົ້າສູ່ລວງເລິກ. ຖືໂອກາດນີ້ສະແດງຄວາມຂອບໃຈ ມາຍັງພັກ, ລັດ ກໍຄື ປະຊາຊົນກູບາອ້າຍນ້ອງ ທີ່ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອອັນລ້ຳຄ່າແກ່ພາລະກິດປະຕິວັດຂອງປະຊາຊົນລາວ ທັງໃນໄລຍະຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ກໍຄື ໄລຍະປົກປັກຮັກສາ ແລະ ສ້າງສາປະເທດຊາດໃນປັດຈຸບັນ.

ໃນຕອນທ້າຍ, ສະຫາຍປະທານສະພາແຫ່ງຊາດລາວ ໄດ້ອວຍພອນໃຫ້ສະຫາຍ ລູເບັນ ຣິມີກີໂອ ເຟີໂລ ພ້ອມດ້ວຍຄະນະ ຈົ່ງມີສຸຂະພາບແຂງແຮງ, ມີຄວາມຜາສຸກ ແລະ ມີຜົນສຳເລັດອັນຈົບງາມ ໃນການຢ້ຽມຢາມ ສປປ ລາວ ແລະ ເດີນທາງກັບດ້ວຍຄວາມສະຫວັດດີພາບ.




# ບຸນພະທາດຫຼວງ ກັບຄວາມສະອາດ, ສະຫງົບສຸກ...

# ດັ້ນກີບເມກ



ບຸນພະທາດຫຼວງປີນີ້ ຫຼາຍຄົນກໍຄິດວ່າຈະຄຶກຄື້ນກວ່າສອງສາມປີຜ່ານມາ ທີ່ພົບກັບພະຍາດໂຄວິດແຜ່ລະບາດ ນັກທ່ອງທ່ຽວ ແລະ ຄົນລາວທັງພາຍໃນ ແລະ ຕ່າງປະເທດ ຄົງຫາໂອກາດມາຮ່ວມບຸນຢ່າງຫຼວງຫຼາຍ ເຊິ່ງຈະຈັດຂຶ້ນລະຫວ່າງວັນທີ 23-27 ເດືອນພະຈິກ 2023 ນີ້. ດັ່ງນັ້ນ, ເມື່ອຄົນຈະມາຮ່ວມບຸນຫຼາຍກໍຍິ່ງຕ້ອງມີສະຕິລະວັງໂຕໃນການສັນຈອນໄປມາ ທັງຕ້ອງຮັບປະກັນຄວາມປອດໄພໃນບ້ານເຮືອນ ບໍ່ເຮັດແບບໄປໜ້າລືມຫຼັງ ຫຼື ໄດ້ເຕົ່າແຕ່ເສຍໝາ.

ຜູ້ຂຽນຄິດວ່າ: ການມີສະຕິລະວັງໂຕນັ້ນໝາຍຄວາມວ່າໃຫ້ລະວັງພວກມິດສາຊີບ ພວກຂີ້ລັກງັດແງະ ເພາະພວກນີ້ມັກສວຍໂອກາດລົງມືຕອນຄົນເຮົາຂາດສະຕິ ໃຜກໍມຸ່ງແຕ່ມ່ວນເມົາ; ບຸນທາດຫຼວງບາງປີຜ່ານມາ ປາກົດມີເຫດການທັງໄຟໄໝ້ເຮືອນຈາກການຈູດທູບທຽນບູຊາພະ ບາງປີຫຼັງງານບຸນກໍຈະເຫັນຂີ້ເຫຍື້ອປິວຕາມລົມ ເພາະຮູບແບບວິທີຈັດການກັບຂີ້ເຫຍື້ອຊັກຊ້າ ຄ້າຍກັບວ່າມີແຕ່ພວກຢາກກິນ ແຕ່ບໍ່ມີພວກຄິດຈະມ້ຽນຮັກສາໃຫ້ສະອາດ; ຄວາມສະຫງົບຮຽບຮ້ອຍແມ່ນຂຶ້ນກັບຄະນະກຳມະການ ແລະ ເຈົ້າໜ້າທີ່ຕ້ອງໄດ້ກວດກາເຂັ້ມງວດກັບຜູ້ສັນຈອນໄປມາ ເພາະພວກຄົນບໍ່ດີມັກສວຍໂອກາດເຂົ້າມາໃນຫຼາຍອາຊີບ ເຊິ່ງຜ່ານມາ ປອມແປງເປັນນັກບວດກໍມີເພື່ອເຂົາໄດ້ກໍ່ກວນຄວາມວຸ້ນວາຍ.

ບຸນທາດຫຼວງທຸກປີຖືກັບເດືອນ 12 ເພັງ, ດວງຈັນເຕັມດວງ ຄົນລາວພາກັນນຸ່ງສິ້ນໄປວຽນທຽນ ແລະ ໃສ່ບາດ ຕອນເຊົ້າມື້ສຸດທ້າຍ ເມື່ອເຮົາຕັ້ງໃຈໄປໄຫວ້ພະທາດຫຼວງ ກໍຄວນຄິດເອົາສະຕິປັນຍາ ຈາກບຸນປາງນີ້ໃຫ້ໄດ້ເຊັ່ນ ຈາກປິດສະໝາທຳ ທີ່ເວົ້າເຖິງ ປາລະມີ ທີ່ເປັນຄຸນນະທຳໃຫ້ຄົນບັນລຸຄວາມສຳເລັດໃນຊີວິດຈາກປັນຍາປາລະມີ, ທະນະປາລະມີ, ສັດຈະປາລະມີ... ອະທິຖານະປາລະມີ ທັງໝົດ 10 ປະການນັ້ນ ຄົນລາວຊາວພຸດຄວນຮູ້ໄວ້ແກ່ໃຈເປັນຄຸນນະທຳຊາວພຸດ.

ສັງລວມໄດ້ວ່າ ບຸນພະທາດຫຼວງຕ້ອງມີສະຕິ ຮອບຄອບ ແຍກມິດສັດຕູໃຫ້ອອກ, ຮັກສາຄວາມສະອາດ ຮັກສາກຽດສັກສີເປັນເມືອງພຸດ, ສ້າງນິໄສຮັກສາຄວາມສະອາດ ບໍ່ເຮັດແບບມີແຕ່ຜູ້ກິນ ແຕ່ບໍ່ມີຜູ້ມ້ຽນ!

# ບຸນກະຖິນ ແລະ ບຸນພະທາດ

ໂດຍ: ຜູ້ຊື່ນ

ຮີດຄອງປະເພນີລາວໄດ້ກຳເນີດມາແຕ່ສະໄໝບູຮານນະການ ແລະ ໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນສະໄໝເຈົ້າຟ້າງູ່ມມະຫາລາດເປັນຕົ້ນມາ ປະຊາຊົນລາວທຸກເຜົ່າສາມັກຄີກັນ, ຮ່ວມແຮງຮ່ວມໃຈກັນສ້າງປະເທດຊາດ, ສ້າງພື້ນຖານວັດທະນະທຳ, ສົ່ງເສີມພູມປັນຍາຂອງປະຊາຊົນ ເມື່ອສາສະໜາຈະເລີນຮຸ່ງເຮືອງຂຶ້ນມາ ສາສະໜາສະຖານໄດ້ກາຍເປັນສູນກາງທາງດ້ານວັດທະນະທຳ, ເປັນໂຮງຮຽນ, ເປັນສູນບຳລຸງຈິດໃຈ, ເປັນຫໍພິພິຕະພັນ ທັງເປັນບ່ອນທຳບຸນສິນກິນທານ; ພະສົງ-ສາມະເນນ ແລະ ປະຊາຊົນ ໄດ້ປະຕິບັດພາລະບົດບາດ ແລະ ໜ້າທີ່ສຳຄັນໃນການອະນຸຮັກ ແລະ ເຜີຍແຜ່ມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມໃນທ່າຕັ້ງໜ້າ ຈົນກາຍເປັນຊັບສົມບັດອັນລ້ຳຄ່າຂອງຊາດລາວເຮົາສືບມາເຖິງປັດຈຸບັນ.

ນັບແຕ່ມື້ແຮມ 1 ຄ່ຳ ເດືອນ 11 ຈົນຮອດວັນເພັງເດືອນ 12 ເປັນເວລາ 1 ເດືອນພໍດີ ໄລຍະນີ້ ທາງວິໄນສົງ ຮຽກວ່າ ຈີວະຣະກາລະສະໄໝ ແປວ່າໄລຍະເວລາເຮັດຜ້າຈີວອນ ຫຼື ຮຽກວ່າ ຈີວະຣະທານະສະໄໝ ແປວ່າ: ເວລາໃຫ້ຈີວອນ; ສ່ວນຄຳວ່າ «ກະຖິນ» ມີ 2 ຄວາມໝາຍຄື: ຄວາມໝາຍໃນທາງພາສາລາວແທ້ແປວ່າ ໄມ້ກັງ ຫຼື ໄມ້ຄຶງ ໄທເອີ້ນວ່າ: ໄມ້ສະດຶງ ຄື: ໄມ້ເຮັດໃຫ້ເຄັ່ງ; ໃນສະໄໝກ່ອນໆພຸ້ນ ບໍ່ມີຜ້າຈີວອນຂາຍຢ່າງຫຼວງຫຼາຍຢູ່ຕະຄືສະໄໝນີ້; ສະນັ້ນ,ພະພຸດທະເຈົ້າ ຈຶ່ງອະນຸຍາດໃຫ້ພະສົງຊອກຫາໃຫ້ຖືກຕ້ອງຕາມວິໄນສົງ ແລ້ວມາຫຍິບຕໍ່ເຂົ້າກັນ; ເວລາຫຍິບ ຈຳເປັນຕ້ອງໃຊ້ໄມ້ແບບ ຫຼື ໄມ້ຄຶງ; ການຫຍິບຜ້າຕາມໄມ້ຄຶງ ຈຶ່ງຮຽກວ່າ ຜ້າກະຖິນ; ອີກຄວາມໝາຍໃນຄຳນາມ ພາສາບາລີ ແປວ່າ ຜ້າທີ່ເຄນໃຫ້ພະສົງທີ່ຈຳວັດສາ ໝາຍຄວາມວ່າ ການເຮັດບຸນດ້ວຍການເອົາຜ້າໄປເຄນໃຫ້ຄູບາ ຫຼື ພະສົງຢູ່ໃນວັດ; ບຸນນີ້ຖືເປັນອານິສົງຜົນແຫ່ງບຸນຂອງພະສົງທີ່ຈຳວັດສາຕະຫຼອດ 3 ເດືອນເຕັມ ສົມຄວນຈະຕ້ອງໄດ້ຮັບກອງກະຖິນ (ຈຸລະກະຖິນ ຫຼື ມະຫາກະຖິນ).

ບຸກຄົນໃດມີສັດທາເຮັດກອງກະຖິນສ່ວນຕົວກໍໄດ້ ຖ້າຈະເຮັດກອງກະຖິນໄປວັດເພິ່ນໄປປັກສະຫຼາກໄວ້ ຫຼື ບອກລ່ວງໜ້າກ່ອນກາງພັນສາ; ຈາກນັ້ນ, ທາງຄະນະຝ່າຍສົງປະຈຳວັດ ກໍຈະໄດ້ຮັບກອງກະຖິນກ່ອນຈະຮັບກອງກະຖິນພະສົງຈະຫາລືກັນວ່າ ພະສົງອົງໃດຄວນຈະໄດ້ຮັບກອງກະຖິນ.

ນອກຈາກບຸນກະຖິນແລ້ວ, ເພິ່ນຍັງເຮັດບຸນໄຫວ້ທາດ ການເຮັດບຸນໄຫວ້ທາດນັບວ່າເປັນບຸນປາງໃຫຍ່ຄຶກຄື້ນມ່ວນຊື່ນ ແລະ ສຳຄັນຕໍ່ປະເທດຊາດບ້ານເມືອງຫຼາຍທີ່ສຸດ ແຕ່ກ່ອນປະຊາຊົນລາວເຮັດບຸນໄຫວ້ພະທາດຫຼາຍແຫ່ງເຊັ່ນ ພະທາດຫລວງວຽງຈັນ, ພະທາດໝາກໂມ (ວັດວິຊຸນ) ຫຼວງພະບາງ, ພະທາດອິງຮັງ ແລະ ພະທາດໂພ່ນ ແຂວງສະຫວັນນະເຂດ, ພະທາດສີໂຄດຕະບອງຢູ່ເມືອງເກົ່າ ແຂວງຄຳມ່ວນເປັນຕົ້ນ. ພະທາດຫຼວງວຽງຈັນສ້າງຂຶ້ນໃນປີ 1566 ຫຼັງຈາກພະເຈົ້າໄຊຍະເສດຖາທິລາດພັດທະນາເມືອງວຽງຈັນເປັນລາຊະທານີລ້ານຊ້າງໄດ້ 6 ປີ; ການເຮັດບຸນນະມັດສະການພະທາດຫຼວງວຽງຈັນ ນັບວ່າເປັນປະເພນີ ທີ່ສຳຄັນຢ່າງຍິ່ງ ທີ່ສືບຕໍ່ກັນມາໄດ້ຫຼາຍສະຕະວັດ ໂດຍມີພະມະຫາກະສັດອົງເປັນປະມຸກໃນສະໄໝຕ່າງໆ ມາເປັນປະທານພິທີປະຈຳທຸກໆປີບໍ່ຂາດ ສິ່ງທີ່ນຳມາສັກກາລະບູຊາໄຫວ້ພະທາດຫຼວງ ມີດອກໄມ້ທູບທຽນ, ສິ່ງສຳຄັນຂາດບໍ່ໄດ້ແມ່ນຜາສາດເຜິ້ງ ຄື: ມື້ຂຶ້ນ 13 ຄ່ຳ ເດືອນ 12 ເພິ່ນຈະເລີ່ມແຫ່ພະສາດຢູ່ວັດສີເມືອງ (ຫຼັກເມືອງ) ປະມານ 7 ໂມງແລງ, ມື້ຂຶ້ນ 14 ຄ່ຳ ມີພິທີຮັບນ້ຳໃຫຍ່ຢູ່ວັດອົງຕື້ ແລະ ມື້ຄ່ຳເພັງ ເດືອນ 12 ເປັນມື້ດຳເນີນພິທີສຸດທ້າຍ ຢູ່ພະທາດຫຼວງ ໂດຍການຕັກບາດຖວາຍທານຢ່າງຄຶກຄື້ນ.

ໃນສະໄໝບູຮານ ແລະ ສະໄໝຕ່າງໆ ຈົນສືບມາເຖິງສູ່ມື້ນີ້ ກ່ອນຈະເຖິງມື້ໄຫວ້ທາດຫຼວງ ໄດ້ມີການຄົບງັນມາກ່ອນແລ້ວ ຢ່າງໜ້ອຍ 5-7 ວັນ, ການຄົບງັນມີກິດຈະກຳກິລາ ແລະ ສິລະປະ-ວັນນະຄະດີຕາມປະເພນີ ມາຮອດສະໄໝນີ້ ພະທາດຫຼວງວຽງຈັນໄດ້ກາຍເປັນສັນຍະລັກຂອງຊາດ (ກາຊາດ) ອີກດ້ວຍ.




# ວິທີເຮັດວຽກ

## ພາກທີ 4

## ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)

ອັນນັ້ນ ມັນເປັນສິ່ງຫຼີກເວັ້ນໄດ້. ເລື່ອງນີ້ ມັນກໍເປັນຄືເຮືອນໜຶ່ງ ມີລູກໃພ້ຈ້າ, ລູກເຂີຍໂງ່ ມັນບໍ່ຫ່ອນຈະໄປເຊື່ອງອຳໄວ້ ບໍ່ໃຫ້ພີ່ນ້ອງລຸງຕາໄດ້ ແມ່ນວ່າຂອງເຮົາຫາກຢາກເຊື່ອງອຳຄົນທີ່ບໍ່ດີ ແລະ ເລື່ອງທີ່ບໍ່ດີດັ່ງກ່າວນັ້ນ ແລະ ກໍບໍ່ມີວິທີໃດຈະເຊື່ອງອຳໄດ້. ປະຊາຊົນເຄີຍຕິດຕໍ່ກັບພັກຂອງເຮົາເລື້ອຍໆ ຄົນຜູ້ຫ້າວຫັນກໍໄດ້ສະໜັບສະໜູນພັກຂອງເຮົາ ຫຼື ເຂົ້າຮ່ວມພັກຂອງເຮົາ ເຂົາເຈົ້າບໍ່ແມ່ນວ່າຈະເຫັນແຕ່ຄົນຜູ້ດີ ຫຼື ເລື່ອງທີ່ດີເທົ່ານັ້ນ ເຂົາເຈົ້າກໍເຫັນຄົນຊົ່ວ ເລື່ອງທີ່ຊົ່ວຢູ່ໃນພັກເຮົາອີກດ້ວຍ ເຂົາເຈົ້າເຫັນແນວນັ້ນ ອາດຈະຕື່ນ ແລະ ອາດຈະຖາມວ່າ ພັກນີ້ເປັນພັກທີ່ດີ, ສະມາຊິກຂອງພັກ ກໍລ້ວນແຕ່ແມ່ນຄົນດີ ເປັນຫຍັງຊ້ຳພັດມີຄົນໂລເລ ແລະ ມີເລື່ອງມືດມົນແນວນີ້.

ຄຳຖາມແນວນັ້ນ ຍິ່ງເຮັດໃຫ້ພວກເຮົາເພີ່ມທະວີຄວາມເອົາໃຈໃສ່ຂຶ້ນຕື່ມ, ເຮັດໃຫ້ພະນັກງານ ແລະ ສະມາຊິກພັກແຮ່ງຕັ້ງໃຈຮັກສາຕົນ ຮັກສາຕົວຂຶ້ນອີກ ແລະ ຕັ້ງໃຈຊັກຊວນ ແລະ ຊັກດຶງພວກຄົນທີ່ສະໜິດສະໜົມຕໍ່ພັກ ແລະ ພວກສະມາຊິກຂອງພັກເຮົາ ໃຫ້ລະມັດລະວັງ ຢ່າປ່ອຍໃຫ້ເລື່ອງຊົ່ວດັ່ງກ່າວນັ້ນຕິດພັນມາເຖິງຕົນ. ພ້ອມກັນນັ້ນ ພວກເຮົາກໍຕ້ອງຕອບຄຳຖາມຂອງພວກຄົນທີ່ກ່າວຂ້າງເທິງນັ້ນໃຫ້ຖືກ, ບໍ່ດັ່ງນັ້ນ ເຂົາເຈົ້າຈະໝົດຫວັງ ແລະ ທໍ້ຖອຍໃຈ.

ພວກເຮົາຈະຕອບວ່າແນວໃດ? ຄຳຕອບນັ້ນງ່າຍໆ ແລະ ເຂົ້າໃຈງ່າຍທີ່ສຸດຄື: ພັກຂອງພວກເຮົາ ບໍ່ແມ່ນວ່າຕົກມາແຕ່ຟ້າ, ມັນອອກມາຈາກສັງຄົມທີ່ມີຢູ່ດຽວນີ້. ເພາະສະນັ້ນ ເວົ້າທົ່ວໄປ, ສະມາຊິກສ່ວນຫຼາຍແມ່ນເປັນຄົນດີ, ແຕ່ວ່າມັນກໍຍັງມີຈຳນວນໜຶ່ງ ທີ່ຍັງບໍ່ທັນປະຖິ້ມນິດໄສບໍ່ດີ, ຄືຊອກຫາແຕ່ຜົນປະໂຫຍດສ່ວນຕົວ, ອວດອົ່ງທະນົງຕົວ, ຟູມເຟືອຍ ແລະ ອື່ນໆນັ້ນໄດ້ເຫື່ອ. ນິດໄສບໍ່ດີນັ້ນ ມັນມີມາແຕ່ເຫິງແລ້ວ, ເປັນຕົ້ນໃນຊົ່ວເວລາ 80 ປີ ທີ່ບ້ານເມືອງເຮົາຕົກເປັນຂີ້ຂ້າຂອງຕ່າງຊາດ. ນິດໄສຊົ່ວນັ້ນ ໄດ້ຕິດຢູ່ສະໝອງຂອງສະມາຊິກພວກເຮົາມາແຕ່ກ່ອນ, ເວລາເຂົ້າມາຢູ່ໃນພັກ ກໍຍັງນຳເອົາມັນເຂົ້າມານຳຢູ່.

ອ່ານຕໍ່ສະບັບໜ້າ...



# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ຂະໜົບທຳນຽມ | ຂະນົບທຳນຽມ |
| ຈົງຮັກພັກດີ | ຈົ່ງຮັກພັກດີ |
| ຈົ່ງຈະເລີນ | ຈົງຈະເລີນ |
| ຕະຫຼົ່ງ | ຕາລົ່ງ |
| ຕາຝັ່ງ | ຕະຝັ່ງ |
| ຕຳແໜ່ງ | ຕຳແນ່ງ |
| ທະນຸບຳລຸງ | ຖະນຸບຳລຸງ |
| ທະນຸຖະໜອມ | ຖະໜຸຖະໜອມ |



## ສຸກສະບາຍທາຍໂລດ

# ໝາກນອດ

ໂດຍ: ສາວແວ່ນ

ສະບັບນີ້, ເຮົາມີ 6 ປະໂຫຍດດີໆ ຂອງໝາກນອດ ມານຳສະເໜີໃຫ້ແກ່ບັນດາທ່ານໄດ້ຮັບຮູ້ນຳກັນເພາະເປັນໝາກໄມ້ພື້ນບ້ານຊະນິດໜຶ່ງທີ່ມີເອກກະລັກສະເພາະໂຕ ແລະ ມີລົດຊາດສົ້ມ ພຽງແຕ່ຕື່ມນ້ຳຕານ ຫຼື ເກືອເລັກໜ້ອຍ ກໍຈະກາຍເປັນອາຫານເພື່ອສຸຂະພາບໃນທັນທີ ແຕ່ມີໃຜຮູ້ບໍວ່າ ໝາກສີມ່ວງໆນີ້ ຊ່ວຍໃຫ້ສຸຂະພາບດີດັ່ງນີ້:



**1. ນອນຫຼັບສະບາຍ:** ເຖິງແມ່ນເວລາກິນ ຈະມີລົດສົ້ມຈົນຕາຍິບກໍຕາມ ແຕ່ເວລານອນກໍຊ່ວຍໃຫ້ນອນຫຼັບດີເຊັ່ນດຽວກັນ ເພາະໝາກນອດ ອຸດົມໄປດ້ວຍສານເຊລາໂທນິນ ທີ່ເປັນຮໍໂມນແຫ່ງຄວາມສະຫງົບ ຊ່ວຍຄວບຄຸມອາລົມໄປຈົນເຖິງຊ່ວຍໃຫ້ນອນຫຼັບສະບາຍ ລວມທັງຊ່ວຍຫຼຸດຄວາມຄຽດ, ໂສກເສົ້າ ແລະ ເບົາຫົວລົງ.

**2. ດູແລດວງຕາ:** ໝາກນອດ ມີສານຟາໂວນອຍ ເຊັ່ນ ເບຕາແຄໂລທີນ ລວມເຖິງວິຕາມິນເອ ທີ່ຊ່ວຍກຳຈັດອະນຸມູນອິດສະຫຼະ ທີ່ເປັນສາເຫດຂອງຄວາມແກ່ ແລະ ຜິວຍ່ອນຍານ ລວມທັງຊ່ວຍບຳລຸງສາຍຕາ ແລະ ປ້ອງກັນຄວາມເສຍຫາຍຂອງເຊວ.

**3. ໄກມະເຮັງ:** ວິຕາມິນເອ ນອກຈາກຈະຊ່ວຍບຳລຸງສາຍຕາແລ້ວ ຍັງຫຼຸດຄວາມສ່ຽງຂອງມະເຮັງປອດ ແລະ ໂພ້ງປາກນຳອີກ.

**4. ຊ່ວຍໃນການຂັບຖ່າຍ:** ໝາກນອດ ມີເສັ້ນໃຍຫຼາຍ ຊ່ວຍໃຫ້ການຂັບຖ່າຍສະດວກ ຊ່ວຍໃຫ້ຮູບຮ່າງດີ ແລະ ອີ່ມທ້ອງ.

**5. ປິ່ນປົວພະຍາດ:** ໝາກນອດ ມີວິຕາມິນຊີຫຼາຍ ເຊິ່ງເປັນໂຕຊ່ວຍສຳຄັນ ໃນການສ້າງລະບົບພູມຄຸ້ມກັນໃນຮ່າງກາຍ ໂດຍນັກວິທະຍາສາດໄດ້ຄົ້ນຄວ້າແລ້ວວ່າ ໝາກນອດ 100 ກຣາມ ບັນຈຸມີວິຕາມິນຊີ 36% ເຊິ່ງພຽງພໍກັບຄວາມຕ້ອງການຂອງຮ່າງກາຍໃນແຕ່ລະມື້.

**6. ຊ່ວຍໃຫ້ກະດູກແຂງແຮງ:** ໝາກນອດ ປະກອບດ້ວຍທາດແຄວຊຽມ ແລະ ຟອດຟໍລາດ ທີ່ເປັນຕົວຊ່ວຍສຳຄັນ ໃນການສ້ອມແປງກະດູກ ຊ່ວຍປ້ອງກັນພະຍາດກະດູກຜ່ອຍ ແລະ ກະດູກຫັກງ່າຍ.

**ຂໍ້ມູນຈາກ: www.sanook.com**

## ອາດ ກະວີລາວ

# ຢ່າຢ້ານ

**# ຫຼານເຈົ້ານ້ອຍ**

❊ ກອງປະຊຸມເປີດໃຫ້
ເປັນເວລາລົມກັນ
ມີຫຍັງກໍຄວນເວົ້າ
ບອກຂັ້ນເທິງຮັບຮູ້ ວ່າໝູ່ເຮົາລູກນ້ອງ

ເຮົາກ່າວບັນຫາ
ດັ່ງເດີມດາກີ້
ເອົາມາລະບາຍອອກ
ມີແນວຂ້ອງຂອດຄາ ທ່ານເອີຍ!

❊ ຫຼາຍບັນຫາຍັງບໍ່ຮູ້
ເພາະວ່າພົວພັນເຖິງ
ຈຶ່ງໄດ້ນຳສະເໜີຂຶ້ນ
ບັນຫາຄົງເຄີຍໄດ້

ວິທີເຄີຍຄາຍມັນ
ກ່ຽວທາງເທິງພ້ອມ
ກອງປະຊຸມສະພາໃຫຍ່
ໂດຍດ້ານດັ່ງຫວັງ

❊ ຊຸມໝູ່ເຮົາຈຶ່ງຕັ້ງ
ລໍເບິ່ງຕົວແທນເຮົາ
ເອົາບັນຫາຄົງຄ້າງ
ນຳສະເໜີຮອດຂັ້ນ-

ໃຈຈໍ່ຈຳຈໍ່
ຢູ່ກອງປະຊຸມເວົ້າ
ຄາໃຈ ມາຕະຫຼອດ
ເທິງຮູ້ຮ່ວມນຳ

❊ ຢາກຟັງຄຳທີ່ໄດ້
ວ່າຊິມີຄຳເຫັນ
ວ່າຈະໄປຕາງໜ້າ
ລໍຄອຍຟັງທ່ານເວົ້າ

ກຽມກ່ອນມາປະຊຸມ ສສຊ ເອີຍ
ດັ່ງສັນຍາໄວ້
ໃນປະຊຸມຈາກ່າວ
ສະເໜີຂຶ້ນຢູ່ສະພາ

❊ ເປັນເພາະນາຍບໍ່ກ້າ
ຫຼືມີໃຜມາດຶງ
ຈຶ່ງບໍ່ເຫັນນາຍຂຶ້ນ
ຫຼືບັງເອີນປ່ວຍໄຂ້

ຫຼືວ່າແນວໃດ
ຍາດໄມຄ໌ໂຄໂຟນໄວ້
ສະເໜີຫຍັງນຳເພິ່ນ
ໄອເວົ້າບໍ່ດັງ..ບໍນໍ?

ຫຼືວ່າ ນາຍຫາກຢ້ານ
ຢ້ານມີໃຜມາຖອຍ
ຕອນນັ່ງຄືນຊິເຊລົ້ມ
ຈົນວ່າໄປບໍ່ໄດ້

ຕອນທີ່ກຳໄມຄ໌
ຕັ່ງນວມຍໍຍ້າຍ
ລົງດິນຂາຊິຂິ່ນ
ເປັນໄຂ້ປ່ວຍໂຊ?

ຕາມທີ່ຮຽນຊອກຮູ້
ໃນສະພາມີຄົນ
ບໍ່ມີໃຜມາແກ້ງ
ບໍ່ຕ້ອງກົວຢ່ອນຢ້ານ

ນຳໝູ່ຊຸມສະຫາຍ
ທີ່ດີທັງນັ້ນ
ກວນກັນໄປທົ່ວ
ໃຜຍ້າຍຕັ່ງໜີ...ດອກນາ!



## ຫັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

❊ **ຊົມເຊີຍ****ຜົນສຳເລັດ**ກອງປະຊຸມສະໄໝສາມັນ **ເທື່ອທີ 6** ຂອງສະພາແຫ່ງຊາດ **ຊຸດທີ IX** ທີ່ໄດ້**ປິດ**ລົງໃນວັນທີ **31ຕຸລາ**ພາຍຫຼັງທີ່**ດຳເນີນມາເປັນເວລາຫຼາຍວັນ** ປວງປະຊາຊົນລ້ວນ ຄວຍຊົມທ່ານ ສສຊ ຍົກຍ່ອງເອົາຜົນງານ ຮ່ວມປະຊຸມຮັບຮອງໄດ້ ທັງແຜນການຄາດໝາຍໄວ້ ກຽມເຄື່ອນໄຫວເຜີຍແຜ່ ໃຫ້ພໍ່ແມ່ພີ່ນ້ອງລາວຮູ້ທົ່ວເຖິງ **ນັ້ນແລ້ວ!**

❊ **ຫຍັບ**ຈົ່ມເຂົ້າມາ **ບຸນພະທາດຫຼວງວຽງຈັນ** ປະຈຳປີ ເຊິ່ງໃນ**ວັນທີ 27 ນັ້ນ** ກົງກັບມື້**ເພັງ 15 ຄ່ຳ ເດືອນສິບສອງ** ຂໍເຊີນຊວນພີ່ນ້ອງ ໃນໃກ້ໄກກາ ກຽມໃຈເດີນທາງມາ ເທສະການຂອງຊາດ ຈູງເຫຼັນຫຼານມາຢ້ຽມ ສະເຫຼີມສະຫຼອງບຸນໃຫຍ່ ມາຈັບຈ່າຍເຄື່ອງໃຊ້ ບູຊາໄຫ້ວພະທາດຫຼວງ **ນັ້ນແລ້ວ!**

## ຊວນຍິ້ມ

# ແອ່ນຕຸ້ງ

### ການປຽບທຽບ

ໃນຊົ່ວໂມງຮຽນວິຊາພູມສາດ ສາວຄູຖາມນັກຮຽນວ່າ ທະວີບອາເມລິກາ ກັບດວງຈັນ ແມ່ນຫຍັງໄກກວ່າກັນ?

ທ້າວ ເອນ ຍົກມືຂຶ້ນແລ້ວຕອບວ່າ:

- ທະວີບອາເມລິກາໄກກວ່າ
- ເປັນຫຍັງຈຶ່ງວ່າແນວນັ້ນ?
- ເພາະວ່າເດືອນ ນ້ອງຫຼຽວເຫັນເກືອບທຸກຄືນ ແຕ່ທະວີບອາເມລິກາ ບໍ່ເຄີຍເຫັນຈັກເທື່ອ
- ???



## ຄະຕິເຕືອນໃຈ

#ດອກຫຍ້າ

ມີຄ່າເທົ່ານອດກຸ້ງ ສະດຸ້ງຈົນເຮືອນສັ່ນ






# ສັງເກດ-ຕີລາຄາ

"ສັງເກດ" ແລະ "ຕີລາຄາ" ເປັນສອງຄຳທີ່ມີຄວາມໝາຍສະເພາະຂອງໃຜມັນ ແຕ່ມີຄວາມກ່ຽວເນື່ອງກັນ ແລະມັກໃຊ້ຊ້ອນກັນດັ່ງນີ້:

"ສັງເກດ" ເປັນຄຳກິລິຍາຈາກເຄົ້າປາລີ-ສັນສະກິດ Saṅketa सङ्केत (ສັງເກຕະ) ໝາຍເຖິງ "ກຳນົດໄວ້, ໝາຍໄວ" ແລ້ວແປງສຽງເປັນຄຳລາວວ່າ "ສັງເກດ" ໝາຍເຖິງ ເບິ່ງແລະພິຈາລະນາໃຫ້ຄັກແນ່, ເບິ່ງຢ່າງລະອຽດ, ຕັ້ງໃຈເບິ່ງ, ເບິ່ງເພື່ອໃຫ້ຮູ້ວ່າເປັນແນວໃດ ມີອັນໃດແດ່ ຄາດກະດ້ວຍເຫດຜົນ" ເຊັ່ນ

- ພໍ່ຫາກໍສັງເກດວ່າມື້ນີ້ລູກຊາຍມີສີໜ້າວິຕົກກັງວົນ.

- ເປັນນັກຂຽນນັກປະພັນ ຕ້ອງເປັນຜູ້ທີ່ມັກສັງເກດເບິ່ງການເຄື່ອນໄຫວຂອງຜູ້ຄົນໃນສັງຄົມ.

- ອາຈານໃຫ້ຂໍ້ສັງເກດວ່າ ລາວເປັນນັກສຶກສາທີ່ມີຄວາມພະຍາຍາມສູງໃນການຄົ້ນຄວ້າຮໍ່າຮຽນ.

"ຕີລາຄາ" ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ "ຕີ" ໝາຍເຖິງ "ຟາດລົງ, ທຸບລົງ, ກຳນົດ" ແລະ "ລາຄາ" ໝາຍເຖິງ "ມູນຄ່າຂອງສິ່ງຂອງທີ່ຄິດເປັນເງິນ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ "ຕີລາຄາ" ກໍໝາຍເຖິງ "ກຳນົດຄ່າ, ປະມານລາຄາ" ເຊັ່ນ

- ລົດເກົ່າຂະໜາດນີ້ແລ້ວ ຕີລາຄາຄົງໄດ້ປະມານ 80 ລ້ານກີບ.

- ທະນາຄານຕີລາຄາເຮືອນຫຼັງນີ້ບໍ່ກາຍ 500 ລ້ານກີບ.

ພ້ອມກັນນັ້ນ,"ຕີລາຄາ" ຍັງໝາຍເຖິງ "ປະເມີນ, ຄາດຄະເນ, ໃຫ້ຄຸນຄ່າ" ເຊັ່ນ

- ຂັ້ນເທິງຕີລາຄາສະພາບການຂອງໂລກໃນປັດຈຸບັນໄດ້ຢ່າງຊັດເຈນ.

- ກຳມາທິການຍຸຕິທຳສະພາແຫ່ງຊາດ ຕີລາຄາການຮັບພິຈາລະນາຄຳຮ້ອງຂໍຄວາມເປັນທຳຈາກປະຊາຊົນ.

- ດວງເຮັງໄດ້ຮັບການຕີລາຄາຈາກສະມາຊິກພາຍໃນໜ່ວຍວ່າເປັນສະມາຊິກຊາວໜຸ່ມປະເພດແຂງຮອບດ້ານ.

ທັງສອງຄຳນີ້ ລາງເທື່ອກໍໃຊ້ຊ້ອນກັນເປັນ "ສັງເກດຕີລາຄາ" ເຊິ່ງກໍໄດ້ຄວາມໝາຍວ່າ "ເບິ່ງ ແລະ ພິຈາລະນາພ້ອມທັງປະເມີນຢ່າງລະອຽດ" ເຊັ່ນ

- ການປະຊຸມຄັ້ງນີ້, ໄດ້ພ້ອມກັນສັງເກດຕີລາຄາການຈັດຕັ້ງປະຕິບັດນະໂຍບາຍຕ່າງປະເທດ ຂອງພັກ-ລັດ ແລະ ການເຄື່ອນໄຫວການຕ່າງປະເທດຂອງ ສປປ ລາວ ໃນໄລຍະ 3 ປີຜ່ານມາ.

- ໃນກອງປະຊຸມ ສະມາຊິກແຕ່ລະຄົນໄດ້ສັງເກດຕີລາຄາຈຸດດີ-ຈຸດອ່ອນຂອງຕົນໃນໄລຍະຜ່ານມາ.




## ທ່ານ ສີ ຈິ້ນຜິງ ສະເໜີແຜນການສ້າງ 3 ທິດສະວັດຄຳແຫ່ງການພັດທະນາ ອາຊີ-ປາຊີຟິກ

ທ່ານ ສີ ຈິ້ນຜິງ ປະທານປະເທດຈີນ ໄດ້ໃຫ້ ຂໍ້ສະເໜີ 4 ຂໍ້ ໃນບົດປາຖະກະຖາຕໍ່ກັບບັນຫາທີ່ອົງການ APEC ຈະພັດທະນາ ໃນ 3 ທົດສະວັດຄຳໃນຕໍ່ໜ້າວ່າ: ຍຶດໝັ້ນຖືເອົາການປະດິດສ້າງເປັນແຮງຂັບເຄື່ອນ, ຍຶດໝັ້ນ ຖືເອົາການເປີດປະຕູສູ່ພາຍນອກເປັນທິດຊີ້ນຳ, ຍຶດໝັ້ນການພັດທະນາຕາມທິດສີຂຽວ, ຍຶດໝັ້ນການສ້າງຜົນປະໂຫຍດ ຢ່າງທົ່ວເຖິງ ແລະ ຊົມໃຊ້ຮ່ວມກັນ. ສ່ວນແນວຄິດທີ່ສອດຫ້ອຍຢູ່ຕະຫຼອດໃນ 4 ຂໍ້ສະເໜີດັ່ງກ່າວ ຍັງຄົງແມ່ນຍຶດໝັ້ນແນວຄິດການເປີດປະຕູສູ່ພາຍນອກ, ຮ່ວມມື ແລະ ຮ່ວມກັນສະແຫວງຫາການພັດທະນາ. ນີ້ແມ່ນພື້ນຖານແຜນການຂອງທ່ານ ສີ ຈິ້ນຜິງ ແລະ ແມ່ນຜົນສະຫຼຸບຈາກການພັດທະນາຂອງອາຊີ-ປາຊີຟິກ ໃນໄລຍະ 30 ປີຜ່ານມາ.




ທ່ານ ສີ ຈິ້ນຜິງ ໄດ້ກ່າວວ່າ: ການເປີດປະຕູສູ່ພາຍນອກຈະມີຄວາມຈະເລີນຮຸ່ງເຮືອງ, ການປິດປະຕູຈະຊຸດໂຊມລົງ, ນີ້ແມ່ນບົດຮຽນສຳຄັນຂອງ ສປ ຈີນ ໃນການບັນລຸການພັດທະນາຂອງຕົນ ກໍຄືການພັດທະນາກ້າວໄປຂ້າງໜ້າຂອງໂລກ. ຂະບວນວິວັດແຫ່ງການສ້າງຄວາມຈະເລີນຮຸ່ງເຮືອງຂອງອາຊີ-ປາຊີຟິກ ໄດ້ຢັ້ງຢືນ ໃຫ້ເຫັນແລ້ວວ່າ: ການບໍ່ຮ່ວມມືແມ່ນຄວາມສ່ຽງໃຫຍ່ທີ່ສຸດ. ແຕ່ການເປີດປະຕູສູ່ພາຍນອກ ຍັງຕ້ອງຄັດຄ້ານການກະທຳທີ່ບໍ່ຖືກຕ້ອງຈຳນວນໜຶ່ງທີ່ມີຢູ່ໃນປັດຈຸບັນ ເຊັ່ນ: ການຫັນບັນຫາເສດຖະກິດການຄ້າເປັນບັນຫາການເມືອງ, ເປັນອາວຸດ ແລະ ຂະຫຍາຍນິຍາມແບບທົ່ວໄປ. ໃນດ້ານການຊຸກຍູ້ການເປີດປະຕູສູ່ພາຍນອກ ແລະ ການພັດທະນາ, ສປ ຈີນ ບໍ່ພຽງແຕ່ເປັນຜູ້ຊຸກຍູ້ ສົ່ງເສີມເທົ່ານັ້ນ, ຍັງເປັນຜູ້ປະຕິບັດຕົວຈິງນຳອີກ. ເປັນຕົ້ນ ສປ ຈີນ ໄດ້ເປີດຕະຫຼາດພາຍໃນທີ່ມີປະຊາກອນ 1,4 ຕື້ຄົນ ອອກສູ່ສາກົນ ແລະ ໄດ້ວາງແຜນການ ແລະ ຊຸກຍູ້ງານວາງສະແດງສິນຄ້ານຳເຂົ້າສາກົນຈີນ ທີ່ຈັດຂຶ້ນທຸກປີໂດຍກົງ, ນີ້ແມ່ນງານວາງສະແດງລະດັບຊາດທຳອິດຢູ່ໃນໂລກທີ່ຖືເອົາການນຳເຂົ້າເປັນຫົວຂໍ້ຫຼັກ. ນອກນີ້, ໄດ້ສະເໜີຂໍ້ລິເລີ່ມການຮ່ວມກັນສ້າງ "ໜຶ່ງແລວ ໜຶ່ງເສັ້ນທາງ" ໂດຍໄດ້ຮັບຜົນສຳເລັດການຮ່ວມມືທີ່ອຸດົມສົມບູນ ແລະ ໄດ້ກາຍເປັນຜະລິດຕະພັນສາທາລະນະສາກົນທີ່ສ້າງຜົນປະໂຫຍດໃຫ້ກັບທົ່ວໂລກ ແລະ ຊ່ວຍຊຸກຍູ້ການພັດທານາຂອງປະເທດທີ່ມີສ່ວນຮ່ວມ. ໃນແຜນການຂອງທ່ານ ສີ ຈິ້ນຜິງ, ທາດແທ້ຂອງການຮ່ວມກັນສະແຫວງຫາການພັດທະນາແມ່ນການປະດິດສ້າງໃໝ່ ແລະ ສີຂຽວ, ເພິ່ນເຫັນວ່ານີ້ແມ່ນທ່າອ່ຽງການພັດທະນາຂອງເສດຖະກິດ ແລະ ວິທະຍາສາດເຕັກນິກຂອງໂລກໃນປັດຈຸບັນ ທັງແມ່ນວິທີແກ້ໄຂບັນຫາການຮ່ວມກັນສ້າງອາຊີ-ປາຊີຟິກທີ່ສະອາດ ແລະ ສວຍງາມ.

## ປີຜ່ານມາ ລະດັບແກັສເຮືອນແກ້ວສູງທີ່ສຸດເປັນປະຫວັດສາດ

ຕາມການລາຍງານຂ່າວເມື່ອບໍ່ດົນມານີ້ ໃຫ້ຮູ້ວ່າ: ອົງການສະຫະປະຊາຊາດ (UN) ໄດ້ເປີດເຜີຍບົດລາຍງານໂດຍລະບຸວ່າ: ຄວາມເຂັ້ມຂຸ້ນຂອງແກັສເຮືອນແກ້ວໃນຊັ້ນບັນຍາກາດຂອງໂລກຢູ່ໃນລະດັບສູງທີ່ສຸດເປັນປະຫວັດສາດໃນປີ 2022 ຜ່ານມາ ແລະ ມີທ່າອ່ຽງເພີ່ມຂຶ້ນຢ່າງຕໍ່ເນື່ອງແບບບໍ່ມີມື້ສິ້ນສຸດ.

ອົງກອນອຸຕຸນິຍົມວິທະຍາໂລກ (WMO) ກ່າວວ່າ: ລະດັບຂອງແກັສເຮືອນແກ້ວ 3 ຊະນິດ ໄດ້ແກ່ຄາບອນໄດອອກຊາຍ ທີ່ເຮັດໃຫ້ເກີດພາວະໂລກຮ້ອນ, ມີເທນ ແລະ ໄນຕຣັສອອກຊາຍ ລ້ວນແຕ່ທຳລາຍສະຖິຕິເດີມທັງໝົດເມື່ອປີຜ່ານມາ ສົ່ງຜົນໃຫ້ອຸນຫະພູມທົ່ວໂລກເພີ່ມຂຶ້ນ ເກີດສະພາບອາກາດສຸດຂົ້ວ ແລະ ເຮັດໃຫ້ລະດັບນ້ຳທະເລສູງຂຶ້ນ.



ທ່ານ ເພັດເຕີຣີ ທາລາສ ເລຂາທິການ WMO ກ່າວວ່າ: ເຖິງແມ່ນວ່າມີຄຳກ່າວເຕືອນມາຫຼາຍສິບປີຈາກນັກວິທະຍາສາດ ແຕ່ບົດລາຍງານຫຼາຍພັນໜ້າ ແລະ ກອງປະຊຸມສະພາບອາກາດຫຼາຍສິບຄັ້ງ ຊີ້ໃຫ້ເຫັນວ່າ: ພວກເຮົາຍັງຄົງມຸ່ງໜ້າໄປໃນທາງທີ່ຜິດ. ຕາມຂໍ້ຕົກລົງປາຣີສະບັບປີ 2015 ປະເທດຕ່າງໆ ເຫັນດີຮ່ວມກັນວ່າ ຈະຈຳກັດການເພີ່ມຂຶ້ນຂອງອຸນຫະພູມບໍ່ໃຫ້ເກີນ 2 ອົງສາ ລະດັບສະເລ່ຍລະຫວ່າງປີ 1850-1900 ແລະ ຈຳກັດໄວ້ທີ່ 1,5 ອົງສາ ຖ້າຫາກເປັນໄປໄດ້. ອີກຢ່າງໜຶ່ງ, ອຸນຫະພູມສະເລ່ຍທົ່ວໂລກໃນປີ 2022 ຢູ່ທີ່ 1,15 ອົງສາ ເຊິ່ງສູງກວ່າຄ່າສະເລ່ຍຂອງປີ 1850-1900.

ທ່ານ ເພັດເຕີຣີ ທາລາສ ກ່າວຕື່ມວ່າ: ລະດັບຄວາມເຂັ້ມຂຸ້ນຂອງແກັສເຮືອນແກ້ວໃນປັດຈຸບັນ ເຮັດໃຫ້ພວກເຮົາຢູ່ໃນທ່າອ່ຽງທີ່ອຸນຫະພູມຈະສູງກວ່າເປົ້າໝາຍໃນຂໍ້ຕົກລົງປາຣີພາຍໃນທ້າຍສະຕະວັດນີ້ ເຊິ່ງຈະມາພ້ອມກັບສະພາບອາກາດທີ່ຮຸນແຮງກວ່າເດີມ ບໍ່ວ່າຈະເປັນອາກາດຮ້ອນແຮງ, ຝົນຕົກໜັກ, ການລະລາຍຂອງນ້ຳກ້ອນ, ການເພີ່ມຂຶ້ນຂອງລະດັບນ້ຳທະເລ, ຕະຫຼອດຈົນຮອດຄວາມຮ້ອນ ແລະ ຄວາມເປັນກົດໃນມະຫາສະໝຸດ. ໃນປີ 2022 ຄວາມເຂັ້ມຂອງແກັສຄາບອນໄດອອກຊາຍຢູ່ທີ່ 418 ສ່ວນໃນລ້ານສ່ວນ, ຂະນະທີ່ມີເທນຢູ່ທີ່ 1.923 ສ່ວນໃນພັນລ້ານສ່ວນ ແລະ ໄນຕຣັສອອກຊາຍ ຢູ່ທີ່ 336 ສ່ວນໃນພັນລ້ານສ່ວນ ຫຼື ຄິດເປັນ 150%, 264% ແລະ 124% ຂອງລະດັບກ່ອນຍຸກອຸດສາຫະກຳຕາມລຳດັບ.

ເຖິງແມ່ນວ່ານັກວິທະຍາສາດມີຄວາມເຂົ້າໃຈໃນອົງກວ້າງກ່ຽວກັບການປ່ຽນແປງສະພາບອາກາດ ແລະ ຜົນກະທົບ ແຕ່ມັນກໍຍັງມີຄວາມບໍ່ແນ່ນອນບາງປະການກ່ຽວກັບວັດທະຈັກຂອງຄາບອນ ເຊິ່ງ WMO ຮຽກຮ້ອງໃຫ້ມີການຮວບຮວມຂໍ້ມູນເພີ່ມເຕີມໃນບາງບັນຫາ ເຊັ່ນ ການປ່ອຍແກັສຄາບອນຈາກດິນທີ່ເພີ່ມຂຶ້ນ ຫຼື ການດູດຊັບຄາບອນຂອງມະຫາສະໝຸດທີ່ຫຼຸດລົງ ເນື່ອງຈາກການປ່ຽນແປງສະພາບອາກາດ.

## ຄະນະກຳມະການເລືອກຕັ້ງອິນໂດເນເຊຍ ຮັບຮອງຊື່ຜູ້ສະໝັກຮັບເລືອກຕັ້ງປະທານາທິບໍດີ ແລະ ຮອງປະທານາທິບໍດີ

ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ຄະນະກຳມະການເລືອກຕັ້ງແຫ່ງຊາດອິນໂດເນເຊຍ ຫຼື KPU ໄດ້ຈັດກອງປະຊຸມຄົບຄະນະ ໂດຍໄດ້ຕົກລົງຮັບຮອງຊື່ຜູ້ສະໝັກຮັບເລືອກຕັ້ງປະທານາທິບໍດີ ແລະ ຮອງປະທານາທິບໍດີ ທີ່ຈະເຂົ້າຮ່ວມການເລືອກຕັ້ງທົ່ວປະເທດໃນປີ 2024 ຢ່າງເປັນທາງການ.

ອິນໂດເນເຊຍ ຈັດການເລືອກຕັ້ງທົ່ວປະເທດ 5 ປີຕໍ່ຄັ້ງ ເພື່ອເລືອກຕັ້ງປະທານາທິບໍດີ, ຮອງປະທານາທິບໍດີ, ສະມາຊິກສອງລັດຖະສະພາ ແລະ ອື່ນໆ. ກ່ອນໜ້ານີ້, ທ່ານ ໂຈໂກ ວິໂດໂດ ປະທານາທິບໍດີອິນໂດເນເຊຍ ຢືນຢັນວ່າ: ການເລືອກຕັ້ງທົ່ວປະເທດປີ 2024 ຈະຈັດຂຶ້ນຕາມເວລາກຳນົດ; ມາໃນວັນທີ 19 ຕຸລາຜ່ານມານີ້, ຄະນະກຳມະການເລືອກຕັ້ງອິນໂດເນເຊຍເລີ່ມຈົດທະບຽນໃຫ້ຜູ້ສະໝັກຮັບເລືອກຕັ້ງປະທານາທິບໍດີ ແລະ ຮອງປະທານາທິບໍດີ, ວຽກງານນີ້ ໄດ້ສິ້ນສຸດລົງໃນວັນທີ 25 ຕຸລາຜ່ານມາ ໂດຍໃນວັນທີ 28 ພະຈິກ 2023-10 ກຸມພາ 2024 ຈະເປັນໄລຍະການຫາສຽງເລືອກຕັ້ງ.

# ເລື່ອງປອດຫົວກ່ຽວກັບການພະນັນ ແລະ ບັນຫາປ້າຍໂຄສະນາ

❖ ວິເສດ ສະແຫວງສຶກສາ

ໃນຊຸມປີຫຼັງໆ ມານີ້ ຢູ່ຫຼາຍປະເທດໄດ້ມີຂໍ້ສະເໜີທີ່ເປັນເອກະພາບກັນວ່າ ແຫຼ່ງການພະນັນບໍ່ວ່າຈະຖືກ ຫຼື ຜິດກົດໝາຍນັ້ນ ມັກຈະກາຍເປັນສະຖານມົ້ວສຸມຂອງ ບັນດານັກຕົ້ມຕຸ໋ນ ທີ່ໂກງຊັບຄົນອື່ນ ຜ່ານທາງລະບົບຄົມມະນາຄົມ ຫຼື ເວົ້າໃຫ້ສັ້ນໆເຂົ້າກໍ່ຄືຜ່ານລະບົບສື່ສັງຄົມອອນລາຍຫັ້ນລະ. ບັນດານັກຕຸ້ມຕຸ໋ນ ກໍ່ຄືກຸ່ມ ອາຊະຍາກອນທາງອິນເຕີເນັດ ມັກຈະເອົາສະຖານທີ່ຫຼິ້ນການພະນັນເປັນບ່ອນອີງ ຫຼື ເປັນສາກບັງໜ້າ. ເລື່ອງນີ້ໄດ້ມີຕົວຢ່າງມາແລ້ວ ຢູ່ ກຳປູເຈຍ ເມື່ອເດືອນ 4 ປີຜ່ານມາ. ອີງຕາມຂ່າວ ໜັງສືພິມ ພະນົມເປັນຜົດ, ໜັງສືພິມ Vientiane Time ສະບັບວັນທີ 21 ສິງຫາ 2019 ໄດ້ໃຫ້ຮູ້ວ່າທາງການ ກຳປູເຈຍ ໄດ້ອອກຄຳສັ່ງຫ້າມອອກໃບອະນຸຍາດ ໃຫ້ແກ່ ທຸລະກິດ ການພະນັນອີກຕໍ່ໄປ, ສຳລັບສ່ວນທີ່ໄດ້ຮັບອະນຸຍາດແລ້ວນັ້ນ, ເມື່ອໝົດກຳນົດກໍ່ຈະບໍ່ມີການຕໍ່ອາຍຸຕື່ມ, ຂ່າວບອກວ່າ ເປົ້າໝາຍຕົ້ນຕໍຂອງຄຳສັ່ງທີ່ເຊັນໂດຍ ທ່ານນາຍົກລັດຖະມົນຕີ ຮຸນເຊນ ໃນເວລານັ້ນມີເປົ້າໝາຍເພື່ອກຳຈັດຂະບວນການຕົ້ມຕຸ໋ນ ສໍ້ໂກງຊັບ ຜ່ານລະບົບຄົມມະນາຄົມຂ້າມຊາດ. ເນື້ອໃນຄຳສັ່ງນີ້ໄດ້ຊີ້ອອກວ່າ ທຸລະກິດດ້ານການພະນັນນີ້ ໄດ້ກາຍເປັນຊະນວນໃຫ້ກຸ່ມ ອາຊະຍາກອນຕ່າງປະເທດມີພື້ນທີ່ອາໃສ ຢູ່ ກຳປູເຈຍ ເພື່ອດຳເນີນການຕົ້ມຕຸ໋ນຫຼອກຫຼວງ, ໂກງຊັບທາງອອນລາຍ ໂດຍໃຊ້ແຫຼ່ງການພະນັນເປັນສາກບັງໜ້າ. ແຫຼ່ງການພະນັນໃນກຳປູເຈຍ ເວລານັ້ນມີທັງໃນຮູບອອນລາຍ ແລະການຫຼິ້ນການພະນັນ ແບບສົດໆ. ໃນນັ້ນແຫຼ່ງການພະນັນທີ່ຜິດກົດໝາຍຈຳນວນໜຶ່ງ ໄດ້ເຄື່ອນໄຫວໂກງຊັບ ຄົນຢູ່ຕ່າງປະເທດ ກໍຄືເຫຍື່ອທີ່ເປັນຄົນກຳປູເຈຍ ເອງ. ຊຶ່ງໄດ້ສົ່ງຜົນກະທົບຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ. ຄຳສັ່ງຫ້າມຍັງໄດ້ຮຽກຮ້ອງໃຫ້ເຈົ້າໜ້າທີ່ຕຳຫຼວດ ແລະ ສາລະວັດທະຫານ ປະຕິບັດການເລີກຮື້ ສະຖານທີ່ການພະນັນເຖື່ອນທັງໝົດ. ຂ່າວໃຫ້ຮູ້ຕື່ມວ່າ ກ່ອນໜ້າມີຄຳສັ່ງຫ້າມດັ່ງກ່າວນັ້ນ ກໍໄດ້ມີບັ້ນກວດລ້າງ ຂະບວນການຕົ້ມຕຸ໋ນ ໂກງຊັບທາງອິນເຕີເນັດ ໂດຍໄດ້ຈັບກຸມ ແລະ ເນລະເທດຄົນສັນຊາດຈີນ ຈຳນວນ 128 ຄົນ ທີ່ມີຄວາມຜິດ. ທ່ານ ໃຈກິມເຄືອນ, ໂຄສົກກອງບັນຊາການ ຕຳຫຼວດແຫ່ງຊາດໃນເວລານັ້ນ ໄດ້ຖະແຫລງກ່ຽວກັບການຈັບກຸມໃນຄັ້ງນັ້ນວ່າ ການຫຼິ້ນການພະນັນຢູ່ຈີນນັ້ນເປັນເລື່ອງຜິດກົດໝາຍ, ດັ່ງນັ້ນ ພວກອາຊະຍາກອນເຫຼົ່ານີ້ ກໍ່ເລີຍສວຍໂອກາດເຂົ້າມາເຄື່ອນໄຫວຢູ່ກຳປູເຈຍ, ບ່ອນທີ່ການຫຼິ້ນເກມອອນລາຍ ຍັງເປັນເລື່ອງຖືກກົດໝາຍຢູ່- ພວກເຂົາເອົາ ກຳປູເຈຍ ເປັນແຫຼ່ງຫາກິນ ດ້ວຍການຫຼອກຫຼວງ ໂກງຊັບ ທັງເຫຍື່ອຢູ່ພາຍໃນ ແລະ ຢູ່ນອກປະເທດ.

ອີກຂ່າວໜຶ່ງທີ່ເກີດຂຶ້ນໃນໄລຍະດຽວ ແລະເປັນເລື່ອງຮ້ອນແຮງໃນ ກຳປູເຈຍ ກໍ່ຄືຂ່າວ ກັບການຫ້າມນຳໃຊ້ ຄຳສັບພາສາທີ່ແປ ໂດຍ ກູເກີນ (Google) ເປັນເນື້ອໃນປ້າຍ ໃນຂະແໜງການພັດທະນາ ອະສັງຫາລິມະຊັບ (ໂຄງການສ້າງຕຶກ, ສຳນັກງານ, ທີ່ຢູ່ອາໄສ) ຍ້ອນເຫັນເປັນການແປທີ່ຜິດພາດບໍ່ໄດ້ຄຸນນະພາບ ແລະ ສ້າງຄວາມສັບສົນ. ນອກຈາກສັ່ງຫ້າມໃຊ້ບໍລິການແປ ໂດຍ ກູເກີນ ແລ້ວ ທາງການ ກຳປູເຈຍ ຍັງແນະນຳໃຫ້( ບັນດາ) ນັກລົງທຶນທີ່ເປັນເຈົ້າຂອງໂຄງການ ປຶກສາຫາລືກັບເຫຼົ່າ ນັກວິຊາການ ກ່ອນຈະເຮັດປ້າຍ ກໍ່ຄືເຄື່ອງໝາຍການຄ້າ ທັງນີ້ກໍ່ເພື່ອຫຼີກລ່ຽງຄວາມຜິດພາດໃນການ ໃຊ້ພາສາຂະແມ.

ກອງປະຊຸມສະເພາະກິດ ກ່ຽວກັບບັນຫາໄດ້ຈັດຂຶ້ນໂດຍ ມີການເຂົ້າຮ່ວມຂອງ ຕົວແທນ ຈາກກະຊວງຕ່າງໆ ທີ່ກ່ຽວຂ້ອງໄດ້ມີຄຳເຫັນວ່າ ປ້າຍທີ່ຂຽນ ພາສາຂະແມ ຜິດພາດ ຄາດເຄື່ອນ ບໍ່ຕົງກັບຄວາມໝາຍນັ້ນ. ນອກຈາກຈະເບິ່ງບາດຕາສຳລັບຜູ້ພົບເຫັນແລ້ວ ມັນຍັງສົ່ງຜົນກະທົບຕໍ່ວັດທະນະທຳ ແລະ ຮີດຄອງປະເພນີຂອງຊາດອີກດ້ວຍ. ເຫດຜົນໜຶ່ງທີ່ພາໃຫ້ການແປຜິດພາດແມ່ນຍ້ອນວ່າ, ຜູ້ລົງທຶນຕ່າງປະເທດບໍ່ຮູ້ບ່ອນພົວພັນ, ບ່ອນຜ່ານເນື້ອໃນດັ່ງນັ້ນຈຶ່ງໄດ້ອາໄສ ກູເກີນ ແປເປັນຕົ້ນຕໍ ແລະ ກໍ່ມີນັກລົງທຶນຈາກບາງປະເທດ ໄດ້ເຮັດປ້າຍແບບສຳເລັດຮູບ ມາແຕ່ປະເທດຂອງພວກຕົນ ເພື່ອເອົາມາຕິດຕັ້ງໂດຍກົງ ໃນຄຳສັ່ງຫ້າມໄດ້ມີຂໍ້ຮຽກຮ້ອງ ໃຫ້ຈັດວາງເນື້ອໃນ ຢູ່ປ້າຍດັ່ງນີ້: ຕ້ອງຂຽນ ພາສາຂະແມໄວ້ດ້ານເທິງຢູ່ສະເໝີ; ຢູ່ລາວພວກເຮົາກໍ່ຄວນເບິ່ງຄືນ ການເຄື່ອນໄຫວຂອງສະຖານທີ່ຫຼິ້ນການພະນັນ, ການຫຼິ້ນຫວຍ ທັງຖືກທັງເຖື່ອນ. ສ່ວນເລື່ອງເນື້ອໃນປ້າຍໂຄສະນາ, ປ້າຍຊື່ຮ້ານອາຫານ, ຫ້າງຮ້ານກໍ່ຄື ບໍລິສັດ ຕ່າງໆ ນັ້ນ ເມື່ອເຫັນວ່າຜິດພາດ ກໍ່ຄວນມີມາດຕະການແກ້ໄຂໃຫ້ເດັດຂາດກວ່າເກົ່າ.

## ຖະແຫຼງ...

(ຕໍ່ຈາກໜ້າ 1)

ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝຮອດປີ 2025, ການຈັດຕັ້ງປະຕິບັດ ປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024 ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາ ຕາມຜົນການກວດສອບ ປີ 2021;

7) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022;

8) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສານປະຊາຊົນສູງສຸດ;

9) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງອົງການໄອຍະການປະຊາຊົນສູງສຸດ;

10) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສະພາແຫ່ງຊາດ;

11) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍ ຈຳນວນ 7 ສະບັບ.

ຮ່າງກົດໝາຍສ້າງໃໝ່ 1 ສະບັບ

(1) ຮ່າງກົດໝາຍວ່າດ້ວຍ ການຮັກສາສຸຂະພາບຂັ້ນຕົ້ນ.

ກົດໝາຍປັບປຸງ 6 ສະບັບ

(1) ກົດໝາຍວ່າດ້ວຍການປິ່ນປົວ;

(2) ກົດໝາຍວ່າດ້ວຍຊັບສິນທາງປັນຍາ;

(3) ກົດໝາຍວ່າດ້ວຍການບັນຊີ;

(4) ກົດໝາຍວ່າດ້ວຍລະບົບການຊຳລະ;

(5) ກົດໝາຍວ່າດ້ວຍຜູ້ພິພາກສາ;

(6) ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ໃນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ນີ້ ສະ ພາແຫ່ງຊາດໄດ້ສະເໜີໃຫ້ 20 ພາກສ່ວນ ຂຶ້ນຊີ້ແຈງຕໍ່ຄຳຊັກຖາມ ກ່ຽວກັບບັນຫາທີ່ພົ້ນເດັ່ນຂອງສັງຄົມ ເຊິ່ງສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ ໄດ້ຍົກຂຶ້ນຢູ່ໃນກອງປະຊຸມປະກອບມີ ທ່ານນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ກະຊວງແຜນການແລະການລົງທຶນ,ກະຊວງການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ທະນາຄານ ແຫ່ງ ສປປ ລາວ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອຸດສາຫະກຳ-ການຄ້າ, ກະຊວງກະສິກຳແລະປ່າໄມ້, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ກະຊວງຍຸຕິທຳ, ກະຊວງສາທາລະນະສຸກ, ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ.

ໂດຍປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກໍຄືມະຕິຂອງຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຈັດຕັ້ງການປະເມີນ ດ້ວຍການໃຫ້ຄະແນນຄວາມໄວ້ວາງໃຈ ໃນການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ເຊິ່ງມີເປົ້າໝາຍທັງໝົດ 67 ທ່ານ, ຍິງ 13 ທ່ານ. ຜ່ານການປະເມີນໃຫ້ຄະແນນຄວາມໄວ້ວາງໃຈຈາກສະມາຊິກສະພາແຫ່ງຊາດ ບັນດາເປົ້າໝາຍຖືກປະເມີນ ລ້ວນແຕ່ໄດ້ຄະແນນໃນລະດັບດີ ເຊິ່ງໄດ້ຮັບຄະແນນ 8 ຈຳນວນ 27 ທ່ານ ກວມເອົາ 40,3%, ໄດ້ຮັບຄະແນນ 7 ຈຳນວນ 39 ທ່ານ ກວມເອົາ 58,2% ແລະ ໄດ້ຮັບຄະແນນ 6 ຈຳນວນ 1 ທ່ານ ກວມເອົາ 1,5% ຂອງຜູ້ຖືກປະເມີນທັງໝົດ.

ຄຽງຄູ່ກັບການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນດັ່ງກ່າວມາຂ້າງເທິງນັ້ນ, ໃນໄລຍະດຳເນີນກອງສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ມີປະຊາຊົນບັນດາເຜົ່າສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ (156) ຫຼາຍກວ່າ 593 ສາຍ 425 ເລື່ອງ ເຊິ່ງພົວພັນເຖິງການພັດທະນາເສດຖະກິດ-ສັງຄົມ, ການຄຸ້ມຄອງບໍລິຫານລັດ, ການພັດທະນາທີ່ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ຕໍ່ກັບຄຳຄິດເຫັນຂອງປະຊາຊົນທີ່ສົ່ງມາທາງໂທລະສັບສາຍດ່ວນດັ່ງກ່າວ ກອງເລຂາກອງປະຊຸມຈະໄດ້ສັງລວມ ແລະ ມອບໃຫ້ກຳມາທິການທີ່ກ່ຽວຂ້ອງ ເພື່ອປະສານສົມທົບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

ທະນາຄານພັດທະນາລາວ
LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ບໍລິສັດ ກຸ່ມດວງຈະເລີນ ພັດທະນາກໍ່ສ້າງ ຈຳກັດຜູ້ດຽວ
DDC Group Sole Co.,Ltd
Douang Chaleurn Development Construction Group Sole Co.,Ltd

**ຜູ້ຊີ້ນຳ :** ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :** ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ; ທ່ານ ທອງດາ ສຸພາສິດ; ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :** ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ; ທ່ານ ອິນທະວີ ວົງພະຈັນ ຮອງ; ທ່ານ ເປຄຳ ລໍຄຳສອນ ຮອງ

**ກອງບັນນາທິການ :** ນາງ ກົງໃຈ ແສງອຳພັນ; ນາງ ສຸພາວັນ ຫອມສະນິດ; ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :** ນາງ ນິດຕາ ຄຸນປາກດີ